ນິທານ

ນາງຕັນໄຕ

໑

ບັນທະປະກອນ

ຂອງ

ກົມວັນນະຄະດີ

ມະຫາສິລາ ວີຣະວົງສ໌

ຜູ່ຣິຈນາ

ພິມເທື່ອທີນຶ່ງ ຈຳນວນ ໕໐໐ ສະບັບ

ວຽງຈັນ, ພ.ສ. ໒໕໐໐

ຄະນະກັມມະການວັນນະຄະດີ

--*******--

ພນະທ່ານ	ກຸ ອະໄພ	ປະທານກັມມະການກິດຕິມະສັກ
ພນະທ່ານ	ຜຸຍ ປັນຍາ	ຮອງປະທານ "
ທ່ານ	ສິນຈິນ ປີແອງິນ	ປະທານກັມມະການຈັດການ
ພນະທ່ານ	ບົງ ສຸວັນນະວົງ	ຮອງປະທານ "
ມະຫາ	ສີລາ ວີຣະວົງ	ເລຂານຸການ
ພນະທ່ານ	ຫຍຸຍ ອະໄພ	ກັມມະການ
ທ້າວ	ເກື່ອງ ປະທຸມຊາດ	"
ພຍາ	ຄູນ ສີລາວັນ	"
ທ້າວ	ນູຫົງ ທິມມະສອນ	"
ທ້າວ	ນູຫັກ ສີດທິນໍທະດາ	"
ທ້າວ	ເກນ	"
ມະຫາ	ນູສີ ຈິດພົງ	"

----*************----

ຄຳຊີ້ແຈ່ງຂອງຜູ້ຣຈນາ

ໜັງສືນິທານ ເຣື່ອງນາງຕັນໄຕນີ້ ແຕ່ເດີມຮຽກວ່າ ຄັມພີປັນຈະຕັນຕະ ຫລື ປັນຈະຕັນໄຕ ແປວ່າ ໜັງສື ໕ ຜູກ ແຕ່ທຸກວັນນີ້ເຫັນມີຢູ່ພຽງ ໔ ເຣື່ອງ ທີ່ນັ້ນ ຄື: ໑. ນັນທະປະກອນ (ເຣື່ອງງົວນັນທະກະ ກັບ ຣາຊສີເປັນສ່ຽວ ກັນ) ໒. ສະກຸນາປະກອນ (ເຣື່ອງນົກເລືອກນາຍ) ໓. ມັນທຸກະປະກອນ (ເຣື່ອງກົບ ກັບ ງູ ເປັນສ່ຽວກັນ) ໔. ປີສາຈະປະກອນ (ເຣື່ອງຜີເລືອກນາຍ).

ຄຳອາຣິບເບື້ອງຕົ້ນໃນປະກອນທີ ໒ ຄື ສະກຸນາປະກອນ ບອກວ່າ ໜັງສືປັນຈະຕັນຕະນີ້ ແມ່ນວັດສີຊີ່ ອະຕີທາສະກະ ເປັນຜູ້ຣຈນາຂຶ້ນໃນປະເທດ ອິນເດັຽ ໂດຍຮຽບຮຽງເປັນພາສາສັນສະກຣິດ ແຕ່ໃນຣະຫວ່າງ ພ.ສ. ໑໒໐໐ ຕໍ່ມາໃນລະຫວ່າງ ພ.ສ. ໑໔໐໐ ຈຶ່ງມີຜູ້ແປເປັນພາສາອາຣັບ, ພາສາຫິບຣູ, ພາສາເກຣັກ, ແລະ ພາສາລາແຕງ ຕໍ່ໆມາ ຈົນເຖິງລະຫວ່າງ ພ.ສ. ໒໑໐໐ ຈຶ່ງມີຜູ້ແປເປັນພາສາເຢັຣະມັນ ແລ້ວແຜ່ຫລາຍອອກເປັນພາສາຊາວຢູໂຣບເກືອບ ທຸກປະເທດທີ່ຈະເຣີນ ແຕ່ສະບັບທີ່ແປເປັນພາສາອັງກຣິດ ຜູ້ແປໄດ້ຕັ້ງຊື່ໜັງສື ໃຫ້ວ່າ Pilpay's fable (ນິທານຂອງປີລເປ) ສ່ວນສະບັບເປັນພາ ສາໄທໃຫ້ຊື່ວ່າ ຫິໂຕປະເທດ (ຂໍ້ອ້າງທີ່ເປັນປໂຍດ). ຫິໂຕປະເທດສະບັບ ຂອງໄທນັ້ນ ແບ່ງອອກເປັນ ໔ ພາກ ຄື: ໑. ມິຕຣະລາພ (ການຫາສ່ຽວ) ໒. ສຸຫະຣິທເພທ (ການແຕກມິດ) ໓. ສັງຄາມະ (ການສົງຄາມ) ໔. ສັນຕິ (ສງົບສົງຄາມ).

ສະບັບທີ່ແປເປັນພາສາລາວນີ້ ແຕ່ເດີມແມ່ນ ສົມເດັດພຣະສັງຄະຣາຊາ ວິຊຸລມະຫາວິຫາຣາທິປະຕີສີສັຕນາຄະນະຫຸດ ເຈົ້າວັດວິຊຸລມະຫາວິຫານ ເປັນ ຜູ້ແປອອກຈາກພາສາປາລີ ໃນລະຫວ່າງ ພ.ສ. ໒໐໔໐ ອັນເປັນສໄມຂອງ

ພຣະເຈົ້າວິສຸລຣາດ ສະບັບພາສາປາລີ ຖ່າຍຖອດມາຈາກພາສາສັນສະກຣິດໂດຍ ພຣະພິກຂຸຊາວລັງກາ ເປັນຜູ້ແປ ແລ້ວໄດ້ແຜ່ຂາຍເຂົ້າມາໃນປະເທດພະມ້າ, ລາວ, ແລະ ໄທ ຕື່ງມາ ສະບັບແປຂອງສົມເດັດພຣະສັງຄະຣາຊາວິສຸລມະຫາ ວິຫານ ນີ້ ບ່ອນເປັນພາສິດ ເພິ່ນໄດ້ເອົາສໂລກຄາຖາປາລີໃສ່ໄວ້ນຳ ແຕ່ຂ້າພະ ເຈົ້າໄດ້ຕັດຄຳປາລີນັ້ນອອກເສັຽ ເຫລືອໄວ້ແຕ່ຄຳແປເປັນພາສາລາວລ້ວນໆເພື່ອ ໃຫ້ອ່ານເຂົ້າໃຈງ່າຍ ສ່ວນບົດພາສິດທີ່ເປັນຄຳໂຄງນັ້ນ ໄດ້ຮັກສາໄວ້ຕາມສຳ ນວນເດີມ.

ເນື່ອງຈາກນິທານ ນາງຕັນໄຕ ຫລື ໜັງສືປັນຈະຕັນໄຕ ນີ້ ເປັນນິທານ ສຸພາສິດທີ່ຈັບໃຈຫລາຍ ຈຶ່ງມີນັກປາດເກືອບທຸກປະເທດໃນໂລກ ແປອອກເປັນພາ ສາຂອງຕົນດັ່ງກ່າວແລ້ວ ໃນລະຫວ່າງແປນັ້ນ ຜູ້ແປໄດ້ຕໍ່ຕັດແປງແຕ່ງຕື່ມອີກ ເປັນອັນມາກ ທັງໄດ້ຕັ້ງຊື່ຂຶ້ນໃໝ່ໄປກໍມີ ເຖິງດັ່ງນັ້ນ ຂໍ້ຄວາມທັງຫລາຍ ກໍຍັງຄ້າຍ ຄືເປັນອັນນຶ່ງອັນດຽວກັນຢູ່.

ໜັງສືນິທານ ນາງຕັນໄຕ ທີ່ທ່ານກຳລັງອ່ານຢູ່ນີ້ ຂ້າພະເຈົ້າໄດ້ຮຽບຮຽງ ຂຶ້ນຈາກສະບັບພາສາລາວ ທີ່ສົມເດັດພຣະສັງຄະຣາຊາວິສຸລມະຫາວິຫາຣາທິປະຕີ ແປໄວ້ ແລະ ໄດ້ຈັດແບ່ງເປັນ ໔ ຫລັ້ມຕາມສະບັບເດີມ ແຕ່ຕົ້ນເຣື່ອງໃນຫລັ້ມ ໑ ຄື ນັນທະປະກອນນີ້ ຣິຈນາເອົາຕາມເຄົ້າເຣື່ອງຂອງນິທານອາຫລັບຣາຕີ ເພາະເຄົ້າເຣື່ອງໃນນັນທະປະກອນບໍ່ສູ້ສົມເຫດສົມຜົນປະມານ ແຕ່ຫາກມີເຄົ້າຄ້າຍ ຄືກັນກັບຕົ້ນເຣື່ອງອາຫລັບຣາຕີຢູ່ ຈຶ່ງໄດ້ຕົກລົງຣິຈນາເອົາຕາມນັ້ນ.

ນິທານ ນາງຕັນໄຕ ເປັນນິທານສຸພາສິດທີ່ດີເລີດ ມີຂໍ້ຄວາມປຽບທຽບ ສົມເຫດສົມຜົນຖືກຕ້ອງແທ້ ຟັງໄດ້ທຸກກາລະສະໄໝ ເພາະສົມເປັນຄະຕິເຕືອນໃຈຂອງ ຄົນທຸກຊັ້ນ ແລະ ທຸກຊາດ ທຸກພາສາ ນັບວ່າເປັນຢາສັນວິເສດ ສຳຫລັບແກ້ພຍາດ

ທາງຈິດໃຈຢ່າງປະເສີດ ພາໃຫ້ເກີດຜົນ ເປັນຄວາມສຸກແກ່ຜູ້ຖືເອົາເປັນຄະຕິ
ທື່ອໄປ.

ມະຫາ ສີລາ ວີຣະວົງ

ພຣະນະຄອນວຽງຈັນ

ວັນທີ ໑ ມະກະຣາ ພ.ສ. ໒໕໐໐

ນິທານ ນາງຕັນໄຕ

ບັນທະປະກອນ

ເລື່ອງ ວິວັນທະກະກັບຣາຊສີ

ມູນເຫດເບື້ອງຕົ້ນ

ແຕ່ປາງກ່ອນ ຍັງມີນະຄອນນຶ່ງ ຊື່ ອຸໄທຍະນະນະຫານະຄອນ ບໍຣິບູນໄປດ້ວຍສົມບັດພັດສະດານທຸກຢ່າງປານດັ່ງທິພສົມບັດໃນເມືອງຟ້າ, ພຣະມະຫາກະສັດທົງພຣະນາມວ່າ ວິມະລະຈັກກະພັດຕິຣາດ ສເວີຍຣາຊສົມບັດຢູ່ໃນນະຄອນນັ້ນ ພຣະອົງທະຣົງເດຊານຸພາບສູງສຸດ ມີອານາເຂດແຜ່ກວ້າງໄພສານໄປເກືອບທົ່ວຊົມພູທີບ ບ້ານເມືອງຂອງພຣະອົງໃນສໄມນັ້ນ ຈະເຣີນຍິ່ງໜັກໜາ ອານາປະຊາຣາສດອນຢູ່ເຢັນເປັນສຸກ ປາສຈາກຂ້າເສິກສັດຕູມາຮາວີ ພຣະຍາວິມະລະ ມີພຣະອະນຸຊາ (໑) ຢູ່ອົງນຶ່ງ ນາມວ່າ ວິຣະເສນ ເປັນທີ່ສເນຫາຮັກແພງຂອງພຣະອົງຍິ່ງນັກ ພຣະອົງຈຶ່ງທົງຕັ້ງ ທ້າວ ວິຣະເສນ ນັ້ນ ໃຫ້ໄປສເວີຍຣາຊສົມບັດຢູ່ໃນນະຄອນນຶ່ງ ອັນໄກຈາກອຸໄທຍະນະນະຫານະຄອນ ຯ ຢູ່ມາຫລາຍປີ ພຣະຍາວິມະລະ ມີຄວາມຄິດຮອດພຣະອະນຸຊາ ຈຶ່ງແຕ່ງອາມາດເປັນຣາຊທູດໄປເຊີນໃຫ້ມາຢາມ ທ້າວ ວິຣະເສນ ໄດ້ຊາບດັ່ງນັ້ນ ກໍດີພຣະໄທຈຶ່ງຄຶກແຕ່ງກະບວນທັບຍົກອອກຈາກພຣະນະຄອນ ມາຕັ້ງຕາມໄຊພັກເຊົາຢູ່ນອກພຣະຣາຊວັງ ໃກ້ກັບຕານໄຊຂອງຣາຊທູດ ເຖິງເວລາກາງຄືນເມື່ອສເວີຍໂພຊະນາຫານ ແລະ ສົນທະນາຢູ່ກັບຣາຊທູດຂອງພຣະເຊດຖາ (໒) ພໍສົມຄວນແລ້ວ ພຣະອົງກໍສະເດັດກັບຄືນເຂົ້າໄປໃນພຣະຣາຊວັງແຕ່ຜູ້ດຽວ ເພື່ອລາພຣະ

---

(໑) ພຣະອະນຸຊາ ແມ່ນນ້ອງຊາຍ (໒) ພຣະເຊດຖາ ແມ່ນພີ່ຊາຍ

ເຫດການທີ່ເຫັນເປັນມາຕໍ່ໜ້າດັ່ງນີ້ ພາໃຫ້ ທ້າວ ວິຣະເສນ ໄດ້ສະຕິ
ແລະ ຄຶດຮ່ຳເພິງຢູ່ໃນພຣະໄທວ່າ: "ອື! ໜ້າໜ່າຍແທ້ ທີ່ກູມານິວຄຶດເປັນທຸກວ່າ
ກູເປັນຄົນມີເຄາະຮ້າຍແຕ່ຜູ້ດຽວ ທຸກກອງນີ້, ທຸກແບບນີ້, ຕ້ອງເປັນສິ່ງທີ່ໜັກອົກ
ຂອງຜູ່ຊາຍທຸ່ເປັນສາມີທົ່ວໄປເປັນຄັກແນ່ ເບິ່ງດູ! ພຣະມະຫາກະສັດອົງເປັນພີ່
ຊາຍຂອງກູ ເຊິ່ງເປັນໃຫຍ່ຍິ່ງແກ່ປະເທດສະຣາດທັງຫລາຍ ກໍຍັງບໍ່ພົ້ນໄປໄດ້
ຊາຕງ້າງໄກ້ບດີດກູຫມື່ອຳນາດນ້ອຍຈະຫ້າມບໍ່ໃຫ້ເນັ່ງນອກໃຈໄດ້ ສະນັ້ນ ກູຈະມາ
ເປັນທຸກດ້ວຍເຣື່ອງນີ້ບໍ່ໃຊ່ການ ເຊົາທຸກສັ່ງເຖີດ ເຊົາໆ! ຕໍ່ແຕ່ນີ້ໄປຕົວກູຈະ
ຣະວັງ ບໍ່ໃຫ້ເຣື່ອງດັ່ງນີ້ມາກວນໃຈອີກ" ຮ່ຳເພິງດັ່ງນີ້ແລ້ວກໍມີພຣະໄທຊື່ນບານ
ຕັດສັ່ງໃຫ້ມະຫາດເລັກຍໍພານເວີຍມາໃຫ້ ອັນນັ້ນ ພຣະອົງສເວີຍໄດ້ຫລາຍ ແລະ
ຟັງສຽງດົນຕີກໍເປັນທີ່ອອນຊອນຍິ່ງນັກ ພຣະພັກ (໑) ກໍເບີກບານເໝືອນແຕ່ກ່ອນ.

ພໍໄດ້ຊາບຂ່າວວ່າ ພຣະເຊດຖາສະເດັດກັບຈາກການເຊີດເບື້ອນມາເຖິງ
ແລ້ວ ກໍສະເດັດໄປເຝົ້າ ພຣະເຊດຖາ ບໍ່ທັນໄດ້ສັງເກດເຫັນອາການປ່ຽນແປງ
ຂອງພຣະອະນຸຊາ ກໍຕັດປາໄສວ່າ ໂຮ! ນ່ອນຫລາຍ ແຕ່ສັງດາຍທີ່ນ້ອງບໍ່ໄດ້
ໄປນ່ອນນຳ ຝ່າຍພຣະອະນຸຊາໄດ້ຟັງ ກໍປາໄສນຳດ້ວຍຄວາມສນຸກສນານເບີກ
ບານໃຈ ຝ່າຍພຣະເຊດຖາ ໄດ້ເຫັນອາການຂອງພຣະອະນຸຊາຊື່ນຊົມດັ່ງນັ້ນ ກໍ
ດີພຣະໄທ ແຕ່ສົງໄສວ່າ ເຫດໃດຈຶ່ງມາເປັນດັ່ງນີ້ ແລ້ວຕັດວ່າ: "ອ້າຍຂໍຂອບ
ຄຸນເທວະດາຟ້າແຖນ ທີ່ມາປັ້ນດົນໃຫ້ເຈົ້າຫາຍໂສກເສົ້າໄດ້ໃນເວລາທີ່ອ້າຍບໍ່ຢູ່
ພຽງສອງວັນ ອ້າຍດີໃຈຫລາຍ ແຕ່ອ້າຍມີຄວາມສົງໄສ ຂໍຖາມເຈົ້າຈັກໜ່ອຍແດ່
ຄາດວ່າ ເຈົ້າຄົງບໍ່ອຳພາງອ້າຍ ຄືຕັ້ງແຕ່ວັນນ້ອງມາເຖິງນະຄອນຂອງອ້າຍ ອ້າຍ
ເຫັນໜ້າເຈົ້າດູໂສກເສົ້າໝົ່ນໝອງໃຈ ອ້າຍກໍໄດ້ພຍາຍາມຊັກຊວນຫລິ້ນສນຸກຫລາຍ-

---

(໑) ພຣະພັກ ແມ່ນ ໜ້າ

ຢ່າງເພື່ອໃຫ້ຊື່ນໃຈ ກໍສັງເກດເຫັນເຈົ້າໂສກເສົ້າລົງກວ່າເກົ່າ ຄັນຈະສໍ້ຖາມຫາເຫດຫລາຍ ກໍຢ້ານເປັນທີ່ກອນໃຈ ແມ່ນເຈົ້າຄິດຮອດພຣະມະເຫສີບໍ້! ຫລືວ່າມີຄວາມອຸກອັ່ງແນວໃດອ້າຍກໍບໍ່ຮູ້ ມາມື້ນີ້ ເຫັນໜ້ານ້ອງແຈ່ມໃສ ຄວາມທຸກໃຈຂອງເຈົ້າຄົງສູນຫາຍໄປແລ້ວຢ່າງຄັກແນ່ ອ້າຍຢາກໃຫ້ນ້ອງເວົ້າສູ່ຟັງວ່າເຫດໃດມາເປັນດັ່ງນີ້."

ທ້າວອີຣະເສນໄດ້ຟັງດັ່ງນັ້ນ ກໍນິ່ງຄິດຢູ່ຄາວນຶ່ງ ແລ້ວທູນພີ່ຊາຍວ່າ "ຂໍເດຊະ ພຣະອົງເປັນພີ່ຊາຍຂອງຂ້າພະເຈົ້າ ແລະເປັນນາຍຂອງຂ້າພະເຈົ້າກໍຈິງ ແຕ່ເຣື່ອງນີ້ເປັນຄວາມລັບໃນໃຈຂອງໃຜລາວ ຍາກທີ່ຈະກາບທູນໄດ້ ຂໍພຣະອົງຢ່າບັງຄັບໃຫ້ເວົ້າເລີຍ" ພຣະຍາວິມະລະໄດ້ຟັງ ແຮ່ງເກີດຄວາມສົງໄສຫລາຍ ຈຶ່ງຕັດວ່າ "ນ້ອງຮັກຂອງອ້າຍ ນ້ອງຢ່າອໍາອ້າຍເລີຍ ຈົ່ງເວົ້າໃຫ້ອ້າຍຟັງເທາະ ອ້າຍບໍ່ຖືໂທດຖືໄພຢ່າງໃດ ອະໄພໃຫ້ເຈົ້າທຸກຢ່າງ" ທ້າວອີຣະເສນຂັດບໍ່ໄດ້ ກໍທູນວ່າ ເມື່ອພຣະອົງມີປະສົງຢາກຮູ້ເຣື່ອງແທ້ ນ້ອງກໍຈະເວົ້າສູ່ຟັງບໍ່ຂືນພຣະໄທ ແລ້ວກໍເລົ່າເຣື່ອງພຣະມະເຫສີຂອງຕົນໃຫ້ພີ່ຊາຍຟັງທຸກປະການ ສຸດແລ້ວ ຈຶ່ງທູນວ່າ ເຫດເປັນດັ່ງກ່າວມານີ້ ພາໃຫ້ນ້ອງເປັນທຸກຫລາຍ ຂໍພຣະອົງຈົ່ງສັນນິດຖານເບິ່ງວ່າ ເປັນຂໍ້ທີ່ນ້ອງຄວນຈະໂສກເສົ້າຫລືບໍ່?

ພຣະຍາວິມະລະໄດ້ຟັງດັ່ງນັ້ນ ກໍມີພຣະໄທສົງສານພຣະອະນຸຊາເປັນອັນຍິ່ງ ຈຶ່ງຕັດວ່າ "ນ້ອງຮັກຂອງອ້າຍເອີຍ! ເຣື່ອງທີ່ເຈົ້າເວົ້າມານີ້ເປັນໜ້າເສັ້ງໃຈເຫລືອທີ່ສຸດ ອ້າຍບໍ່ມີຄວາມສົງໄສອີກແລ້ວ ອ້າຍຟັງເຈົ້າເວົ້າດ້ວຍຄວາມຊ້ອນໃຈຫລາຍ ເພາະຢາກຮູ້ກົກປາຍສາຍເຫດ ບັດນີ້ຄວນແລ້ວທີ່ເຈົ້າໄດ້ຂ້ານັນດາຍທັງສອງຄົນ ຖືກຕ້ອງຕາມທໍານອງຄອງທັມດີແລ້ວ

ຈະບໍ່ຂ້າແຕ່ພຽງສອງຄົນທີ່ນັ້ນດອກ ຜົວເມັນຕັ້ງພັນຄົນພຸ້ນຈຶ່ງຈະສິ້ນຄວາມຄຽດ ອ້າຍເຫັນແລ້ວວ່າ ຄວາມທຸກຂອງເຈົ້ານັ້ນໃຫຍ່ຫລວງ ຮ້າຍແຮງຍິ່ງນັກ ແລະ ເຊື່ອວ່າ ຄົງມີແຕ່ເຈົ້າຜູ້ດຽວທີ່ນັ້ນທີ່ໄດ້ປະສົບທຸກໃນທຳນອງນີ້ ບັດນີ້ເທວະດາ ຟ້າແຖນ ໄດ້ບັນດານໃຫ້ເຈົ້າສ່ວງທຸກແລ້ວ ແຕ່ເພິ່ນໄດ້ບັນດານແນວໃດ ຈຶ່ງ ພາໃຫ້ເຈົ້າສ່ວງທຸກນັ້ນໄດ້ ຈົ່ງເວົ້າໃຫ້ອ້າຍຟັງໃນຂໍ້ນີ້ດ້ວຍ" ທ້າວອິອະເສນ ອຶດອັດຢູ່ໃນໃຈເຕີງເຕີບ ຄັນຈະບໍ່ເວົ້າ ພຣະເຊດຖາກໍຢາກຮູ້ ແລະທັງບັງຄັບ ໃຫ້ເວົ້າຈົນໄດ້ ຈຶ່ງທູນວ່າ "ເມື່ອພຣະອົງຢາກຮູ້ກໍຈະເລົ່າຖວາຍ ແຕ່ວ່າເມື່ອ ພຣະອົງໄດ້ຟັງແລ້ວ ພຣະອົງກໍຈະເສົ້າໂສກພຣະໄທບໍ່ໃຊ່ໜ້ອຍ ດັ່ງນັ້ນ ຂໍພຣະ ອົງໄດ້ໂປດປະທານອະໄພຍະໂທດໃຫ້ຂ້າພະເຈົ້າດ້ວຍ ໃນການທີ່ຈະທຳໃຫ້-ພຣະອົງຕ້ອງເສົ້າໂສກ."

24/VII

ພຣະຍາວິນະລະຕັດວ່າ ທີ່ເຈົ້າເວົ້າຈັ່ງຊີ້ ແຮ່ງພາໃຫ້ອ້າຍຢາກຮູ້ ຫລາຍຂຶ້ນກວ່າເກົ່າ ເວົ້າໃຫ້ອ້າຍຟັງໄວໆເທາະ ເຣື່ອງເປັນຢ່າງໃດ ອ້າຍ ຈະຂໍຟັງ.

ທ້າວອິອະເສນ ບໍ່ສາມາດຈະອຳບັງພີ່ຊາຍໄວ້ໄດ້ ຈຶ່ງເລົ່າເຣື່ອງ-ເອື້ອຍໄພ້ກັບນາງສາວໃຊ້ປະພຶດອະນາຈານຫລີ້ນຊູ້ຢູ່ໃນອຸທຍານໃຫ້ພີ່ຊາຍຟັງ ແລ້ວຊໍ້າທູນວ່າ ເມື່ອຂ້າພະເຈົ້າໄດ້ເຫັນເຫດການອັນແສນຊົ່ວຢ່າງນີ້ແລ້ວ ຈຶ່ງ ຄິດໃນໃຈວ່າ ຜູ້ຍິງທັງຫລາຍ ຄົງຈະມີນິໄສເປັນໄປໃນທາງຊົ່ວມົວເມົາ ຢູ່ໃນ ອາຄະຕັນຫາ ບໍ່ສາມາດຫ້າມຄວາມມັກມາກໃນທາງການໃຫ້ນ້ອມໄປໃນທາງດີ ໄດ້ ຂ້າພະເຈົ້າຄິດວ່າ ຜູ້ຊາຍເຮົານີ້ນັກເບົາຫລາຍ ທີ່ມາມົວຫລົງໄຫລໃຝ່ຝັນ ຢູ່ໃນຄວາມບໍ່ຊື່ສັດຂອງສັດຕີ ດ້ວຍຄວາມຄິດດັ່ງນີ້ ຂ້າພະເຈົ້າຈຶ່ງຕັດຄວາມທຸກ ໃຈໃນເຣື່ອງນີ້ໄດ້.

ພຣະມະເຫສີ (ຜູ້ເປັນເອື້ອຍໃຫຍ່) ໃນລະຫວ່າງກາງປາສາດຂອງຫລັງນີ້ ມີອຸທຍານ (໑) ອັນປະດັບປະດາໄປດ້ວຍຕົ້ນດອກໄມ້ຕ່າງໆ ເຖິງຍາມແລງມີລົມພັດຫອບເອົາກິ່ນດອກໄມ້ເຂົ້າມາທາງເບື້ອງຂອນ (໒) ຈົນຫອມກຸ້ນ ແລະ ມີໝູ່ນົກຕ່າງໆຮ້ອງຢູ່ຊື່ອແຊວ ໃນຂນະນັ້ນ ທ້າວ ວິຣະເສນ ນັ່ງຢູ່ແຄມເບື້ອງຂອນປີ້ນໜ້າໄປທາງສວນເພື່ອທອດພຣະເນດສິ່ງຕ່າງໆໃຫ້ຫາຍໂສກ ທັນໃດນັ້ນ ກໍໄດ້ເຫັນປະຕູປາສາດຂອງພຣະມະເຫສີແຫ່ງພີ່ຊາຍທາງກ້ຳສວນໄຂອອກ ພຣະນາງເທວີຜູ້ທຣະອົງໂສມອັນງາມສະເດັດລົງມາໃນສວນພ້ອມດ້ວຍສາວໃຊ້ ໒໐ ຄົນ ເພາະເວລານັ້ນ ພຣະນາງເຂົ້າໃຈວ່າ ທ້າວ ວິຣະເສນ ສະເດັດໄປເຊີດເບື້ອນກັບພຣະສາມີ (໓) ຂອງຕົນແລ້ວ ຄຶດສນຸກໃນໃຈວ່າຈະບໍ່ມີຜູ້ໃດມາເຫັນຈຶ່ງພາກັນລົງມາຫລິ້ນສນຸກສຸກສໍາຣານຢູ່ໃນສວນໃກ້ກັບບ່ອນຢູ່ຂອງ ທ້າວ ວິຣະເສນ, ຝ່າຍ ທ້າວ ວິຣະເສນ ລອບເບິ່ງທາງເບື້ອງຂອນ ກໍໄດ້ເຫັນເຫດການຕ່າງໆທຸກປະການ ຫລືອີດ ພຣະອົງຄຶດວ່າແມ່ນສາວສນົມທັງ ໒໐ ຄົນ ແຕ່ພໍພວກນັ້ນປົດເຄື່ອງແຕ່ງກາຍ ແລະ ຜ້າຄຸມຫົວອອກແລ້ວ ເລີຍເຫັນເປັນຊາຍ ໑໐ ຄົນ ຍິງ ໑໐ ຄົນຄົບຄູ່ກັນພໍດີ ຝ່າຍນາງເທວີ ເງີຍໜ້າຂຶ້ນໄປທາງຕົ້ນໄມ້ໃຫຍ່ພ້ອມກັບຕົບມືຮຽກວ່າ ເທວັດ! ເທວັດ! ສອງເທື່ອ ທັນທີນັ້ນ ຊາຍຄົນນຶ່ງຮູບຮ່າງແຂງແຮງລື່ນລັບ ກໍໄຕ່ງ່າໄມ້ລົງມາຫານາງ ຕໍ່ຈາກນັ້ນ ນາງເທວີ ແລະ ສາວສນົມ ກໍເຂົ້າຄູ່ກັບຊູ້ຮັກຂອງໃຜລາວ ພາກັນຫລິ້ນສນຸກສຸກສໍາຣານຢອກໄຍກັນ ແລ້ວກໍເຂົ້າໄປບັງພຸ່ມໄມ້ເປັນຄູ່ໆ ເຫິງສົມຄວນແລ້ວ ຊາຍຊື່ ເທວັດ ກັບໝູ່ຊາຍຊູ້ຂອງນາງສາວໃຊ້ທັງ ໒໐ ຄົນນັ້ນ ກໍພາກັນແລ່ນອອກທາງປະຕູສວນແລ້ວປີນຂ້າມກຳແພງໜີໄປ.

---

(໑) ສວນ (໒) ປ່ອງຢ້ຽມ (໓) ຜົວ

ເຫດການທີ່ເຫັນເປັນມາຕໍ່ໜ້າດັ່ງນີ້ ພາໃຫ້ ທ້າວ ວີຣະເສນ ໄດ້ສະຕິ ແລະ ຄຶດຮ່ຳເພິງຢູ່ໃນພຣະໄທວ່າ: "ອື! ໜ້າໜ່າຍແທ້ ທີ່ກູມາມີອຶດຄິດເປັນທຸກວ່າ ກູເປັນຄົນມີເຄາະຮ້າຍແຕ່ຜູ່ດຽວ ທຸກກອງນີ້, ທຸກແບບນີ້, ຕ້ອງເປັນສິ່ງທີ່ໜັກອົກ ຂອງຜູ່ຊາຍຜູ່ເປັນສາມີທົ່ວໄປເປັນຄັກແນ່ ເບິ່ງດູ! ພຣະມະຫາກະສັດອົງເປັນພີ່ ຊາຍຂອງກູ ເຊິ່ງເປັນໃຫຍ່ຍິ່ງແກ່ປະເທດສະຣາດທັງຫລາຍ ກໍຍັງບໍ່ພົ້ນໄປໄດ້ ຊາຕາງ້າງ! ກັບຕົວກູຜູ່ມີອຳນາດນ້ອຍຈະຫ້າມບໍ່ໃຫ້ມັ້ງນອກໃຈໄດ້ ສະນັ້ນ ກູຈະມາ ເປັນທຸກດ້ວຍເຣື່ອງນີ້ບໍ່ໃຊ່ການ ເຊົາທຸກເສັຽເຖີດ ເຊົາໆ! ຕໍ່ແຕ່ນີ້ໄປຕົວກູຈະ ອະວັງ ບໍ່ໃຫ້ເຣື່ອງດັ່ງນີ້ມາກວນໃຈອີກ" ຮ່ຳເພິງດັ່ງນີ້ແລ້ວກໍມີພຣະໄທຊື່ນບານ ຕັດສັ່ງໃຫ້ມະຫາດເລັກຍໍພາສເວີຍມາໃຫ້ ອັນນັ້ນ ພຣະອົງສເວີຍໄດ້ຫລາຍ ແລະ ຟັງສຽງດົນຕີກໍເປັນທີ່ອອນຊອນຍິ່ງນັກ ພຣະພັກ (໑) ກໍເບີກບານເໝືອນແຕ່ກ່ອນ.

ພໍໄດ້ຊາບຂ່າວວ່າ ພຣະເຊດຖາສະເດັດກັບຈາກການເຊີດເບື້ອນມາເຖິງ ແລ້ວ ກໍສະເດັດໄປເຝົ້າ ພຣະເຊດຖາ ບໍ່ທັນໄດ້ສັງເກດເຫັນອາການປ່ຽນແປງ ຂອງພຣະອະນຸຊາ ກໍຕັດປາໄສວ່າ ໂຮ! ມ່ວນຫລາຍ ແຕ່ເສັຽດາຍທີ່ນ້ອງບໍ່ໄດ້ ໄປມ່ວນນຳ ຝ່າຍພຣະອະນຸຊາໄດ້ຟັງ ກໍປາໄສນຳດ້ວຍຄວາມສນຸກສນານເບີກ ບານໃຈ ຝ່າຍພຣະເຊດຖາ ໄດ້ເຫັນອາການຂອງພຣະອະນຸຊາຊື່ນຊົມດັ່ງນັ້ນ ກໍ ດີພຣະໄທ ແຕ່ສົງໄສວ່າ ເຫດໃດຈຶ່ງມາເປັນດັ່ງນີ້ ແລ້ວຕັດວ່າ: "ອ້າຍຂໍຂອບ ຄຸນເທວະດາຟ້າແຖນ ທີ່ມາປັ້ນດົນໃຫ້ເຈົ້າຫາຍໂສກເສົ້າໄດ້ໃນເວລາທີ່ອ້າຍບໍ່ຢູ່ ພຽງສອງວັນ ອ້າຍດີໃຈຫລາຍ ແຕ່ອ້າຍມີຄວາມສົງໄສ ຂໍຖາມເຈົ້າຈັກໜ່ອຍແດ່ ຄາດວ່າ ເຈົ້າຄົງບໍ່ຮຳພາງອ້າຍ ຄືຕັ້ງແຕ່ວັນນ້ອງມາເຖິງນະຄອນຂອງອ້າຍ ອ້າຍ ເຫັນໜ້າເຈົ້າດູໂສກເສົ້າໝົ່ນໝອງໃຈ ອ້າຍກໍໄດ້ພຍາຍາມຊັກຊວນຫລິ້ນສນຸກຫລາຍ-

(໑) ພຣະພັກ ແມ່ນ ໜ້າ

ຢ່າງເພື່ອໃຫ້ຊື່ນໃຈ ກໍສັງເກດເຫັນເຈົ້າໂສກເສົ້າລົງກວ່າເກົ່າ ຄັນຈະສໍ້ຖາມຫາເຫດຫລາຍ ກໍຢ້ານເປັນທີ່ກວນໃຈ ແມ່ນເຈົ້າຄຶດຮອດພຣະມະເຫສີບໍ! ຫລືວ່າມີຄວາມອຸກອັ່ງແນວໃດອ້າຍກໍບໍ່ຮູ້ ມາມື້ນີ້ ເຫັນໜ້ານ້ອງແຈ່ມໃສ ຄວາມທຸກໃຈຂອງເຈົ້າຄົງສູນຫາຍໄປແລ້ວຢ່າງດັກແນ່ ອ້າຍຢາກໃຫ້ນ້ອງເວົ້າສູ່ຟັງວ່າເຫດໃດມາເປັນດັ່ງນີ້."

ທ້າວອິຣະເສນໄດ້ຟັງດັ່ງນັ້ນ ກໍນິ່ງຄຶດຢູ່ຄາວນຶ່ງ ແລ້ວທູນພີ່ຊາຍວ່າ "ຂໍເດຊະ ພຣະອົງເປັນພີ່ຊາຍຂອງຂ້າພະເຈົ້າ ແລະເປັນນາຍຂອງຂ້າພະເຈົ້າກໍຈິງ ແຕ່ເຣື່ອງນີ້ເປັນຄວາມລັບໃນໃຈຂອງໃຜລາວ ຍາກທີ່ຈະກາບທູນໄດ້ ຂໍພຣະອົງຢ່າບັງຄັບໃຫ້ເວົ້າເລີຍ" ພຣະຍາວິມະລະໄດ້ຟັງ ແຮ່ງເກີດຄວາມສົງໄສຫລາຍ ຈຶ່ງຕັດວ່າ "ນ້ອງຮັກຂອງອ້າຍ ນ້ອງຢ່າອຳອ້າຍເລີຍ ຈົ່ງເວົ້າໃຫ້ອ້າຍຟັງເທາະ ອ້າຍບໍ່ຖືໂທດຖືໄພຢ່າງໃດ ອະໄພໃຫ້ເຈົ້າທຸກຢ່າງ" ທ້າວອິຣະເສນຂັດບໍ່ໄດ້ ກໍທູນວ່າ ເມື່ອພຣະອົງມີປະສົງຢາກຮູ້ເຣື່ອງແທ້ ນ້ອງກໍຈະເວົ້າສູ່ຟັງບໍ່ຂືນພຣະໄທ ແລ້ວກໍເລົ່າເຣື່ອງພຣະມະເຫສີຂອງຕົນໃຫ້ພີ່ຊາຍຟັງທຸກປະການ ສຸດແລ້ວ ຈຶ່ງທູນວ່າ ເຫດເປັນດັ່ງກ່າວມານີ້ ພາໃຫ້ນ້ອງເປັນທຸກຫລາຍ ຂໍພຣະອົງຈົ່ງສັນນິຖານເບິ່ງວ່າ ເປັນຂໍ້ທີ່ນ້ອງຄວນຈະໂສກເສົ້າຫລືບໍ່?

ພຣະຍາວິມະລະໄດ້ຟັງດັ່ງນັ້ນ ກໍມີພຣະໄທສົງສານພຣະອະນຸຊາເປັນອັນຍິ່ງ ຈຶ່ງຕັດວ່າ "ນ້ອງຮັກຂອງອ້າຍເອີຍ! ເຣື່ອງທີ່ເຈົ້າເວົ້າມານີ້ເປັນໜ້າເສັຽໃຈເຫລືອທີ່ສຸດ ອ້າຍບໍ່ມີຄວາມສົງໄສອີກແລ້ວ ອ້າຍຟັງເຈົ້າເວົ້າດ້ວຍຄວາມຮ້ອນໃຈຫລາຍ ເພາະຢາກຮູ້ກົກປາຍສາຍເຫດ ບັດນີ້ຄວນແລ້ວທີ່ເຈົ້າໄດ້ຂ້າມັນຕາຍທັງສອງຄົນ ຖືກຕ້ອງຕາມທຳນອງຄອງທັມດີແລ້ວ

ຈະບໍ່ຂ້າແຕ່ພຽງສອງຄົນທີ່ນັ້ນດອກ ພໍດມັ່ນຕັ້ງພັນຄົນພຸ້ນຈຶ່ງຈະລືມຄວາມຄຽດ ຂ້ານເຫັນແລ້ວວ່າ ຄວາມທຸກຂອງເຈົ້ານັ້ນໃຫຍ່ຫລວງ ຮ້າຍແຮງຍິ່ງນັກ ແລະ ເຊື່ອວ່າ ຄົງມີແຕ່ເຈົ້າຜູ້ດຽວທີ່ນັ້ນທີ່ໄດ້ປະສົບທຸກໃນທຳນອງນີ້ ບັດນີ້ເທວະດາ ຟ້າແຖນ ໄດ້ບັນດານໃຫ້ເຈົ້າສວ່າງທຸກແລ້ວ ແຕ່ເພິ່ນໄດ້ບັນດານແນວໃດ ຈຶ່ງ ພາໃຫ້ເຈົ້າສວ່າງທຸກນັ້ນໄດ້ ຈົ່ງເວົ້າໃຫ້ອ້າຍຟັງໃນຂໍ້ນີ້ດ້ວຍ" ທ້າວອິອະເສນ ອຶດອັດຢູ່ໃນໃຈເຫິງເຕີບ ຄັນຈະບໍ່ເວົ້າ ພຣະເຊດຖາກໍຢາກຮູ້ ແລະທັງບັງຄັບ ໃຫ້ເວົ້າຈົນໄດ້ ຈຶ່ງທູນວ່າ "ເມື່ອພຣະອົງຢາກຮູ້ກໍຈະເລົ່າຖວາຍ ແຕ່ວ່າເມື່ອ ພຣະອົງໄດ້ຟັງແລ້ວ ພຣະອົງກໍຈະເສົ້າໂສກພຣະໄທບໍ່ໃຊ່ໜ້ອຍ ດັ່ງນັ້ນ ຂໍພຣະ ອົງໄດ້ໂຜດປະທານອະໄພຍະໂທດໃຫ້ຂ້າພະເຈົ້າດ້ວຍ ໃນການທີ່ຈະທຳໃຫ້-ພຣະອົງຕ້ອງເສົ້າໂສກ."

ພຣະຍາວິມະລະຕັດວ່າ ທີ່ເຈົ້າເວົ້າຈັ່ງຊີ້ ແຮງພາໃຫ້ອ້າຍຢາກຮູ້ ຫລາຍຂຶ້ນກວ່າເກົ່າ ເວົ້າໃຫ້ອ້າຍຟັງໄວໆເທາະ ເຣື່ອງເປັນຢ່າງໃດ ອ້າຍ ຈະຂໍຟັງ.

ທ້າວອິອະເສນ ບໍ່ສາມາດຈະອຳບັງພີ່ຊາຍໄວ້ໄດ້ ຈຶ່ງເລົ່າເຣື່ອງ-ເອື້ອຍໄພ້ກັບນາງສາວໃຊ້ປະພຶດອະນາຈານຫລີ້ນຊູ້ຢູ່ໃນອຸທຍານໃຫ້ພີ່ຊາຍຟັງ ແລ້ວຊ້ຳທູນວ່າ ເມື່ອຂ້າພະເຈົ້າໄດ້ເຫັນເຫດການອັນແສນຊົ່ວຢ່າງນີ້ແລ້ວ ຈຶ່ງ ຄິດໃນໃຈວ່າ ຜູ້ຍິງທັງຫລາຍ ຄົງຈະມີນິໄສເນີ້ງໄປໃນທາງຊົ່ວມົວເມົາ ຢູ່ໃນ ອາຄະຕັນຫາ ບໍ່ສາມາດຕ້ານຄວາມມັກມາກໃນທາງກາມໃຫ້ນ້ອມໄປໃນທາງດີ ໄດ້ ຂ້າພະເຈົ້າຄິດວ່າ ຜູ້ຊາຍເອົາປີ້ບົກເບົາຫລາຍ ທີ່ນາງມົວຫລົງໃຫລໃຝ່ຝັນ ຢູ່ໃນຄວາມບໍ່ຊື່ສັດຂອງສັດຕີ ດ້ວຍຄວາມຄິດດັ່ງນີ້ ຂ້າພະເຈົ້າຈຶ່ງຕັດຄວາມທຸກ ໃຈໃນເຣື່ອງນີ້ໄດ້.

ພຣະຍາວິມະລະ ໄດ້ຟັງດັ່ງນັ້ນ ມີພຣະໄທຄຽດແຄ້ນເຫລືອກຳລັງ ຈຶ່ງຕັດວ່າ "ເອີດໍ! ນາງມະເຫສີອາຊເທວີຜູ້ມີອຳນາດອັນຍິ່ງໃຫຍ່ ຊ່າງມີຫົວ-ໃຈຊົ່ວຊ້າປະພຶດອະນາຈານໄດ້ເຖິງປານນີ້ ເລື່ອງນີ້ເຮົາຕ້ອງພິສູດໃຫ້ເຫັນຈິງດ້ວຍຕາຕົນເອງ." ພຣະອະນຸຊາທູນວ່າ ເມື່ອພຣະອົງຢາກເຫັນຈິງ ກໍຂໍໃຫ້ທົງສງົບອາລົມໄວ້ກ່ອນ ແລ້ວຈຶ່ງສັ່ງໃຫ້ຈັດການອອກປະພາດປ່າ ເພື່ອຫາລະເບື້ອອີກໃນເວລານີ້ ແລະ ຂ້າພະເຈົ້າກໍຈະຕາມສະເດັດໄປດ້ວຍ ເມື່ອກາງວັນເຮົາພັກເຊົາຢູ່ໃນປ່າ ເຖິງເວລາຄ່ຳຈຶ່ງກັບມາລອບເບິ່ງທີ່ບ່ອນຂ້າ-ພະເຈົ້າຢູ່ ຄົງຈະໄດ້ເຫັນເຫດການຕ່າງໆຕາມທີ່ຂ້າພະເຈົ້າໄດ້ທູນມາ, ພຣະຍາວິມະລະເຫັນດີນຳ ຈຶ່ງຕັດສັ່ງໃຫ້ເສນາຈັດການສະເດັດປະພາດປ່າຕາມທີ່ເຄີຍມາ, ຮຸ່ງເຊົ້າມາພຣະກະສັດທັງສອງກໍສະເດັດອອກຈາກພຣະນະຄອນພ້ອມດ້ວຍບໍຣິວານ ໄດ້ພັກເຊົາຢູ່ຫານໄຊທີ່ໃນປ່າ ພໍເວລາຄ່ຳຕັດສັ່ງເປັນ-ຄວາມລັບ ໃຫ້ອາມາດຜູ້ໃຫຍ່ຢູ່ເຝົ້າຫານໄຊແທນຕົວ ແລະ ລະວັງກວດກາຢ່າໃຫ້ຜູ້ໃດອອກໄປຈາກຫານໄຊ ຈົນເຮົາພຣະອົງກັບມາ, ສັ່ງແລ້ວ ພຣະກະສັດທັງສອງ ກໍຂຶ້ນມ້າກັບຄືນມານະຄອນ ເຂົ້າລີ້ຊ່ອນຢູ່ໃນທີ່ປະທັບຂອງ-ທ້າວວິຣະເສນ ແລ້ວພາກັນບັນທົມຢູ່ທີ່ນັ້ນຕລອດຄືນ ພໍຈວນແຈ້ງ ສອງກະສັດຈຶ່ງເຂົ້າມາລີ້ຢູ່ແຄມຝາເບິ່ງຊ່ອນບ່ອນທ້າວວິຣະເສນເຄີຍເຫັນເທື່ອກ່ອນ, ໃນຂນະທີ່ທັງສອງກະສັດນັ່ງຈອບມອງຢູ່ ກໍໄດ້ເຫັນຜັກດູໄຂອອກ ນາງເທວີລົງມາໃນສວນພ້ອມດ້ວຍສາວໃຊ້ ໑໐ ຄົນ ແລະ ຊາຍຊູ້ ໑໐ ຄົນ ເມື່ອນາງເທວີຕົບມືເອົາຊາຍຊູ້ເທວັດມາແລ້ວ ຕ່າງຄົນກໍຕ່າງເຂົ້າຄູ່ກັນ ຕໍ່ຈາກນັ້ນເຫດການທັງຫລາຍ ກໍເປັນໄປເໝືອນດັ່ງທ້າວວິຣະເສນໄດ້ເຫັນມາແລ້ວທຸກປະການ; ເວລານັ້ນ ພຣະຍາວິມະລະ ເສັຽພຣະໄທເກືອບເປັນລົມລົ້ມລົງ ພໍຍັງສະຕິໄດ້ຈຶ່ງຕັດວ່າ ເອີ້ ຫົວອັບອາຍເຫລືອລົ້ນພົ້ນປະມານແລ້ວ ເບິ່ງດູ!

ນະເຫລືຂອງກູຊູ່ເປັນກະສັດທີ່ຍິ່ງໃຫຍ່ ຍັງມາເປັນໄປໄດ້ເຖິງປານນີ້ ໜ້າ-
ໜ່າຍເປັນທີ່ສຸດເຫລືອເກີນ ເອີ້! ເມື່ອເຫດການເປັນດັ່ງນີ້ ຊາຍໃດໃນໂລກ
ຈະເວົ້າອວດອ້າງວ່າຕົນມີຄວາມສຸກ, ວ່າແລ້ວກໍຫັນໜ້າມາເວົ້າກັບນ້ອງຊາຍ
ວ່າ ນ້ອງເອີຍ! ເຮົາມາພາກັນລະລະຣາຊສົມບັດເສັຽເທາະ ເພາະວ່າ
ສົມບັດທັງຫລາຍໃນໂລກນີ້ ບໍ່ມີສິ່ງໃດຈະທ່ຽງແທ້ແນ່ນອນເລີຍ ຊ້ຳບໍ່ໜຳ
ຄວາມຊື່ສັດສຸຈະຣິດຕໍ່ກັນກໍບໍ່ມີທີ່ປີກອື້ນ ເມື່ອຄວາມສັດບໍ່ມີຕໍ່ກັນ ຫລື ຖ້າຫາກມີ
ກໍມີພຽງຍາມນຶ່ງຍາມດຽວພໍປານງູແລບລີ້ນ ບໍ່ເປັນຂອງໝັ້ນຄົງແນວໃດ ທັງ
ຄວາມທີ່ໄດ້ເປັນເຈົ້າເປັນຈອມໃນດິນແດນແຄວ້ນເຂດອັນກວ້າງໃຫຍ່ໄພສານ
ເຖິງປານນີ້ ກໍບໍ່ມີອຳນາດອັນໃດ ພໍຈະບັງຄັບໃຫ້ສັດຊື່ສັດຕໍ່ເຮົາໄດ້ ພາໃຫ້
ເຮົາໄດ້ຮັບຄວາມອັບອາຍຂາຍໜ້າຢ່າງເຫລືອລົ້ນດັ່ງນີ້ແລ້ວ ເຮົາຈະຢູ່ໃນ
ຣາຊສົມບັດເພື່ອປໂຍດອັນໃດ? ແໜງສູ້ເຮົາມາລະລະຄວາມຊື່ນມ່ວນ ອັນ
ເປັນຂອງບໍ່ທ່ຽງນີ້ເສັຽ ແລ້ວໜີເຂົ້າປ່າ ໄປຫາລີ້ຊ່ອນຢູ່ໃນພົງໄພໄກເຂດມະ
ນຸດ ຄົງຈະມີຄວາມສຸກດີກວ່າ ທັງຈະໄດ້ອຳບັງຄວາມອັບອາຍຂາຍໜ້າຂອງ-
ເຮົານຳອີກ ເຈົ້າຈະເຫັນດີນຳບໍ່?

ທ້າວວິຣະເສນບໍ່ເຫັນດີນຳຄວາມຄິດຂອງພີ່ຊາຍ ແຕ່ຄິດເຫັນວ່າ
ເວລານີ້ພີ່ຊາຍກຳລັງເສົ້າໂສກຢູ່ ຈຶ່ງພີດເວົ້າໂລຍຕາມໃຈວ່າ ຂ້າພະເຈົ້າກໍ
ເຫັນດີດັ່ງດຽວກັນ ແຕ່ເຫດການອັນນີ້ຄົງຈະເປັນດ້ວຍເຄາະເຂັນເວນກັມ-
ຂອງເຮົາ ເພາະສະນັ້ນ ຖ້າຈະໄປແທ້ ຂ້າພະເຈົ້າຂໍຄຳໝັ້ນສັນຍາໄວ້ຂໍ້ ໑
ຄືວ່າ ຖ້າເຮົາໄປພົບຄົນທີ່ມີເຄາະຮ້າຍຫລາຍກວ່າເຮົາແລ້ວ ຂໍໃຫ້ພຣະອົງພາ
ຂ້າພະເຈົ້າສະເດັດກັບຄືນພຣະນະຄອນ ຍ້ອນວ່າ ສັດຕີໄພອັນໃຫຍ່ຫລວງນີ້
ບໍ່ມີແຕ່ເຮົາສອງຄົນທີ່ນີ້ ຄວາມຈິງຕ້ອງເກີດມີແກ່ຄົນຊາຍທົ່ວໄປດັ່ງດຽວກັນ.

ພຣະຍາວິນະລະຕອບວ່າ ທີ່ຍອມໃຫ້ລັບຍາຕາມທີ່ເຈົ້າຮ້ອງຂໍ ແຕ່ພີ່ເຊື່ອແນ່ວ່າ ເຮົາຄົງຈະບໍ່ໄດ້ພົບພໍ້ຄົນທີ່ມີເຄາະຮ້າຍຍິ່ງກວ່າເລີຍ ວ່າ ແລ້ວກະສັດທັງສອງກໍໜີອອກຈາກພຣະຣາຊວັງຫັນໜ້າເຂົ້າປ່າໄປອີກທາງນຶ່ງ ບໍ່ແມ່ນທາງໄປຕາມຍານໄຊ ທັງສອງໄດ້ດຳເນີນໄປລຽງງາຫີນທາງຍືດຍາວ-ຄາວໄກ ຄັນຄ່ຳລົງກໍອາໄສນອນໃຕ້ຮົ່ມໄມ້ ຮຸ່ງເຊົ້າມາກໍພາກັນເດີນຕໍ່ໄປ ໄດ້ສອງຮາຕີ ຈິ່ງໄປເຖິງທົ່ງຫຍ້າແຫ່ງນຶ່ງຢູ່ໃກ້ຝັ່ງທະເລ, ແລະເລາະແຄມທະເລນັ້ນ ມີປ່າໄມ້ໃຫຍ່ລຽນຊ້າຍລ້າຍຕາມແຄມຝັ່ງ, ກະສັດທັງສອງພາກັນເຂົ້າໄປພັກເຊົາຢູ່ໃຕ້ຮົ່ມໄມ້ໃຫຍ່ນັ້ນ ເມື່ອພາກັນຕານນ້ຳນະດື່ມພໍເຊົາເມື່ອຍແລ້ວ ກໍສົນທະນາກັນເຖິງເລື່ອງຄວາມຊົ່ວຊ້າອາສັດຂອງມະເຫສີທັງສອງ.

ໃນເວລາກຳລັງສາທົບເຖິງຄວາມທຸກອັນເກີດແຕ່ສັດຕີໄພຢູ່ນັ້ນ ກໍໄດ້ຍິນສຽງດັງຄຶກຄັກຂຶ້ນໃນພື້ນທະເລ ບຶດນຶ່ງກໍໄດ້ຍິນສຽງເໝືອນຄົນຮ້ອງໄຫ້ຮ່ຳໄຮເປັນທີ່ອື່ງເອ ພາໃຫ້ສອງກະສັດຕົກໃຈ ທັນໃດນັ້ນ ກໍເຫັນນ້ຳໃນທະເລອັນກວ້າງໃຫຍ່ເກີດເປັນວົງວຽນລອດຂຶ້ນ ແລ້ວກໍແຕກແຍກອອກໂດຍໄວ ສອງກະສັດຕົກຊະເງີ້ຈົນຕົວສັ່ນ ເບິ່ງຢູ່ບຶດດຽວ ກໍເຫັນຮູບປລາດດຳເປັນລຳພົ້ນຂຶ້ນເປັນລຳດັບ ຕັ້ງຈົ້ງພົ້ງສູງທຽມເມື້ອ ທັງສອງບໍ່ກ້າເບິ່ງຢູ່-ເຖິງໄດ້ ກໍພາກັນພ້າວປີນຂຶ້ນໄປລີ້ຢູ່ລະຫວ່າງງ່າພາກຂອງຕົ້ນໄມ້ໃຫຍ່ ບຶດນຶ່ງຮູບດຳໃຫຍ່ເປັນລຳນັ້ນ ກໍມີຍອອກເປັນຍັກຕົວນຶ່ງ ລອຍຜາດໆເຂົ້າມາ-ຫາຝັ່ງ, ສອງກະສັດທັງຍ້ານທັງຢາກເຫັນ ພາກັນຈອບເບິ່ງຢູ່ ຄາວນຶ່ງກໍເຫັນຍັກຕົວນັ້ນອັນມີອູບແກ້ວບັກໃຫຍ່ທູນຫົວຍ່າງຂຶ້ນມາ ອູບແກ້ວນັ້ນມີກະແຈໃຫຍ່ ໔ ໜ່ວຍໃສ່ອ້ອມໄວ້ ແລ້ວຍັກຕົວນັ້ນກໍຍ່າງເຂົ້າມາເຊົາໃຕ້ຕົ້ນໄມ້ໃຫຍ່

ທີ່ສອງອ້າຍນ້ອງລີ້ຢູ່ນັ້ນ ສອງອ້າຍນ້ອງແມ່ນຈະຢ້ານປານໃດ ກໍເຫັນວ່າຈະໜີໄປບໍ່ພົ້ນ ຈຶ່ງຈຳໃຈອົດລີ້ຢູ່ເທິງງ່າພາກ ເໝືອນບໍ່ຢ້ານ.

ຍັກປົງຂຸບໃຫຍ່ລົງແລ້ວ ກໍນັ່ງລົງຂ້າງຂຸບ ໄຂກະແຈປົດປາຂຸບນັ້ນອອກ ທັນໃດນັ້ນ ກໍເຫັນນາງງາມຮູບຮ່າງນ້ອຍຄົນນຶ່ງ ລຸກອອກມາຈາກຂຸບ-ແລ້ວນັ່ງລົງ ຍັກກໍໂຍບກາຍນັ່ງລົງຂ້າງນາງ ຕາເສືອດໃສ່ນາງດ້ວຍຄວາມ-ຮັກ ແລ້ວເລົ່າໂລມວ່າ "ນີ້ນະ ນາງຢູ່ງາມເລີດ ຍ້ອນຄວາມຮັກເຈົ້າ ພີ່ຈຶ່ງໄດ້ຊຸ່ນເຈົ້າມາແຕ່ໃນວັນວິວາຫະ(໑) ຄວາມຮັກທີ່ພີ່ມີຕໍ່ເຈົ້າຕັ້ງແຕ່ວັນນັ້ນມາຮອດວັນນີ້ ແມ່ນຈະໄດ້ຫລາຍເດືອນຫລາຍປີແລ້ວກໍຕາມ ກໍຍັງບໍ່ປົກເປົາລົງ-ເລີຍ ບັດນີ້ພີ່ເມື່ອຍຫລາຍ ຈະນອນໃຫ້ສະບາຍຢູ່ໃຕ້ຕົ້ນໄມ້ນີ້ຈັກໜ່ອຍກ່ອນ ວ່າແລ້ວກໍເອົາຫົວໜຸນຕັກນາງນອນ ຍຽດຂາໄປຈົນເຖິງຝັ່ງນ້ຳ ບໍ່ນານກໍຫລັບ ສຽງກົນກ້ອງປານສຽງລົມພັດນ້ຳເປັນຟອງຕັ້ງໃຫຍ່ໆ.

ໃນຂນະຍັກຫລັບຢູ່ນັ້ນ ນາງແຫນໜ້າຂຶ້ນໄປເທິງຕົ້ນໄມ້ ໄດ້ເຫັນສອງກະສັດລີ້ຢູ່ບ່ອນງ່າພາກ ກໍເກີດຄວາມຮັກຂຶ້ນໃນທັນທີ ຈຶ່ງກວັກມືເປັນສັນຍາໃຫ້ສອງກະສັດລົງມາຫາ ສອງກະສັດອ້າຍນ້ອງບໍ່ຄຶດວ່າ ນາງມີຄວາມກະເບຫາໃນເວລາອັນຈີ້ຈັ້ນໄດ້ເຖິງປານນີ້ ຄຶດວ່າ ນາງຈະປຸກຍັກຂຶ້ນມາກິນ ກໍມີຄວາມຢ້ານເປັນກຳລັງ ຈຶ່ງພະຍາຍາມບອກໃຫ້ເປັນສັນຍາອ້ອນວອນນາງຂໍໃຫ້ນາງເມດຕາພໍໃຫ້ລີ້ຢູ່ງ່າໄມ້ຕໍ່ໄປ ທັນໃດນັ້ນ ນາງເຈົ້ານາຍາ ກໍຄ່ອຍໆເອົາມືຊ້ອນຫົວຍັກອອກຈາກຕັກຂອງຕົນວາງລົງໄວ້ກັບໜ້າດິນ ແລ້ວລຸກຍ່າງໄປລົມສອງກະສັດດ້ວຍສຽງກະຊິບກະຊາບວ່າ "ເຊີນລົງມາເທາະນາ! ບໍ່ເປັນຫຍັງດອກ ຂ້າພະເຈົ້າຈະບໍ່ປຸກຍັກດອກນາ!" ສອງອ້າຍນ້ອງບໍ່ເຊື່ອໃຈພະຍາຍາມບອກນາງຢູ່ຢ່າງນັ້ນເປັນເທິງນານ ແຕ່ນາງບໍ່ຟັງສຽງ ເອົາຢືນ-

(໑) ວັນແຕ່ງດອງ.

ຄຳເປັນຊິງບັງຄັບວ່າ "ລົງມາເທາະນາ! ລົງມາໄວໆ ຖ້າອີ່ນຊ້າຢູ່ບໍ່ລົງ-ມາ ຈະປຸກຍັກຂື້ນໃຫ້ກິນເສັງທັງສອງຄົນນີ້ແຫລະ", ສອງອ້າຍນ້ອງຝືນໃຈຂໍອອນນ່າງອີກລາງເທື່ອນາງເມດຕາ ແຕ່ກົງກັນຂ້າມ ນາງກັບສະແດງສີ-ໜ້າຄຽດແຄ້ນ ທຳທ່າຈະປຸກຍັກຂື້ນອີ່ຫລີ ແລ້ວເອົ້າເປັນຄຳສຸດທ້າຍວ່າ "ດີແລ້ວ! ຖ້າບໍ່ລົງມາ ກໍເຫັນວ່າຮູບຮ່າງຂອງທ່ານທັງສອງທີ່ອ່ອນແອ້ນງາມຄືຜູ້ສາວນັ້ນ ຈະບໍ່ພົ້ນທ້ອງຂອງຍັກຕົວນີ້ໄດ້"

ສອງກະສັດເຫັນນາງບໍ່ສົງສານແທ້ແລ້ວ ກໍຕັດສິນໃຈລົງມາຕາມແຕ່ໂດຍດີ ແຕ່ຍັງສັ່ນເທົາໆຢູ່ ນາງຍ່າງເຂົ້າມາດຶງເອົາແຂນສອງອ້າຍນ້ອງແລ້ວພາລັດເຂົ້າໄປໃນພຸ່ມໄມ້ ສະແດງຄວາມສເນຫາຕໍ່ສອງກະສັດ, ໃນຊັ້ນຕົ້ນສອງກະສັດບໍ່ກ້າປະຕິບັດຕາມຄວາມປະຕິພັດຂອງນາງ (໑) ນາງກໍ-ເລີຍໃຊ້ມາຍາບັງຄັບ ໂດຍອ້າງອຳນາດຂອງຍັກເໝືອນດັ່ງເກົ່າ ສອງກະ-ສັດພົດປັນຍາຈຳເປັນຕ້ອງປະຕິບັດຕາມຄວາມປະສົງຂອງນາງ ພໍສຳເລັດແລ້ວ ນາງເຫລືອບເຫັນແຫວນໃນນິ້ວມືຂອງສອງອ້າຍນ້ອງ ຈຶ່ງຂໍໄວ້ເບິ່ງດາງໜ້າສິບລະວົງ ແລ້ວນາງໄຂຕລັບຢິບພວງແຫວນຢູ່ໃນຕລັບນັ້ນມາໃຫ້-ເບິ່ງພ້ອມກັບຖາມວ່າ "ນີ້ແມ່ນຫຍັງ? ທ່ານທັງສອງຮູ້ບໍ່? ສອງອ້າຍນ້ອງບອກວ່າ "ບໍ່ຮູ້ ຂໍເຊີນນາງບອກໃຫ້ຮູ້ດ້ວຍ" ນາງຈຶ່ງບອກວ່າ "ຊາຍຜູ້ໄດ້ອຸດໜູນຄວາມປະສົງຂອງຂ້າພະເຈົ້າ ໄດ້ໃຫ້ແຫວນເລົ່ານີ້ໄວ້ຄົນລະວົງ ໃນພວງນີ້ມີແຫວນຢູ່ ໙໘ ວົງແລ້ວ ນີ້ສະແດງວ່າ ຂ້າພະເຈົ້າມີຄູ່ຮັກຜ່ານມາ-ແລ້ວມີ ໙໘ ຄົນ (ນອກຈາກຍັກຕົວນີ້) ຖ້າທ່ານສອງຄົນໃຫ້ອີກຄົນລະວົງ ກໍຈະເປັນ ໑໐໐ ວົງພໍດີ; ເມື່ອສອງກະສັດຖອດແຫວນໃຫ້ແລ້ວ ນາງເອົ້າຕໍ່ໄປວ່າ "ເບິ່ງເອົາເດີທ່ານ ເຖິງແມ່ນວ່າ ຍັກຕົວນີ້ມັນເປັນຜົວຂອງຂ້າພະ

(໑) ຄວາມກ້ຽວພັນ.

ເຈົ້າ ແລະ ນັບລະວັງຮັກສາຂ້າພະເຈົ້າໄວ້ຢ່າງແຂງແຮງ ຈົນເອົາຂ້າພະ-
ເຈົ້າໃສ່ໄວ້ໃນຂູບແກ້ວ ອັດກະແຈ ແລ້ວເອົາຖ່ວງລົງໄວ້ໃຕ້ສາຍບືທະເລພຸ້ນ
ກໍດາມ ຂ້າພະເຈົ້າຍັງສາມາດລັກລອບຫລິ້ນຊູ້ໄດ້ເຖິງ ໑໐໐ ຄົນ. ແລ້ວ,
ທ່ານຈຶ່ງເຂົ້າໃຈໄວ້ສາແຕ່ດຽວນີ້ວ່າ ເມື່ອສັດຕີມີເຈດຕະນາຈະເຮັດອັນໃດ
ແລ້ວ ເປັນຕ້ອງເຮັດໃຫ້ສຳເຣັດຈົນໄດ້ ຊາຍຊູ້ ຫລື ຜົວບໍ່ສາມາດປ້ອງກັນ
ຫລື ນ້າງເພຄວາມໂລບຂອງຜູ້ຍິງໄດ້ດ້ວຍການລະວັງຮັກສາ ຊາຍທັງຫລາຍ
ບໍ່ຄວນຈະບັງຄັບບັນຊາຜູ້ຍິງຫລາຍ ຍ້ອນວ່າ ຈະຕັດຄວາມໂລບຂອງຜູ້ຍິງ ທີ່
ເກີດຂຶ້ນແລ້ວໃຫ້ເຫືອດຫາຍໄປດ້ວຍການບັງຄັບບໍ່ຫ່ອນສຳເຣັດ ຖ້າສັດຕີໃດມີ
ໃຈຈະຮັກສາຄວາມບໍຣິສຸດຂອງຕົນແລ້ວ ກໍບໍ່ຈຳເປັນຕ້ອງລະວັງຮັກສາ ໃຫ້
ເສັຽເວລາເລີຍ" ວ່າແລ້ວນາງກໍເອົາແຫວນສອງວົງນັ້ນຮ້ອຍເຂົ້າໃສ່ພວງ-
ນຳຫູ່ ຍາງກັບຄືນໄປຫາຍັກ ນັ່ງລົງໂຈມຫົວຍັກຂຶ້ນໃສ່ຕັກຕາມເດີມ ແລ້ວ
ງວາກໜ້າມາບອກໃຫ້ສອງອ້າຍນ້ອງຟ້າວໜີໄປ.

"ພຣະຍາວິນະລະກັບພຣະອະນຸຊາ ຟ້າວສະເດັດກັບຄືນນຳທາງເກົ່າ
ພໍພົ້ນສາຍຕາຂອງນາງຮ້ອຍຜົວມາແລ້ວ ຈຶ່ງລົມກັບພຣະອະນຸຊາວ່າ " ເຫດ-
ການທີ່ເກີດປະຈັກແກ່ຕາເຮົານີ້ ນ້ອງຄິດວ່າຈັ່ງໃດ? ເບິ່ງແມ! ຍັກຜູ້ມີຣິດທາ
ນຸພາບຍິ່ງໃຫຍ່ ເປັນທີ່ຢຳແຢງຂອງມະນຸດທັງຫລາຍເພື່ອໄປເຖິງປານນີ້ ມັນກໍ
ຍັງຫາເມັຽທີ່ຊື່ສັດບໍ່ໄດ້ ເຈົ້າຄິດເຫັນບໍ່ວ່າ ແມ່ນຫຍັງກໍບໍ່ທີ່ຄວາມຊື່ຂອງສັດຕີ
ອ້າຍເຊື່ອວ່າ ຄົງບໍ່ມີຜູ້ຊາຍຄົນໃດໃນໂລກ ທີ່ຈະໃຊ້ອຳນາດບັງຄັບຄວາມມີໃຈ
ໂລເລຂອງສັດຕີໄດ້."

ທ້າວວິຣະເສນທູນວ່າ "ແມ່ນແລ້ວຂ້ານ້ອຍ ແລະ ພ້ອມກັບເຫດ-
ການທີ່ໄດ້ເຫັນນີ້ ຂ້ານ້ອຍຂໍທູນວ່າ ຍັກຕົວນັ້ນມີເຄາະຮ້າຍກວ່າເຮົາຫລາຍ

ຖ້າມັນຈະຈົ່ມວ່າ ໄດ້ຮັບໄພຈາກສັດຕີ ມັນກໍຄົງມີເຣື່ອງທີ່ຈະຈົ່ມຫລາຍກວ່າ
ເຮົາ ເພາະສະນັ້ນ ຂໍເຊີນພຣະອົງສະເດັດກັບຄືນພຣະນະຄອນເທາະ ເພາະ
ພວກເຮົາໄດ້ພົບພໍ້ຊາຍທີ່ມີເຄາະຮ້າຍໃນເຣື່ອງສັດຕີຫລາຍກວ່າເຮົາແລ້ວ
ຕໍ່ໄປຂໍພຣະອົງຢ່າໄດ້ຖືເອົາຄວາມບໍ່ມີສັດຂອງຜູ້ຍິງມາເປັນອາຣົມໃຫ້ເກີດ
ຄວາມໝື່ນໝອງໃຈເລີຍ ສ່ວນມະເຫສີຂອງພຣະອົງນັ້ນ ພຣະອົງຈະໃສ່ໂທດ
ສະຖານໃດ ຫລື ບໍ່ໃສ່ ນັ້ນ ກໍສຸດແລ້ວແຕ່ພຣະອົງເປັນ ແຕ່ການຈະອະພິ-
ເສກກັບຍິງອື່ນໃໝ່ ແລະຈະຄິດປ້ອງກັນສະຖານໃດນັ້ນ ກໍສຸດແລ້ວແຕ່ພຣະ-
ອົງອີກ, ສ່ວນຂ້າພະເຈົ້າຮູ້ຈັກວິທີຮັກສາຄວາມສຸຈຣິດຂອງສັດຕີທີ່ຈະມາເປັນ
ເມັຽນັ້ນໄດ້ແລ້ວ ແຕ່ຈະບໍ່ກາບທູນໃຫ້ພຣະອົງຊາບໃນເວລານີ້." ພຣະຍາ
ອິນະລະ ເຫັນດີນຳໃນການສະເດັດກັບຄືນພຣະນະຄອນ ຈຶ່ງພາກັນສະເດັດ
ມາເຖິງປານໄຊໃນເວລາຄ່ຳຂອງວັນຖ້ວນສາມ ເຖິງວັນຮຸ່ງເຊົ້າມາ ກໍເຕີນ
ໄພ່ພົນໂຍທາກັບຄືນພຣະນະຄອນດ້ວຍຄວາມເບີກບານໃຈ ພໍສະເດັດເຂົ້າໄປ
ໃນພຣະຣາຊວັງ ກໍມີພຣະຣາຊດຳຣັດໃຫ້ທະຫານມະຫາດເລັກໄປຈັບນາງມະ
ຫາເທວີຜູ້ອາສັດນັ້ນມາ ມອບໃຫ້ມະຫາອຳມາດເອົາໄປຂ້າຖິ້ມທັນທີ, ມະຫາ
ອຳມາດຮັບພຣະຣາຊໂອງການແລ້ວ ກໍກຸມເອົານາງອຸບາລນັ້ນໄປທຸບຫົວເສັຽ
ໂດຍບໍ່ຮູ້ຊ້ຳວ່າ ນາງມີໂທດຢ່າງໃດ ເມື່ອໃຫ້ປະຫານພຣະມະເຫສີແລ້ວ
ພຣະຍາອິນະລະກໍຍັງບໍ່ຫາຍຄຽດ ສະເດັດເຂົ້າໄປໃນປາສາດ ພົບນາງສາວ
ໃຊ້ຂອງພຣະມະເຫສີເສັຽໃຫ້ນອນຕາຍກິ້ງເກືອກຢູ່ໃນປາສາດນັ້ນທັງ ໑໐ຄົນ

ເມື່ອປະຫານສັດຕີອຸບາດ ໑໑ ຄົນນັ້ນສຳເຣັດແລ້ວ ພຣະຍາອິນະ
ລະ ກໍທົງຕັ້ງພຣະໄທໄວ້ວ່າ ຕັ້ງແຕ່ນີ້ໄປ ເຮົາຈະຫານາງສາວມາເປັນເມັຽ
ຄືນລະຄົນ ແຕ່ພໍຮຸ່ງແຈ້ງຂຶ້ນ ກໍຈະໃຫ້ຂ້ານາງນັ້ນເສັຽ ແລ້ວຫາໃໝ່ມານອນ
ນຳຄືນລະຄົນເປັນທຳນອງນີ້ສເມີໄປ ແລະ ໂດຍອຸບາຍຢ່າງນີ້ ເຮົາຈຶ່ງຈະ

ນີເນັ້ງທີ່ເປັນຜູ່ບໍ່ຣິສຸດໄດ້ ເມື່ອພຣະອົງຄຶດດັ່ງນີ້ແລ້ວ ກໍຕັ້ງພຣະໄທໄວ້ຢ່າງ-
ໝັ້ນຄົງວ່າ ຈະຕ້ອງປະຕິບັດຕາມຄວາມຄຶດນັ້ນຕລອດໄປ.

ຝ່າຍພຣະອະນຸຊາພັກເຊົາຢູ່ນຳພຣະເຊດຖາພໍສົມຄວນແລ້ວ ກໍສະ-
ເດັດກັບຄືນໄປນະຄອນຂອງຕົນ ເມື່ອພຣະອະນຸຊາກັບຄືນໄປແລ້ວ ພຣະຍາວິ
ມະລະ ກໍຕັດສັ່ງໃຫ້ມະຫາອຳມາດນຳເອົາລູກສາວຂອງນາຍພົນຄົນນຶ່ງ ເຂົ້າ
ມາຖວາຍ ມະຫາອຳມາດໄດ້ຮັບພຣະຣາຊໂອງການແລ້ວ ກໍປະຕິບັດຕາມ-
ພຣະຣາຊປະສົງ ພຣະຍາວິມະລະນອນນຳນາງນັ້ນຕລອດຄືນແລ້ວ ແຈ້ງມາກໍ
ບອກໃຫ້ເອົານາງນັ້ນໄປຂ້າເສັຽ ແລ້ວຕັດສັ່ງໃຫ້ຫານາງໃໝ່ມາໃຫ້ທຸກໆວັນ
ຖ້າຫາບໍ່ໄດ້ຕົວມະຫາອຳມາດແລະລູກເມັຽຈະຕ້ອງໄດ້ຮັບໂທດປະຫານພິດທັ້ງ
ໂຄດ ເຫດການເປັນດັ່ງນີ້ ມະຫາອຳມາດກໍຈຳເປັນຕ້ອງຈັດການຕາມພຣະ-
ຣາຊປະສົງ ຄືຄືນທີສອງໄດ້ພາເອົາບຸດຕີຂອງນາຍທະຫານຊັ້ນຜູ້ນ້ອຍເຂົ້າໄປ
ຖວາຍ ຮຸ່ງແຈ້ງມາກໍໃຫ້ເອົານາງນັ້ນໄປຂ້າຖິ້ມຕາມເຄີຍ ຄືນທີສາມມາ ໄດ້
ພາເອົາບຸດຕີຂອງຂ້າຣາຊການຄົນນຶ່ງເຂົ້າໄປຖວາຍ ຄືນທີສີ່ໄດ້ເອົາບຸດຕີ-
ຂອງພໍ່ຄ້າ ແລະຄືນທີຫ້າ ໄດ້ເອົາບຸດຕີຂອງຊາວເມືອງ ເຫດການເປັນດັ່ງນີ້
ຕໍ່ໆໄປ ຈົນເກີດຄວາມເດືອດຮ້ອນຂົນກະຫາຍແກ່ປະຊາຊົນພົລເມືອງທົ່ວໄປ
ຕັ້ງແຕ່ກ່ອນໆມາ ອານາປະຊາຣາສດອນທັງຫລາຍມີຄວາມໂຄຣົບນົບນ້ອມ
ແລະ ຮັກທູນພຣະມະຫາກະສັດເປັນອັນຍິ່ງ ພາກັນເວົ້າສໍຣະເສີນເຍີນຍໍຢູ່ບໍ່
ຂາດ ດ້ວຍວ່າພຣະອົງທົງພຣະເມດຕາກະຣຸນາຕໍ່ໄພ່ຟ້າຂ້າແຜ່ນດິນ- ດຸຈດັ່ງ
ໂອຣົດຂອງພຣະອົງເອງ ມາບັດນີ້ຂ່າວຄວາມໂຫດຮ້າຍທາຣຸນຂອງກະສັດນັ້ນ
ໄດ້ລືຊາຊາກົດໄປທົ່ວພຣະນະຄອນ ເສນາອາມາດຣາສດອນທັງຫລາຍພາກັນ

ສະດຸ້ງຕົກໃຈກົວຂົນຫົວລຸກທຸກຄົວເຮືອນ ເຫດການເປັນດັ່ງນີ້ ພວກອຳມາດຣາຊປຸໂຣຫິດທັງຫລາຍກໍບໍ່ສາມາດທູນຄັດຄ້ານໄດ້ ເພາະພຣະອົງໄດ້ຕັ້ງພຣະໄທໄວ້ຢ່າງແໜ້ນໜາແລ້ວ.

ບັດນີ້ຈັກກ່າວເຖິງມະຫາອຳມາດຜູ້ມີໜ້າທີ່ຫານາງສາວມາຖວາຍພຣະຍາ ທ່ານອຳມາດຜູ້ນັ້ນມີລູກສາວຢູ່ສອງຄົນ ຜູ້ເອື້ອຍຊື່ນາງຕັນໄຕ ຜູ້ນ້ອງຊື່ນາງອິໄລວັນ. ນາງຕັນໄຕນັ້ນເປັນຜູ້ມີສິຣິລັກສະນະງາມເລີດ ທັງມີຄວາມຮູ້ແລະຜຍາປັນຍາຢ່າງຍອດຍິ່ງ ປະກອບດ້ວຍຄວາມກ້າຫານ ແລະຄວາມເມດຕາກະຣຸນາປານີແກ່ຄົນທົ່ວໆໄປ ສ່ວນນາງອິໄລວັນນັ້ນ ກໍງາມບໍ່ໃຊ້ນ້ອຍເໝືອນກັນ. ທ່ານມະຫາອຳມາດມີຄວາມຮັກແພງນາງທັງສອງນີ້ປານໜ່ວຍຕາ ຢູ່ມາມື້ນຶ່ງ ທ່ານມະຫາອຳມາດຄິດເຖິງພຣະຣາຊອາຍາສັ່ງຂອງພຣະເຈົ້າແຜ່ນດິນໃນເຣື່ອງໃຫ້ຫານາງສາວໄປຖວາຍ ແລະນາງສາວທັງຫລາຍທີ່ໄປນອນນຳພຣະກະສັດນັ້ນ ຖືກຂ້າຕາຍທຸກໆວັນດ້ວຍມືຂອງທ່ານເອງ ທ່ານເລີຍເກີດຄວາມໂສກເສົ້າໝົ່ນໝອງໃຈ ບໍ່ເປັນອັນກິນອັນນອນ ເພາະເມື່ອຕົນເອງຫາບໍ່ໄດ້ວັນໃດ ວັນນັ້ນຕົວເອງກໍຕ້ອງຕາຍ ຖ້າຫາກຫາໄດ້ສເມີໄປທຸກໆວັນ ກຸລສັດຕີທັງຫລາຍໃນນະຄອນອຸໄທຍະນະກໍຈະດັບສູນ ປະຊາກອນຈະພາກັນເດືອດຮ້ອນເຫລືອກຳລັງ ເຫດທັງສອງປະການນີ້ ພາໃຫ້ທ່ານອຸກອັ່ງຈົນຈ່ອຍຜອມລົງ ນາງຕັນໄຕເຫັນບິດາໂສກເສົ້າໝົ່ນໝອງໃຈຈຶ່ງເຂົ້າໄປຫາພໍ່ແລ້ວເວົ້ານຳພໍ່ວ່າ "ຂໍໂທດນຳຍາພໍ່ ດຽວນີ້ລູກສັງເກດເຫັນວ່າ ພໍ່ຄົງມີຄວາມອຸກອັ່ງຫລາຍ ໃນເຣື່ອງພຣະຣາຊອາຍາຂອງພຣະເຈົ້າແຜ່ນດິນ ສະນັ້ນ ເຣື່ອງນີ້ລູກຂໍຮັບອາສາຕັດຮາກເຫງົ້າຂອງຄວາມຊົ່ວຮ້າຍແຫ່ງພຣະເຈົ້າແຜ່ນດິນນັ້ນເສັຽ ຍາພໍ່ຈະເຫັນວ່າຢ່າງໃດ?"

ນະຕາອຳນາດຖາມວ່າ "ລູກຄິດເຮັດຢ່າງໃດ? ພໍ່ເຫັນວ່າການທີ່ເຈົ້າຈະຮັບອາສາຫາທາງຕັດຄວາມຊົ່ວຮ້າຍຂອງພຣະຣາຊານັ້ນ ບໍ່ມີທາງຈະເຮັດໄດ້ເລີຍ" ນາງຕັນໄຕຕອບວ່າ "ແມ່ນພໍ່ບໍ່! ເປັນເຈົ້າໜ້າທີ່ຕາງຍິງ ເຂົ້າໄປຖວາຍພຣະເຈົ້າແຜ່ນດິນທຸກວັນ ຖ້າດັ່ງນັ້ນອັນຕໍ່ໆໄປ ກໍໃຫ້ພໍ່ເອົາລູກນີ້ ເຂົ້າໄປຖວາຍເພິ່ນກໍແລ້ວກັນ ດ້ວຍວິທີນີ້ທີ່ນັ້ນລູກຈະຕັດຮາກເຫງົ້າຂອງຄວາມໂຫດຮ້າຍແຫ່ງພຣະເຈົ້າແຜ່ນດິນລົງໄດ້."

ນະຕາອຳນາດໄດ້ຍິນລູກສາວເວົ້າດັ່ງນັ້ນ ກໍເວົ້າຂັດຂຶ້ນໃນທັນທີວ່າ "ລູກຮັກຂອງພໍ່ເອີຍ ເປັນຫຍັງເຈົ້າຈຶ່ງເວົ້າຈັ່ງຊີ້ ບໍ່ແມ່ນລູກເປັນບ້າແລ້ວຫວະ ການທີ່ເຈົ້າຂັນອາສາເຂົ້າໄປທຳການຄາວນີ້ ເຈົ້າບໍ່ຮູ້ຫລືວ່າ ພຣະກະສັດເພິ່ນໄດ້ຕັ້ງພຣະໄທໄວ້ແລ້ວວ່າ ຈະມີເມັຽນອນຮ່ວມແຕ່ພຽງຄືນດຽວທີ່ນັ້ນ ຄັນແຈ້ງມາເພິ່ນໃຫ້ເອົາໄປຂ້າຖິ້ມເສັຽແລ້ວຫາເອົາໃໝ່ ພຣະອົງບໍ່ຍອມນອນຮ່ວມກັບຍິງຄົນດຽວສອງຄືນເປັນອັນຂາດ ເຣື່ອງນີ້ເຈົ້າກໍຮູ້ຢູ່ເຕັມອົກແລ້ວ ເຫດໃດຈຶ່ງມາຂັນອາສາເຂົ້າໄປຫາໄຟ ຈົ່ງຮ່ຳຮອນເບິ່ງໃຫ້ດີກ່ອນ" ນາງຕັນໄຕຕອບວ່າ "ລູກຮ່ຳຮອນເບິ່ງດີແລ້ວ ຮູ້ວ່າອັນຕະຣາຍຢ່າງໃຫຍ່ຫລວງນັ້ນ ຈະເກີດລາມມາເຖິງລູກຄືກັນ ແຕ່ວ່າຄວາມຢ້ານກົວຕໍ່ໄພອັນໃຫຍ່ຫລວງນີ້ ບໍ່ສາມາດຂັດຂວາງຄວາມຄິດຂອງລູກໄດ້ ລູກຈະຕ້ອງເຮັດຕາມທີ່ຄິດໄວ້ຈົນໄດ້ ຖ້າວ່າຕາຍກໍໄດ້ຊື່ວ່າຕາຍຢ່າງສົມກຽດຕິຍົດຢ່າງແທ້ຈິງ ຖ້າແມ່ນທຳການສຳເຣັດກໍຈະໄດ້ຊື່ວ່າ ເປັນຜູ້ໄດ້ທຳຄຸນອັນໃຫຍ່ຍິ່ງແກ່ປະເທດຊາດຂອງຕົນ."

ນະຕາອຳນາດເວົ້າຢືນຄຳວ່າ "ບໍ່ໄດ້ ບໍ່ໄດ້ ໃນເຣື່ອງນີ້ເຖິງເຈົ້າຈະເວົ້າຢ່າງໃດ ພໍ່ກໍບໍ່ຍອມອະນຸຍາດໃຫ້ເຈົ້າເຮັດຕາມຄວາມຕັ້ງໃຈຂອງເຈົ້າໄດ້ ພໍ່ຈະປະເຈົ້າໃຫ້ຕົກຢູ່ໃນອັນຕະຣາຍຢ່າງຂົນຫົວລຸກນັ້ນບໍ່ໄດ້ເປັນອັນຂາດ

ໂອ! ໃຫ້ລູກຄຶດເບິ່ງຄັກໆຕີ້! ຄຶດເບິ່ງໃຫ້ດີວ່າ ເມື່ອເວລາພຣະກະສັດ-ຕັດສັ່ງໃຫ້ພໍ່ເອງເປັນຜູ້ຂ້າເຈົ້າ ພໍ່ຈະຂັດຄຳສັ່ງໄດ້ຫລື ເຖິງແມ່ນເຈົ້າຈະບໍ່ສະທ້ານຍ້ານຕໍ່ຄວາມຕາຍກໍຕາມ ແຕ່ລູກຕ້ອງຄຶດເຫັນແດ່ວ່າ ໜ້າວຽກຂອງພໍ່ນີ້ໜັກພໍປານໃດ ພໍ່ຈະຕ້ອງເປັນຜູ້ຂ້າລູກທີ່ສຸດຮັກດັ່ງດວງໃຈ ດ້ວຍດາບຂອງຕົນເອງ ພໍ່ຈະຝືນໃຈອົດທົນຕໍ່ຄວາມສຍອງຢ່າງແສນສາຫັດນັ້ນ-ຢ່າງໃດໄດ້" ຝ່າຍນາງຕັນໄຕ ໄດ້ຍິນພໍ່ຫ້າມດັ່ງນັ້ນກໍບໍ່ຍອມ ຍັງຂືນໄຫວ້ວອນພໍ່ຢູ່ ຂໍໃຫ້ພໍ່ພ້າວພາໄປຖວາຍພຣະເຈົ້າແຜ່ນດິນຈົນໄດ້ ນະທາອຳມາດຄຶດຄຽດຂຶ້ນ ຈຶ່ງເວົ້າໃຫ້ລູກສາວວ່າ "ເຈົ້ານີ້ດື້ຫລາຍ ອ້ອນວອນຢູ່ບໍ່ເຊົາ ເວົ້າໃຫ້ຟັງທີ່ໃດແຮ່ງໜັ້ນ ຄົນແນວນີ້ດີແຕ່ຄ້ອນໃສ່ຫລັງຈັກສອງສາມບາດ ປານກັນກັບເນັ້ງພໍ່ນານັ້ນແຫລະມັນຈຶ່ງຈະເຊົາອ້ອນວອນ" ນາງຕັນໄຕຖາມພໍ່ວ່າ "ເນັ້ງພໍ່ນາເປັນຢ່າງໃດ? ນະທາອຳມາດຕອບວ່າ "ເຈົ້າຈົ່ງຟັງພໍ່ຈະເວົ້າໃຫ້ຟັງດຽວນີ້"

ນິທານປະກອບເທດ

ເຣື່ອງເນັ້ງຂອງພໍ່ນາ

ແຕ່ປາງກ່ອນ ມີຊາວນາຄົນນຶ່ງ ເປັນຄົນຮັ່ງມີ ໄດ້ລ້ຽງສັດຕ່າງໆໄວ້ຫລາຍຈຳພວກ ເປັນຕົ້ນ ງົວ, ຄວາຍ, ລໍ, ໝູ, ໝາ ແລະເປັດໄກ່-ເປັນອັນມາກ ຕໍ່ມາພໍ່ນາຄົນນັ້ນໄດ້ໄປເປັນສ່ຽວກັບຜີ ຜີຈຶ່ງສອນວິຊາຮູ້ຈັກພາສາສັດເວົ້າກັນໃຫ້ສ່ຽວ ຜີໄດ້ໃຫ້ພໍ່ນາຜູ້ນັ້ນສຳບານວ່າ ຈະບໍ່ເວົ້າເຣື່ອງທີ່ສັດເວົ້າກັນນັ້ນໃຫ້ຜູ້ອື່ນຟັງເປັນອັນຂາດ ຖ້າເວົ້າຂຶ້ນເວລາໃດ ຈະຕ້ອງຕາຍໃນເວລານັ້ນ; ເຖິງຣະດູເຮັດນາ ພໍ່ນາຜູ້ນັ້ນພາເນັ້ງຂອງຕົນອອກໄປນອນນາເພື່ອຄວບຄຸມພວກລູກນ້ອງ ແລງວັນນຶ່ງພໍ່ນາຍ່າງໄປທາງຄອກງົວ

ໄດ້ຍິນງົວກັບລໍເວົ້າກັນຈຶ່ງຢຸດຢືນຟັງ ງົວ ເວົ້າກັບ ລໍ ວ່າ "ສ່ຽວເອີຍ! ເຮົາເຫັນໂຕມີຄວາມສຸກສະບາຍຫລາຍກວ່າເຮົາ ວຽກການແນວໃດກໍບໍ່ໄດ້-ເຮັດໜັກ ມີໜ້າທີ່ແຕ່ພຽງໃຫ້ນາຍຂີ່ໄປທຸຣະທີ່ນັ້ນ ບອກນີ້ຍັງມີຄົນຄອຍເບິ່ງແຍງລ້ຽງເກືອ ບໍ່ໃຫ້ອຶດຢາກ ຫຍ້າທີ່ເຂົາໃຫ້ກິນກໍມີແຕ່ຫຍ້າອ່ອນໆ ນ້ຳກໍໃສສະ-ອາດດີ ຄອກນອນກໍບໍ່ແປດເປື້ອນຂີ້ດິນ ສ່ວນເຮົາແສນທຸກ ຕ້ອງເຮັດວຽກໃຫ້ນາຍແຕ່ເຊົ້າຈົນຄ່ຳ ບໍ່ທັນແຈ້ງເຂົາກໍຈັບໄປແກ່ໄຖ ຄົນໄຖກໍໃຈຮ້າຍທຸບຕີ ບໍ່ປານີ ສ່ຽວເອີຍ! ເບິ່ງຄືກັນແດ່ ໂປກພິດແລ້ວ ຈົນບໍ່ມີຂົນເພາະແອກຖູ ໄຖນາແລ້ວກໍເອົາໄປລ່າມໃສ່ເດີ່ນຫຍ້າຫ້ຽນໆແລະແຂງມີແຕ່ດໍ ກັດກໍບໍ່ຂາດ ຍາມແລງຈັບມັດໄວ້ໃນຄອກອັນມີແຕ່ຕົມ ແລະຮີ້ນຍຸງກໍເຫລືອຫລາຍ ຫາຄວາມສະບາຍໜ້ອຍນຶ່ງບໍ່ມີ ບວດຝ່າຍໂຕຍຸທ່າງນອນກິນຂອງແຊບໆຈົນລ່ອງເບັ້ງ ກັນເຫລືອໃຈແທ້ໆ."

ລໍ ໄດ້ຟັງງົວຈົ່ມທຸກດັ່ງນັ້ນ ຈຶ່ງເວົ້າຂຶ້ນວ່າ "ໂຕມັນໂງ່ ບໍ່ສລາດຫາຄວາມສະບາຍໃສ່ໂຕເອງ ທັງບໍ່ມີໃຈມານະກ້າແຂງສົມກັບຕົນຕົວທີ່ໃຫຍ່ ທັງມີເຂົາອັນແຫລມເປັນອາວຸດຢ່າງວິເສດນັ້ນດ້ວຍ ຖ້າໂຕຢາກສະບາຍຕ້ອງເຮັດນຳອຸບາຍ ເຮົາຈະບອກໃຫ້ ຄື : ເວລາເຂົາຈະມາຈັບໄປໃສ່ໄຖ ໂຕກໍຕ້ອງທຳທ່າຂຶງຂັງ ວ່ຽງເຂົາໃສ່ທຳທ່າຮ້າຍຈະຊົນ ຫລື ຖີບເຕະກໍໄດ້ ຫລືບໍ່ດັ່ງນັ້ນ ເມື່ອເຂົາເອົາຫຍ້າເອົານ້ຳມາໃຫ້ກິນ ກໍທຳທ່າເຈັບ ດົມໆເບິ່ງແລ້ວກໍຢ່າກິນ ພຽງທີ່ນີ້ເຂົາກໍຈະເຫັນວ່າໂຕປ່ວຍ ແລ້ວເຂົາຈະບໍ່ໃຊ້ງານໂຕ ໂຕກໍຈະໄດ້ຮັບຄວາມສະບາຍທີ່ນັ້ນເອງ." ງົວ ໄດ້ຮັບຄວາມແນະນຳດັ່ງນັ້ນແລ້ວກໍຮັບວ່າຈະເຮັດນຳຕັ້ງແຕ່ວັນຮຸ່ງເຊົ້ານີ້ໄປ ເມື່ອລົມທະນາກັນພໍຄວນແລ້ວສັດທັງສອງ ກໍເລີຍງຶບຫລັບໄປ ພໍ່ນາຍຸນັ້ນໄດ້ຍິນສັດທັງສອງເວົ້າກັນ ກໍຈື່ຈຳ

ໄວ້ທຸກຖ້ອຍຄຳ ແລ້ວກັບມາສັ່ງລູກຈ້າງນາໄວ້ວ່າ ມື້ອື່ນເຊົ້າຖ້າງົວມັນພະຍົດ
ບໍ່ເຂົ້າຫງຽນໄຖໂດຍດີ ໃຫ້ສູເອົາລໍມາໄຖແທນງົວກໍແລ້ວກັນ.

ຕື່ນເຊົ້າມາ ເມື່ອລູກຈ້າງເຂົ້າໄປຈູງເອົາງົວມາໄຖນາ ງົວກໍສະ
ແດງອາການພະຍົດດັ່ງທີ່ໄດ້ຕົກລົງກັນໄວ້ກັບລໍ ລູກຈ້າງຜູ້ນັ້ນຈຶ່ງມາເອົາລໍໄປ
ໃສ່ໄຖຕາມຄຳສັ່ງຂອງນາຍ ລໍຖືກເຂົາເອົາໄຖນາຈົນຄ່ຳ ເມື່ອຍລ້າເກືອບ-
ຕາຍ ບໍ່ໜຳລໍບໍ່ເຄີຍຖືກໄຖນາ ຍ່າງບໍ່ໄວ ແລະ ໄປບໍ່ແມ່ນຮ່ອງ ອ້າຍລູກ-
ຈ້າງຈຶ່ງເອົາແສ້ຟາດເລັ້ງຈົນຫລັງໂຄ່ ພໍເຂົາປົດຈາກໄຖ ຍ່າງກັບມາຄອກ
ເກືອບລົ້ມ ມາເຖິງຄອກກໍມີແຕ່ຫຍ້າແຫ້ງໄວ້ໃຫ້ກິນ ບ່ອນນອນກໍບໍ່ມີເຟືອງປູ
ອ້າຍລໍຄຶດອຶດອັດສູໃຈໂຕເອງຈົນນ້ຳຕາໄຫລ ຝ່າຍງົວໄດ້ພັກງານ ກໍມີຄວາມສະ
ບາຍ ຫຍ້ານ້ຳອາຫານອັນເປັນຂອງລໍ ກໍກັບມາເປັນຂອງງົວ ງົວໄດ້ຮັບ
ຄວາມສະບາຍ ກໍຄຶດຂອບຄຸນສະຫາຍລໍເປັນອັນມາກທີ່ໄດ້ຊ່ອຍບອກອຸບາຍໃຫ້
ໃນວັນຖ້ອນສອງ ງົວພິຕິເຈັບ ໂດຍບໍ່ກິນຫຍ້າກິນນ້ຳ ພວກລູກຈ້າງເຫັນດັ່ງ-
ນັ້ນ ຈຶ່ງເອົາລໍໄປໃສ່ໄຖອີກ ລໍ. ໄດ້ຮັບຄວາມລຳບາກເກືອບຕາຍເໝືອນໃນ
ວັນກ່ອນ ຈຶ່ງຄຶດຮຳເພິງຢູ່ແຕ່ໃນໃຈວ່າ ອັນນີ້ເປັນຄວາມໂງ່ຂອງເຮົາເອງ
ທີ່ຫາຄວາມທຸກມາໃສ່ໂຕ ຄວາມທຸກທີ່ກູໄດ້ຮັບຢູ່ດຽວນີ້ ບໍ່ເປັນຍ້ອນຫຍັງ!
ເປັນຍ້ອນກູເຂົ້າໄປກ່ຽວຂ້ອງໃນກິຈການຂອງຄົນອື່ນອັນບໍ່ແມ່ນໜ້າທີ່ຂອງກູ
ຖ້າກູຄຶດແກ້ໄຂຄວາມໂງ່ນີ້ບໍ່ໄດ້ ກໍເຫັນຈະຕ້ອງລຳບາກຕລອດຊາດເປັນແທ້.

ຝ່າຍພໍ່ນາໄດ້ຊາບວ່າ ເຂົາໃຊ້ງານລໍຈົນເກືອບຕາຍ ກໍຢາກຮູ້
ຄວາມຄຶດ ແລະອຸບາຍຂອງສັດທັງສອງອີກຕໍ່ໄປ ດັ່ງນັ້ນ ເມື່ອກິນແລງແລ້ວ
ໃນວັນນັ້ນ ຈຶ່ງຊອນເມັ້ງໄປນັ່ງຫລົບຢູ່ແຄມຄອກງົວ ແລະ ລໍ ກໍພໍດີໄດ້ຍິນ
ລໍ ເວົ້າກັບ ງົວ ວ່າ "ສຽວເອີຍ! ຫວ່າງຫງ່າງວັນນີ້ ກຳລັງເຮົາໄຖນາຢູ່

ໄດ້ຍິນນາຍສັ່ງກັບພວກລູກຈ້າງເປັນຄວາມສຳຄັນຂໍ້ນຶ່ງ ກ່ຽວເຖິງໂຕ ພາດເອົາເຮົາຕົກໃຈຈົນຂີ້ເກືອບແຕກ ເພາະຢ້ານໄພຈະມາເຖິງສ່ຽວ" ງົວ ບໍ່ທັນຮູ້ກົນຂອງລີ ກໍຕົກໃຈພ້າວຖາມວ່າ "ນາຍສັ່ງວ່າຈັ່ງໃດ ບອກມາໄວ" ລີໄດ້ທ່າດັ່ງນັ້ນ ກໍພິຕິສົງສານງົວ ພ້ອມກັບເວົ້າວ່າ "ສ່ຽວເອີຍ! ເຮົາໄດ້ຍິນນາຍສັ່ງພວກລູກຈ້າງວ່າ ຖ້າເຫັນງົວບໍ່ກິນຫຍ້າ ມີອາການປ່ວຍຢູ່ອີກແລ້ວ ຂໍໃຫ້ຈັດການຂ້າເສັຽ ເອົາຊີ້ນແຈກຢາຍກັນກິນດີກວ່າຈະໃຫ້ຕາຍລ້າ ແລ້ວເພິ່ນໄດ້ສັ່ງໃຫ້ເພັຊຄາດມາແຕ່ເຊົ້າດ້ວຍ ນີ້ແຫລະສ່ຽວເອີຍ! ເຮົາຢ້ານນຳໂຕຫລາຍແທ້ໆ ເຮົາສົງສານໂຕຫລາຍເຕັມທີ ເພາະເຮົາເປັນສະຫາຍກັນມານານ ຄັນມີເຫດການເກີດຂຶ້ນເຖິງໂຕດັ່ງນີ້ ກໍຄືກັນກັບເກີດຂຶ້ນແກ່ເຮົາ ດັ່ງນັ້ນເຮົາຈຶ່ງໄດ້ຄຶດຫາຫົນທາງທີ່ຈະຊ່ວຍຊີວິດຂອງໂຕຢູ່ສເມີ" ຝ່າຍງົວບໍ່ຮູ້ກົນອຸບາຍຂອງລີ ພໍໄດ້ຊາບວ່າເຂົາຈະຂ້າຕົວ ກໍມີຄວາມກົວເປັນອັນມາກ ຈຶ່ງໄຫວ້ວອນລີ ຂໍໃຫ້ບອກອຸບາຍອັນຈະພາໃຫ້ພົ້ນຄວາມຕາຍສູ່ຟັງ ລີຈຶ່ງແນະນຳວ່າ "ມື້ອື່ນເຊົ້າເມື່ອຄົນລ້ຽງເອົານ້ຳແລະຫຍ້າມາໃຫ້ກິນ ໂຕຮີບພ້າວກິນເສັຽໂດຍດີ ພໍນາຍຮູ້ກໍຈະເຂົ້າໃຈວ່າໂຕເຊົາເຈັບແລ້ວ ແລ້ວເຂົາຈະສັ່ງງົດໃນການທີ່ຈະປະຫານໂຕເສັຽ ດ້ວຍອຸບາຍນີ້ ໂຕກໍຈະພົ້ນຈາກຄວາມຕາຍໄດ້" ງົວໄດ້ຟັງດັ່ງນັ້ນ ກໍຮັບວ່າຈະປະຕິບັດຕາມທຸກປະການ.

ຝ່າຍພໍ່ນາໄດ້ຍິນງົວກັບລີເວົ້າກັນມາແຕ່ຕົ້ນ ໄດ້ເຫັນຄວາມສລາດມີອຸບາຍຂອງລີ ແລະຄຶດເຫັນຄວາມໂງ່ຂອງງົວທີ່ຫລົງເຊື່ອນຳອຸບາຍຂອງລີ ກໍອົດຫົວເອົາບໍ່ໄດ້ ຈຶ່ງຫົວກ້າກຂຶ້ນໂດຍແຮງ ພາໃຫ້ເມັຽຢູ່ບໍ່ຮູ້ຈັກກົກປາຍສາຍເຫດສົງໄສ ຈຶ່ງຖາມວ່າ "ເຈົ້າຫົວຂວັນຫຍັງຫີ? ບອກຂ້ອຍແນ! " ຜົວບໍ່ຮູ້ຈະວ່າຢ່າງໃດ ຈຶ່ງບອກເມັຽວ່າ "ນ້ອງຈຶ່ງຟັງພີ່ຫົວທີ່ນັ້ນກໍພໍແລ້ວ ຢ່າຖາມ

ຢ່າງອື່ນເລີຍ, ຝ່າຍເມັຽກໍບໍ່ຍອມ ຊັກໄລ່ໄຕ່ຖາມຫາເຫດທີ່ພາໃຫ້ຫົວນັ້ນຢູ່ບໍ່ເຊົາ ອ້າຍເຈົ້າຜົວກໍບອກໄດ້ແຕ່ພຽງວ່າຫົວຂວັນງົວກັບລໍ ສ່ວນຄວາມອື່ນນອກຈາກນີ້ບອກບໍ່ໄດ້ ຖ້າບອກຂ້ອຍຕ້ອງຕາຍ. ພໍ່ນາງບອກຄວາມຈຳເປັນໂດຍສັດຈິງອັນນີ້ ກໍຫວັງວ່າເມັຽຈະເຊົາຊັກໄລ່ໄຕ່ຖາມ ແຕ່ກັບເຮັດໃຫ້ເມັຽມີຄວາມປລາດໃຈ ແລະ ລົງໄສຕື່ມຂຶ້ນອີກ ຄັນນາງໄຫວ້ວອນຜົວທີ່ໃດກໍບໍ່ບອກ ນາງຈື່ງເວົ້າຂັດຂຶ້ນວ່າ "ຂ້ອຍບໍ່ເຊື່ອເຈົ້າດອກ ທີ່ເຈົ້າວ່າມີຄວາມຈຳເປັນບອກບໍ່ໄດ້ ເຈົ້ານັ່ງຢູ່ດີໆກໍຫົວຂຶ້ນກ້າກໆ ບໍ່ມີເຫດມີຜົນຈະຫົວເປັນບໍ່! ແລະບອກເຫດທີ່ພາໃຫ້ຫົວນັ້ນທີ່ນັ້ນ ບໍ່ແມ່ນແນວພໍຄໍຂາດບາດຕາຍເລີຍ ການທີ່ເຈົ້າບອກວ່າຫົວຂວັນງົວກັບລໍນັ້ນ ເຫັນຈະບໍ່ແມ່ນແນ່ນອນ ເພາະງົວກັບລໍມັນກໍຢູ່ຊື່ໆ ບໍ່ເຫັນເຮັດຫຽັງກັນພໍເປັນໜ້າຢາກຫົວ ເຈົ້າຕ້ອງມີເຫດແນວນຶ່ງເປັນແທ້ ເອົ໊າ! ຖ້າເຈົ້າບໍ່ບອກ ຂ້ອຍຂໍສາບານຕໍ່ໄຟດຽວນີ້ວ່າ ເຮົາຈະຢູ່ກິນນຳກັນຍືນຍາວໄປບໍ່ໄດ້ ເພາະຖ້າຜົວເມັຽປົກປິດອຳພາງຄວາມລັບແກ່ກັນແລ້ວ ຈະຢູ່ນຳກັນໄດ້ຢ່າງໃດ ເວົ້າແລ້ວກໍລຸກຂຶ້ນຍ່າງປັດກົ້ນແລ່ນເຂົ້າໃນເຮືອນລັດຕັກຸບອນຮ້ອງໄຫ້ ສະເອກສະອື້ນຢູ່ຕລອດຄືນ ຝ່າຍຜົວນອນຢູ່ນອກຢູ່ດຽວຈົນແຈ້ງ ຄັນຕື່ນຂຶ້ນເຫັນເມັຽຍັງບໍ່ທັນເຊົາຄຽດ ຈື່ງອອຍວ່າ "ນ້ອງບໍ່ຄວນຮ້ອງໄຫ້ໂສກເສົ້າເສັຽໃຈໃຫ້ເປັນທຸກລ້າ ເພາະພີ່ໄດ້ບອກແລ້ວວ່າ ບອກບໍ່ໄດ້ຖ້າຂືນບອກພີ່ຕ້ອງຕາຍ ແລະເຣື່ອງກໍເປັນເຣື່ອງເລັກນ້ອຍ ຖ້ານ້ອງບໍ່ຢາກໃຫ້ພີ່ຕາຍ ກໍຢ່າຖາມອີກເລີຍ."

ຝ່າຍເມັຽເຫັນຜົວເວົ້າຈັ່ງຊັ້ນຊ້ຳພັດແຮ່ງໄດ້ໃຈ ເວົ້າໃຫ້ຜົວວ່າ ຖ້າບໍ່ບອກເປັນບໍ່ຍອມເດັດຂາດ ຜົວຕອບວ່າ ໄດ້ບອກແລ້ວບໍ່ແມ່ນບໍ໊! ວ່າຖ້າຂ້ອຍບອກຂ້ອຍຕ້ອງຕາຍ! ນາງເມັຽເວົ້າແດກໃຫ້ຜົວວ່າ ເຈົ້າຈະຕາຍ ຫລືຈະຍັງ

ກໍສຸດແລ້ວ ຖ້າບໍ່ບອກຂ້ອຍກັບເຈົ້າເປັນເລີກກັນແຕ່ດຽວນີ້ເລີກເປັນຜົວເປັນເມັຽ
ກັນໂລດ ຜົວເຫັນວ່າຈະເວົ້າໃຫ້ເມັຽຍິນຍອມໂດຍລຳພັງໂຕເອງບໍ່ໄດ້ ຈຶ່ງໄປ
ຫາພີ່ນ້ອງຝ່າຍຜົວແລະຝ່າຍເມັຽມາເວົ້າຊ່ອຍ ແລະຊີ້ແຈງເຫດຜົນໃຫ້ຟັງໂດຍ-
ຕລອດ ເຖິງພໍ່ແມ່ພີ່ນ້ອງຈະມາເວົ້າຢ່າງໃດ ນາງກໍບໍ່ຍອມຢູ່ທ່າດຽວ ແຖມຍັງ
ເວົ້າອີກວ່າ ເຖິງຈະຂ້າໃຫ້ຕາຍກໍບໍ່ຍອມ ຈະຕ້ອງຂໍຮູ້ຄວາມລັບ-ໃນໃຈຂອງຜົວ
ໃຫ້ໄດ້ ວ່າແລ້ວກໍຮ້ອງໄຫ້ຕີອົກຕີຫົວ, ຝ່າຍລູກຂອງນາງເຫັນແມ່ຮ້ອງໄຫ້ບໍ່ຟັງ
ສຽງໃຜເວົ້າ ກໍຈົນໃຈບໍ່ຮູ້ຈະຊ່ອຍແມ່ໄດ້ຢ່າງໃດ ກໍເລີຍຮ້ອງໄຫ້ນຳເປັນແຊວໆ
ຊາວບ້ານຜູ້ເປັນພໍ່ຜິດປັນຍາ ບໍ່ຮູ້ວ່າຈະຫລຽວໜ້າໄປເບິ່ງໃຜໄດ້ ໄດ້ຍິນແຕ່ສຽງ
ຮ້ອງໄຫ້ຢູ່ອ້ອມຂ້າງ ມີຄວາມອຸກໃຈຫລາຍຈຶ່ງລຸກອອກໄປຢູ່ນອກຊານ ຄຶດຕຶກ
ຕອງໄປວ່າ ຄວນຈະບອກດີ ຫລື ບໍ່ບອກດີ ຖ້າບອກຕາມຈິງແລ້ວ ຕົວເອງກໍຈະ
ຕ້ອງຕາຍເປັນແນ່ ຄັນຈະບໍ່ບອກກໍເຫັນວ່າ ນາງເມັຽຈະເສົ້າໂສກອຸກອັ່ງຫລາຍ
ຈົນເຖິງກັ້ນໃຈຕາຍກໍອາດເປັນໄດ້.

ມະຫາອຳມາດເວົ້າກັບນາງຕັນໄຕຕໍ່ໄປວ່າ ລູກເອີຍ! ພໍ່ໄດ້ເວົ້າມາ-
ແລ້ວວ່າ ພໍ່ນາຜູ້ນັ້ນລ້ຽງສັດໄວ້ຫລາຍຈຳພວກ ນອກຈາກສັດອື່ນໆແລ້ວ ຍັງມີໄກ່
ແມ່ອີກ ໕໐ ຕົວ ໄກ່ຜູ້ຕົວ ໑ ແລະ ໝາທີ່ຊື່ສັດຮູ້ຈັກຄຸນນາຍອີກຕົວ ໑ ໃນຂນະ
ທີ່ພໍ່ນາກຳລັງນັ່ງຄຶດຕຶກຕອງຢູ່ວ່າຈະເຮັດແນວໃດດີນັ້ນ ກໍໄດ້ຍິນສຽງໝາເວົ້າປາ
ຣົບກັບໄກ່ຜູ້ວ່າ "ອ້າຍໄກ່ເອີຍ! ເຈົ້ານີ້ຄືຊິອາຍບໍ່ຍິນດອກ ຊາງບໍ່ຮູ້ຈັກອັບອາຍ
ຂາຍໜ້າຈັກດີ້ ມີແຕ່ຫົວທ່າປັ້ນປື້ນ້ຳນໍໄສ່ຕົວແມ່ຢູ່ຊູຍາມ ບໍ່ມີແລ້ງມີຝົນ ນົວເນົາຢູ່
ແຕ່ໃນຕັບທາ ເບິ່ງແຕ່ໃນມື້ນີ້ກໍຍັງເອົາຢູ່."

ໄກ່ໄດ້ຍິນໝາເວົ້າແດກດັນໃຫ້ດັ່ງນັ້ນ ຈຶ່ງຕອບດ້ວຍທ່າທາງມີສງ່າວ່າ
ໃຜຈະມາຫ້າມເຮົາໄດ້ ເຮົາມີຄວາມພໍໃຈຈະເຮັດແນວໃດອັນເປັນແນວທີ່ເຮົາ-

ນັກແລ້ວ ກໍບໍ່ເຫັນວ່າຜູ້ໃດຈະມີອຳນາດວ່າກ່າວຫ້າມຫອງເຮົາໄດ້ ທັງໃນວັນນີ້ ແລະວັນໃດກໍຕາມ.

ໝາຕອບໄກ່ວ່າ "ເອີ! ທີ່ເຈົ້າເວົ້າຈັ່ງຊີ້ຄືເຈົ້າຊິບໍ່ຮູ້ຈັກບໍ! ວ່າມື້ນີ້ ນາຍຂອງເຮົາເປັນທຸກໜັກເຕັມທີ ເພາະນາຍຜູ້ຍິງຂໍໃຫ້ນາຍຜູ້ຊາຍບອກຄວາມລັບຂໍ້ນຶ່ງໃຫ້ຟັງ ຄວາມລັບຂໍ້ນັ້ນ ຖ້າເພິ່ນບອກເວລາໃດເພິ່ນຕ້ອງຕາຍຕາມຄຳປະຕິຍານທີ່ມີໄວ້ ຂ້ອຍນີ້ຍ້ານວ່າ ເພິ່ນຊິອົດຄວາມອ້ອນວອນຂອງເມັຽບໍ່ໄດ້ - ໄກ່ເອີຍ! ຢ້ານນາຍຂອງເຮົາຕາຍເໜ້ ເຮັດແນວໃດເພິ່ນຊິຂັດໃຈເມັຽໄດ້ ເພາະດຽວນີ້ນ້ຳຕາເມັຽຂອງເພິ່ນເຮັດໃຫ້ເພິ່ນອຸກອັ່ງໃຈເຕັມທີ່ຢູ່ແລ້ວ ບໍ່ເຫິງ ເພິ່ນຄົງຕົກລົງໃຈຍອມຕາຍເພື່ອເອົາໃຈເມັຽ ຝ່າຍເຈົ້າ ຫືຍ! ມານົວແຕ່ປັ້ນ ປັ້ນມ້າງນໍໃສ່ເມັຽຢູ່ ສ່ວນເຮົາເປັນທຸກນຳເພິ່ນເກືອບຕາຍ ເຈົ້າຊ່າງບໍ່ອາຍເພິ່ນແທ້."

ໄກ່ໄດ້ຟັງດັ່ງນັ້ນ ຈຶ່ງເວົ້າລຽດນາຍຂອງມັນວ່າ ນາຍຂອງເຮົາ ມີຄວາມຮັກແພງເມັຽສິນເປັນເຈົ້າຊູ້ແທ້ດອກ ເຖິງກັບຈະຍອມຕາຍຍ້ອນນ້ຳຕາ-ຂອງເມັຽ ເປັນໜ້າຍ້ອງຍໍສັນລະເສີນເພິ່ນອີຫລີດອກ ແຕ່ຂ້າພະເຈົ້າຍັງສົງໄສວ່າການເອົາໃຈເມັຽແບບນີ້ ຖ້າເພິ່ນມີເມັຽຄົນດຽວກໍພໍເຮັດໄດ້ ແຕ່ຖ້າເພິ່ນມີເມັຽຢ່າງໜ້ອຍ ໖ ຄົນແລ້ວ ເພິ່ນຈະເອົາຊີວິດຊິໃດມາຕາຍແທນ-ຄວາມເສົ້າໂສກເສັຽໃຈຂອງເມັຽໄດ້ເຖິງ ໖ ເທື່ອ ເວົ້າກັນຕາມຈິງແລ້ວ ເພິ່ນມີເມັຽຜູ້ດຽວທີ່ນີ້ ຍັງບອກຫລັ່ງສັ່ງສອນກັນບໍ່ໄດ້ ຝ່າຍຂ້າພະເຈົ້ານີ້ມີເມັຽເຖິງ ໕໐ ກໍຍັງລ້ຽງເກືອໃຫ້ຢູ່ໃນໂອວາດຄຳສອນໄດ້ ເມັຽຂອງຂ້າພະເຈົ້າຢ້ານຂ້າພະ-ເຈົ້າໝົດ ຈະບອກສອນຢ່າງໃດຕ້ອງເຮັດນຳໃຈຂອງຂ້າພະເຈົ້າທຸກຢ່າງ ຖ້ານາຍຂອງເຮົາລ້ຽງເມັຽຂອງເພິ່ນເໝືອນຢ່າງຂ້າພະເຈົ້າລ້ຽງເມັຽຂອງຂ້າພະ

ເຈົ້າແລ້ວ ເພີ່ນຈະພົ້ນຈາກຄວາມຫຍຸ້ງຍາກໃຈໄດ້ຢ່າງງ່າຍດາຍ ໂດຍບໍ່ຕ້ອງມານັ່ງອຸກອັ່ງຢູ່ຢ່າງນີ້ເລີຍ.

ໝາຖາມວ່າ ຈະໃຫ້ນາຍເພີ່ນປະຕິບັດກັບເມັຽ ໄກ່ຕອບວ່າ "ກໍເອົາຄ້ອນອັນໃຫຍ່ໆຈັກໜ່ອຍຟາດເສັຽໃຫ້ສົມໃຈທີ່ນັ້ນ ຮັບຮອງວ່າເມັຽຂອງເພີ່ນຄົງຈະຮູ້ຈັກຜິດຈັກແມ່ນຂຶ້ນກວ່າເກົ່າເປັນແນ່ ທີ່ນັ້ນກໍບໍ່ຫານກຸກກວນໃຫ້ເພີ່ນໄຂ-ຄວາມລັບອີກຕໍ່ໄປດອກ"

ຝ່າຍພໍ່ນາ ນັ່ງຟັງຢູ່ ໄດ້ສະຕິຂຶ້ນມາກໍລຸກຂຶ້ນໄປຢິບເອົາຄ້ອນໃຫຍ່-ຄ້ອນນຶ່ງ ຍ່າງເຂົ້າໄປຫາເມັຽ ທີ່ກຳລັງຮ້ອງໃຫ້ສະອື້ນຢູ່ໃນບ່ອນນອນ ພໍໃສ່ໄລຫັກຕູແລ້ວ ກໍວາງຢາແກ້ໃຫ້ດ້ວຍໄມ້ຄ້ອນອັນສັກສິດນັ້ນທັນທີ ຕີເອົາຈົນໝຳໃຈ ເມັຽທົນຄວາມເຈັບບໍ່ໄດ້ ກໍຮ້ອງຂໍຍອມຈົນສຽງຫລົງ.

ນີ້ແຫລະລູກເອີຍ! (ທ່ານມະຫາອຳມາດເວົ້າກັບນາງຕັນໄຕ) ເຈົ້າກໍຄອນຄຶກພໍ່ຕີເສັຽເໝືອນດັ່ງເມັຽຊາວນານັ້ນແຫລະ ເຈົ້າຈຶ່ງຈະເຊົາເວົ້າພົ້ນ.

ນາງຕັນໄຕ ຕອບວ່າ ເຖິງແມ່ນລູກດື້ດ້ານເຫັນດີໃນເລື່ອງນີ້ຢູ່ ລູກກໍຈຳເປັນຂໍອະໄພນຳພໍ່ ຂໍພໍ່ຢ່າຖືຊາໝາຍຈະທຳໂທດແກ່ລູກເລີຍ ນິທານເລື່ອງ-ເມັຽຂອງພໍ່ນານີ້ ບໍ່ເຮັດໃຫ້ລູກເຊົາຄວາມຕັ້ງໃຈໄດ້ ຂໍພໍ່ຢ່າຂັດຂວາງຄວາມ-ປະສົງຂອງລູກ ເພາະເຖິງແມ່ນພໍ່ຂັດຂວາງ ບໍ່ຍອມພາລູກໄປຖວາຍແກ່ພຣະ-ເຈົ້າແຜ່ນດິນ ລູກກໍອາດໄປເອງໄດ້ ການທີ່ລູກປະສົງດັ່ງນີ້ ຂໍພໍ່ຢ່າໄດ້ຂັດໃຈ-ເລີຍ ໃນສຸດທ້າຍ ທ່ານມະຫາອຳມາດກໍຈົນປັນຍາ ຈຳໃຈເຂົ້າໄປເຝົ້າພຣະ-ເຈົ້າແຜ່ນດິນ ແລ້ວທູນວ່າ "ຂໍເດຊະ ໃນມື້ອື່ນນີ້ ນາງຕັນໄຕ ບຸດສາວຂອງ-ຂ້ານ້ອຍ ຈະມາຖວາຍຕົວເປັນບາທບໍຣິຈາຂອງພຣະອົງ" ພຣະຍາວິນະລະ ກໍປລາດພຣະໄທຖາມວ່າ ເຈົ້າຍອມເສັຽສະລະບຸດຕີຂອງເຈົ້າແທ້ຫລື? ມະຫາ-

ອຳມາດທູນວ່າ ເປັນຄວາມປະສົງຂອງບຸດຕີຂ້ານ້ອຍເອງ ໄພອັນໃຫຍ່ຫລວງທີ່ຈະເກີດແກ່ນາງໃນວັນຮຸ່ງຂື້ນນັ້ນ ນາງບໍ່ໄດ້ສະທ້ານເລີຍ ນາງອ້ອນວອນຂໍແຕ່ໃຫ້ໄດ້ມາເປັນບາດບໍຣິຈາສຂອງພຣະຄຸນເຈົ້າເໜືອຫົວ ແມ່ນພຽງຄືນດຽວກໍພໍໃຈ.

ພຣະຍາວິນະລະໄດ້ຟັງດັ່ງນັ້ນ ມີພຣະໄທສົງສານຢູ່ ຈຶ່ງຕັດເຕືອນສະຕິວ່າ ເຮົາໃຫ້ໂອກາດແກ່ທ່ານພິຈາຣະນາໃຫ້ຖີ່ຖ້ວນກ່ອນ ຖ້າເປັນຄວາມຕັ້ງໃຈຈິງແລ້ວ ເຮົາກໍບໍ່ປະຕິເສດ ແຕ່ທ່ານຢ່າລືມວ່າ ຄຳປະຕິຍານຂອງເຮົາຕ້ອງເປັນປະຕິຍານ ແລະທ່ານກໍຢ່າລືມວ່າ ທ່ານຕ້ອງເປັນຜູ້ປະທານຊາຍາ(໑)ຂອງເຮົາໃນຮຸ່ງຂື້ນທຸກໆຄືນ ຖ້າທ່ານຂັດຄຳສັ່ງ ກໍຈະຕ້ອງຕັດຄໍທ່ານເອງ ຮູ້ໄວ້!

ມະຫາອຳມາດທູນວ່າ ຂ້າພຣະບາດຍິນດີໃນພຣະມະຫາກະຣຸນາ-ເປັນອັນຍິ່ງ ທີ່ມີພຣະໄທສົງສານຂ້າພຣະບາດ ແລະ ບຸດສາວ ແຕ່ໄດ້ສິ້ນຕອງຄິດແລ້ວ ບໍ່ມີທາງທີ່ຈະແກ້ໄຂໄດ້ ເຖິງແມ່ນໃຈຂ້າພຣະບາດຈະສົງສານບຸດຕີເຫລືອທີ່ສຸດ ກໍຈະບໍ່ຂັດພຣະຣາຊບັນຊາເລີຍ ຂໍຖວາຍເປັນອາຈາສັດ.
ພຣະຍາວິນະລະຕັດວ່າ ເອີ! ຖ້າດັ່ງນັ້ນ ຈະພາລູກສາວມາໃນວັນໃດກໍໄດ້ ເຮົາຈະຮັບເອົາເປັນຊາຍາໃນວັນນັ້ນ ແຕ່ພຽງຄືນດຽວ.

ມະຫາອຳມາດທູນພຣະເຈົ້າແຜ່ນດິນແລ້ວກັບເມືອເຮືອນ ເລົ່າໃຫ້ລູກສາວຟັງ ນາງໄດ້ຍິນກໍມີຄວາມເບີກບານໃຈ ກ່າວຂອບຄຸນບິດາເປັນອັນ-ມາກ ແລະເອົ້າເລົ່າໂລມໃຈບິດາວ່າ ພໍ່ຢ່າໂສກເສົ້າເລີຍ ການທີ່ລູກໄດ້ເຂົ້າໄປເປັນບາດບໍຣິຈາ(໒)ຂອງພຣະເຈົ້າຢູ່ຫົວໃນຄາວນີ້ ຈະເຮັດໃຫ້ບິດາ

---

(໑)ເມັຽ (໒)ເມັຽ

ຫາຍຄວາມໂສກເສົ້າສລົດໃຈເປັນຢ່າງດີເລີດ ແລະພໍ່ຈະມີຄວາມສຸກກາຍ-ສະບາຍໃຈໄປຈົນຕລອດຊົ່ວອາຍຸຂອງພໍ່ ເມື່ອນາງກ່າວດັ່ງນັ້ນແລ້ວ ກໍຈັດແຈ່ງແຕ່ງເຄື່ອງຈະເຂົ້າໄປຖວາຍຕົວແກ່ພຣະເຈົ້າແຜ່ນດິນ ກ່ອນຈະອອກຈາກເຮືອນນາງໄດ້ຮຽກນ້ອງສາວມາສັ່ງວ່າ "ນ້ອງຮັກຂອງເອື້ອຍ ເວລານີ້ ເອື້ອຍຕ້ອງການຄວາມຊ່ອຍເຫລືອນຳນ້ອງຫລາຍ ນ້ອງຈົ່ງຕັ້ງໃຈຊ່ອຍເອື້ອຍແທ້ໆ ຢ່າມີຄວາມຢ້ານກົວແນວໃດ ຄື ເມື່ອພໍ່ພາເອື້ອຍເຂົ້າໄປຖວາຍພຣະເຈົ້າແຜ່ນດິນ-ແລ້ວ ເອື້ອຍຈະການທູນເພີ່ນ ຂໍຮັບເອົານ້ອງເຂົ້າໄປນອນຄ້າງຄືນນຳ ໃນບ່ອນຣາຊສິງຫາສນທີ່ທຳການອາວາຫະ ໃນເວລາຂ້ອນຄືນໄປແລ້ວໃຫ້ນ້ອງຄານເຂົ້າໄປປຸກເອື້ອຍ ເມື່ອປຸກເອື້ອຍຂຶ້ນແລ້ວ ໃຫ້ນ້ອງເວົ້ານຳເອື້ອຍວ່າ ເອື້ອຍເອີຍ! ຖ້າເອື້ອຍຕື່ນຢູ່ກໍຈົ່ງອີ່ດູເວົ້ານິທານໃຫ້ນ້ອງຟັງນ່ອນໆແດ່ ແລ້ວເອື້ອຍກໍຈະເວົ້ານິທານໃຫ້ນ້ອງຟັງ ຖ້ານ້ອງປະຕິບັດຕາມຄຳແນະນຳຂອງເອື້ອຍໄດ້ ເຮົາທັງສອງຈະໄດ້ປັດເປົ່າຄວາມໂສກເສົ້າເສັ້ງໃຈຂອງບິດາ ແລະອານາປະຊາຣາສ-ດອນທັງຫລາຍໄປໄດ້." ນາງວິໄລວັນ ກໍຮັບເອື້ອຍວ່າ ຈະປະຕິບັດນຳໄດ້ທຸກປະການ.

ຄັນເຖິງເວລາ ມະຫາອຳມາດກໍພານາງຕັນໄຕໄປຖວາຍພຣະເຈົ້າ-ແຜ່ນດິນໃນຫ້ອງບັນທົມ ແລ້ວກໍທູນລາກັບຄືນ ພຣະເຈົ້າແຜ່ນດິນໄດ້ທອດພຣະ-ເນດເຫັນນາງຕັນໄຕມີສີຣິລັກສະນະອັນງາມເລີດ ກໍມີພຣະໄທສເນຫາ ແຕ່ພໍເຫລືອບເຫັນນາງຮ້ອງໄຫ້ຟູມຟາຍນ້ຳຕາໄຫລອາບແກ້ມຢູ່ ຈຶ່ງຕັດຖາມ.

ນາງຕັນໄຕ ທູນວ່າ ຂ້ານ້ອຍມີນ້ອງສາວຢູ່ຄົນນຶ່ງ ມີຄວາມຮັກແພງກັນທີ່ສຸດ ແລະນາງກໍອາໄລນຳຂ້ານ້ອຍຫລາຍ ຂ້ານ້ອຍຄິດເຖິງນ້ອງສາວ ເປັນອັນສຸດວິໄສຈຶ່ງໄດ້ຮ້ອງໄຫ້ ສະນັ້ນ ຂໍພຣະອົງໄດ້ທົງອະນຸຍາດໃຫ້ນາງໄດ້ເຂົ້າມາ-

ນອນຄ້າງນຳຂ້ານ້ອຍໃນຄືນນີ້ດ້ວຍ ເພື່ອຈະໄດ້ສັ່ງລາກັນເປັນຄັ້ງສຸດທ້າຍ.

ພຣະຍາວິມະລະ ທົງອະນຸຍາດຕາມທີ່ນາງຂໍ ຈຶ່ງໃຫ້ມະຫາດເລັກໄປພານາງວິໄລວັນມາໃນຄ່ຳວັນນັ້ນ ເຖິງເວລາກາງຄືນພຣະຍາກໍສະເດັດຂຶ້ນແທ່ນບັນທົມຮ່ວມກັບນາງຈັນໄຕ ແລະອະນຸຍາດໃຫ້ນາງວິໄລວັນນອນແທບໃຕ້ຊ້າງແທ່ນນອນ.

ເຖິງເວລາເດິກປະມານໄກ່ຂັນກົກ ນາງວິໄລວັນກໍປຸກພີ່ສາວວ່າ ເອື້ອຍເອີຍ! ຖ້າເອື້ອຍຕື່ນຢູ່ຈົ່ງອີ່ດູນ້ອງ ເວົ້ານິທານມ່ວນໆໃຫ້ນ້ອງຟັງຈັກເຣື່ອງແດ່ ກ່ອນແຕ່ບໍ່ທັນແຈ້ງ ເພາະຄາວນີ້ເປັນຄາວສຸດທ້າຍແລ້ວທີ່ນ້ອງຈະໄດ້ຟັງນິທານມ່ວນໆຂອງເອື້ອຍ.

ນາງຕັນໄຕບໍ່ຕອບວ່າຢ່າງໃດ ລຸກຂຶ້ນກາບທູນພຣະເຈົ້າແຜ່ນດິນວ່າ ຂ້າແຕ່ພຣະອົງ ພຣະອົງຈະຊົງໂຜດໃຫ້ຂ້ານ້ອຍເວົ້າຕາມຄວາມຂໍ ຂອງນ້ອງສາວໄດ້ຫລືບໍ່? ພຣະຍາວິມະລະ ຕັດວ່າ ເຮົາພຣະອົງກໍມັກນິທານມ່ວນໆຢູ່ຄືກັນ ຖ້ານິທານທີ່ເຈົ້າຈະເວົ້ານີ້ມ່ວນອີຫລີແລ້ວ ກໍຢາກຈະຟັງ ຈົ່ງເວົ້າເຖີ້ນ

ນາງຕັນໄຕມີຄວາມຍິນດີເປັນອັນມາກໃນອຸບາຍທີ່ຕົນຄິດໄວ້ຈະເປັນຜົນ ສຳເຣັດຕາມຄວາມມາດໝາຍ ແລ້ວນາງກໍຕັ້ງຕົ້ນເວົ້ານິທານ ເຣື່ອງງົວນັນທະອຸສຸພະຣາດ ກັບຣາຊສີ ເປັນສ່ຽວກັນ ດັ່ງຕໍ່ໄປນີ້:-

ແຕ່ປາງກ່ອນ ມີເສດຖີຄົນນຶ່ງ ຊື່ ທັມມະປາລະ ຢູ່ໃນນະຄອນປຸດຕິຍະ ແຫ່ງປະເທດທັກສິນາບົດ ທ່ານເສດຖີເປັນຄົນຮັ່ງມີ ອຸດົມສົມບູນດ້ວຍຊັບສິ່ງຄານເກືອບທຸກຢ່າງ ແຕ່ປານນັ້ນກໍຍັງບໍ່ອີ່ມພໍໃນການຄ້າຂາຍ ທ່ານມັກເດີນທາງໄປຄ້າຂາຍໃນເມືອງໄກໆສເມີ ດ້ວຍພາຫະນະກວຽນເປັນຈຳນວນມາກ ແລ້ວຊື້ສິນຄ້າຈາກເມືອງນັ້ນ ກັບຄືນມາຂາຍໃນເມືອງຂອງຕົນ ໃນບັນດາງົວກວຽນທັງຫລາຍຂອງເສດຖີນັ້ນ ມີງົວຕົວນຶ່ງ ຊື່ນັນທະກະ ເປັນງົວ

ມຸນ ໄດ້ຊ່ອຍເຫລືອທ່ານເສດຖີໃນກິຈການຄ້າມາຈົນແກ່.

ຄັນທ່ານເສດຖີຈັດຊື້ສິນຄ້າໄດ້ຫລາຍແລ້ວ ກໍບັນທຸກໃສ່ກອງຽນໄປຂາຍທີ່ ປະເທດກັສມີຣະ ແລະໄດ້ເອົາງົວບັນທະກະໃສ່ກອງຽນໄປນຳ ເມື່ອຈາກເມືອງ ໄປໄດ້ຫລາຍມື້ເຖິງປ່າໃຫຍ່ແຫ່ງນຶ່ງ ເປັນທີ່ກັນດານຫ່າງຈາກບ້ານຜູ້ເມືອງຄົນ ງົວບັນທະກະເຫັນປ່ານັ້ນເປັນໜ້າຊື່ນຊົມ ອຸດົມໄປດ້ວຍຫຍ້າແລະປ່າໄມ້ນາໆຊນິດ ມີຫ້ວຍນ້ຳໄຫລມາຈາກພູໃສສະອາດ ແລະປັກຂີຊາດທັງຫລາຍກໍຮ້ອງຂານຂັນຢູ່-ຊື່ອແຊ່ວທື່ວໄປ ບັນທະກະໄດ້ຮັບຄວາມລຳບາກຢາກນ້ຳແລະຫຍ້າ ເປັນກຳລັງຈຶ່ງ ຄຶດຮ່ຳເພິງໃນໃຈວ່າ ອັນເສດຖີຊື່ທັມມະປາລະ ນາຍເຮົາຄົນນີ້ ມີຊື່ວ່າທັມມະ-ປາລະລ້າໆ ແຕ່ຈິດໃຈຂອງມັນບໍ່ມີທັມເລີຍ ເບິ່ງດູ! ຕົວກູໄດ້ຊ່ອຍພາຣະມັນມາ ແຕ່ຍັງໜຸ່ມ ຈົນມັນຕັ້ງຕົວໄດ້ເຖິງຂັ້ນມະຫາເສດຖີແລ້ວ ມັນກໍຍັງບໍ່ເຊົາໃຊ້ງານກູ ແລະບໍ່ຮູ້ຈັກຄຸນກູດ້ວຍ ທຸກໆປີກູຕ້ອງໃຊ້ຄໍດັນແອກຂົນສິນຄ້າໃຫ້ມັນຈົນຄໍໂປກ ທັງ ໃນທາງກັນດານຢ່າງນີ້ ມັນກໍບໍ່ປົດປ່ອຍໃຫ້ກູພັກແຮງກິນນ້ຳກິນຫຍ້າເສັຽເລີຍ ບັດນີ້ກູກໍແກ່ເຖົ້າແລ້ວ ຈະເອົາເຫື່ອແຮງຊິໃດມາດັນແອກໃຫ້ມັນຜູ້ອະກະຕັນຍູໃຈ ໂຫດຮ້າຍນີ້ໄຫວ ຄຶດຮ່ຳເພິງດັ່ງນີ້ແລ້ວ ບັນທະກະກໍທຳອຸບາຍພິດີລົ້ມເຈັບລົງ ພວກຄົນຂັບກອງຽນເຫັນດັ່ງນັ້ນ ຈຶ່ງແລ່ນໄປບອກເສດຖີທັມມະປາລະໆລົງຈາກ-ກຽນເຫລັ້ມໜ້າກັບຄືນມາເບິ່ງ ເຫັນອາການງົວບັນທະກະເປັນໜັກ ທັງເສດຖີກໍ ຟ້າວໄປໃຫ້ພົ້ນຈາກດົງໃຫຍ່ກ່ອນຕາເວັນຕົກດິນ ຈຶ່ງສັ່ງໃຫ້ເອົາງົວຕົວອື່ນ ມາ ທຽມກອງຽນເຫລັ້ມນັ້ນແທນ ແລ້ວບອກລູກແຫລ້ງໃຫ້ເຝົ້າເບິ່ງອາການຂອງງົວບັນ ທະກະຢູ່ ພ້ອມກັບສັ່ງວ່າ ຖ້າຕາຍກໍໃຫ້ຈັດການເຜົາເສັຽ ກະບວນກອງຽນຂອງ-ທັມມະປາລະກໍຟ້າວເດີນທາງຕໍ່ໄປ.

ເມື່ອກະບວນກອງຽນລັບຕາໄປແລ້ວ ລູກແຫລ້ງເສດຖີ ໔ ຄົນທີ່ຢູ່ເຝົ້າ-

ງົວນັ້ນ ປຶກສາກັນວ່າ ທີ່ນີ້ເປັນປ່າຮົກດົງໜາ ເພີນພີຜີປ່າກໍມີມາກ ເຮົາຈະຢູ່ຈັ່ງໃດໄດ້ ນາຍພອກເຮົາຈັດການຫາພືນມາເຜົານັ້ນເສັຽ ແລ້ວພ້າວອອກໄປຈາກປ່າໃຫ້ພົ້ນແຕ່ເວລາຕາເວັນຍັງບໍ່ທັນຕົກນີ້ເທາະ ຕົກລົງກັນແລ້ວແຫລ້ງເລດຖືກໍພ້າວແຍກຍ້າຍກັນໄປຕາພືນ .ນັນທະກະໄດ້ໂອກາດດັ່ງນັ້ນ ກໍລຸກຂຶ້ນແລ່ນໜີເຂົ້າປ່າ ໄກຈາກທີ່ຕົນພົດລົ້ມນັ້ນເປັນອັນມາກ; ນັນທະກະອາໄສຢູ່ໃນປ່ານັ້ນຕລອດມາຫລາຍເດືອນ .ໄດ້ກິນຫຽ້າບົວອື່ມໜຳສຳຣານ - ແລະ ບໍ່ຖືກໃຊ້ງານໜັກກໍອ້ວນພີ ມີກຳລັງແຂງແຮງທ້າວຫານຂຶ້ນ ຈຶ່ງສົ່ງສຽງຮ້ອງກ້ອງໄປທົ່ວທັງປ່າ.

ໃນປ່ານັ້ນ ມີຣາຊສີຕົວນຶ່ງ ຊື່ຈັນທະປິງຄະລະ ເປັນພຣະຍາແກ່-ເນື້ອທັງຫລາຍ ພຣະຍາຣາຊສີຈັນທະປິງຄະລະ ມີໝາລອງຕົວເປັນມຸນຕີ ຕົວນຶ່ງຊື່ ອະສຸພາຄຍະ ຕົວນຶ່ງຊື່ ທະມະນະ ມື້ນຶ່ງ ພຣະຍາປິງຄະລະຢາກນ້ຳ ຈຶ່ງອອກຈາກຖ້ຳໄປ ພໍເຖິງທ້ອຍນ້ຳ ໄດ້ຍິນສຽງຮ້ອງກ້ອງສນັ່ນ ຂອງງົວນັນທະກະປະດຸຈດັ່ງປ່ານັ້ນຈະທະລາຍໄປ ກໍຕົກໃຈກົວລືມຢາກນ້ຳ ແລ່ນກັບຄືນມາຖ້ຳຂອງຕົນ ຢືນສັ່ນຢູ່ກັບບ່ອນ ແລ້ວງວາກໄປມາ ເພື່ອຢາກຮູ້ວ່າແມ່ນອີຫຽັງແທ້ ໝາລອງຕົວທີ່ເປັນມຸນຕີຂອງຣາຊສີ ເຫັນອາການຂອງນາຍດັ່ງນັ້ນ ໝາຕົວທີ່ຊື່ວ່າ ອະສຸພາຄຍະ ຈຶ່ງເວົ້າຄ່ອຍໆກັບໝາຊື່ ທະມະນະວ່າ "ທະມະນະ! ມີເຣື່ອງຫຽັງນໍ! ນາຍຂອງເຮົາຢາກນ້ຳ ຍັງບໍ່ທັນໄດ້ກິນ ກໍແລ່ນຕາເຫລືອກກັບມາ."

ທະມະນະ ຕອບແວໄປທາງນຶ່ງວ່າ "ທ່ານອະສຸພາຄຍະເອີຍ! ໜ້າທີ່ຂອງເຮົາໃນເວລານີ້ ບໍ່ຊູ້ເພາະສາແລ້ວ ເຮົາຄອນຫລົບຫລີກໄປເສັຽ. ດີກວ່າຖ້າຄອຍຮັບໃຊ້ ເພາະວ່າ ເຖິງແມ່ນເຮົາຈະເຮັດດີປານໃດ ກໍບໍ່ໄດ້

ຮັບຮາງວັນຄວາມຊອບຈັກໜ່ອຍ ເພີ່ນມັກເຄີຍເຄັງ ບໍ່ຫລຽວແລເຮົາເລີຍ!

ຂ້າພຣະເຈົ້າເຫັນວ່າ ((ຄົນຜູ້ທີ່ຄອຍອາໄສແຕ່ໃຫ້ນາຍໃຊ້ ຍ່ອມໄດ້ຮັບຄວາມລຳບາກຕາກແດດທົນຝົນ ຄົນຜູ້ທີ່ປະພຶດບໍ່ກ່ຽວຂ້ອງກັບໃຜ ມີແຕ່ເພີ່ງໂຕເອງນັ້ນ ມີຕົນແກຊີວິດຫລາຍ ຄົນທີ່ເພີ່ງແຕ່ຜູ້ອື່ນຈຶ່ງຢູ່ເປັນຄົນໄດ້ນັ້ນ ຄືກັນກັບຄົນຕາຍ. ຄຳສັ່ງທີ່ບັງຄັບວ່າ ມານີ້, ນັ່ງລົງ, ລຸກຂຶ້ນ, ເອົາ, ມິດ ເຫລົ່ານີ້ ເປັນຄຳຂອງຄົນມີເງິນເວົ້າກັບ ຕໍ່ຊາຕາຕິກທີ່ແບກໜ້າເຂົ້າໄປເພິ່ງເຂົາໂດຍຢາກໄດ້ຊັບ. ຄົນໂງ່ທີ່ມົວແຕ່ແຕ່ງໂຕແລ້ວແຕ່ງໂຕອີກ ສຳຫລັບໃຫ້ນາຍໃຊ້ເພື່ອວາຍໄດ້ຂອງນາຍ ກໍຄືກັນກັບແມ່ເລງທີ່ແຕ່ງໂຕເພື່ອຊາຍອື່ນ. ບ່າວທີ່ນອບນ້ອມເພື່ອໃຫ້ນາຍມີທ່າອຶງລັງ, ສະລະຊີວິດຂອງຕົນເພື່ອໃຫ້ນາຍບໍ່ຕາຍ ອົດທົນລຳບາກເພື່ອໃຫ້ນາຍມີຄວາມສຸກສຳຣານ; ຈະມີຜູ້ໃດໂງ່ກວ່າບ່າວ-ແບບນີ້ອີກບໍ່? ອິດສາມິດ ບໍ່ປາກ ຫາວ່າໂງ່, ເວົ້ານຳຫລາຍ ຫາວ່າ ຖແລງແປງຄວາມ, ຍອມອ່ອນຫລາຍ ຫາວ່າຂີ້ຢ້ານ, ຟ້າວຟັ່ງນຳຫາວ່າບໍ່ສຸພາບ, ຄອຍຮັບໃຊ້ຢູ່ໃກ້ ຫາວ່າຕົ້ງລອບ, ຢູ່ໄກຈັກໜ່ອຍ ຫາວ່າຫລົບລີ້ສ້ອງໃຊ້ບໍ່ທັນໃຈ; ໜ້າຍຽກຂອງບ່າວເຫລືອເຕັມທີ ເຖິງໃຫ້ມີຄວາມສາມາດປານພຣະໂຍຄີ(໑) ກໍບໍ່ປະຕິບັດໃຫ້ເຖິງໃຈນາຍໄດ້ຄົບຖ້ວນ))".

ອະນຸພາດຍະ ກ່າວຄັດຄ້ານວ່າ "ເພື່ອນເອີຍ! ຂໍ້ທີ່ສູ່ເວົ້າມານີ້ - ພຽງແຕ່ຄິດໃນໃຈກໍບໍ່ສົມຕອນທຸກປະການ, ເປັນຫຍັງ? ຄົນເຮົາຈຶ່ງບໍ່ພັກດີຕໍ່ເຈົ້ານາຍຜູ້ໃຫຍ່ ເພາະວ່າ ເມື່ອເພີ່ນຮັກທຸນແລ້ວ ກໍໄດ້ສົມຄວາມປະສົງທຸກ

---

(໑) ພຣະໂຍຄີ ແມ່ນພຣະອີສວນເຈົ້າແຫ່ງຜີ ຫລືພຣະເຈົ້າແຫ່ງສາສນາພາມ

ຢ່າງ ໂດຍບໍ່ນານເລີຍ."

ພຣະນະນະຕອບວ່າ "ເຖິງຈັ່ງຊັ້ນກໍດາມ ເຮົາຍັງເຫັນວ່າ ເສັຽເວລາລ້າ ໃນການທີ່ເຮົາຮ້ອງເອງໃຫ້ຄົນອື່ນ, ການຂເນີເຂົ້າໄປຮັບໜ້າທີ່ໃນວົງການຂອງຄົນອື່ນ ອັນບໍ່ແມ່ນວົງການຂອງຕົນ ມີແຕ່ຄວາມເສັຽຫາຍເປັນພື້ນ". ອະນຸພາຄຍະ ເວົ້າຢູ່ຄວາມເກົ່າວ່າ "ເຖິງຢ່າງນັ້ນກໍຕາມ ໜ້າທີ່ປ່າວຄວນເບິ່ງແຍງເອົາໃຈໃສ່ ໃນວົງການຂອງນາຍຂເນີ" ພຣະນະນະ ຕຽງວ່າ "ໃຜເປັນປະທານມຸນຕີ ມີໜ້າທີ່ໃຫ້ສຳເຣັດກິຈການທັງປວງ, ໃຫ້ເຂົາເປີດໄປກໍແລ້ວກັນ, ໜ້ອຍບໍ່ຄວນຍື່ນມືເຂົ້າໄປສອດໃນໜ້າວົງການຂອງເຂົາ ຂໍໃຫ້ເບິ່ງຕົວຢ່າງຫຼືພະຍາຍາມເຂົ້າໄປກ່ຽວຂ້ອງໃນໜ້າທີ່ວົງການຂອງນາຍ ເພື່ອຢາກໃຫ້ເຂົາໄດ້ດີ ຕ້ອງໄດ້ຮັບຄວາມເດືອດຮ້ອນເໝືອນລິງດຶກດີ." "ເຣື່ອງເປັນຈັ່ງໃດ? ອະນຸພາຄຍະຖາມ.

ພຣະນະນະ ຈາຣະໄນ:-.

ນິທານແອັນທີ ໑

<u>ເຣື່ອງ ໝາ ກັບ</u> ລິ

ຊ່າງຊັກເສື້ອຄົນນຶ່ງ ຊື່ ກັບປຸຣະປັດ ຢູ່ໃນເມືອງພາຣານະສີ ວັນນຶ່ງ ປອກເນັ່ງສາວຕາລີນຢູ່ເຕົ່ງເດີນ ແລ້ວກໍພາກັບເຂົ້ານອນຫລັບຈົນແຈບ ເດີກຈັກໜ່ອຍມີກະໂມຍຄ່ອຍຢ່ອງເຂົ້າມາຈະລັກຂອງ ຢູ່ເດີນນັ້ນມີລິງຕົວນຶ່ງ ທີ່ເຈົ້າຂອງຜູກໄວ້ກັບຫລັກ ແລະ ໝາອີກຕົວນຶ່ງນອນຢູ່ນຳກັນ, ລິງເຫັນກະໂມຍເຂົ້າມາຈຶ່ງເວົ້າກັບໝາວ່າ "ເອີ້ຍ! ນີ້ແມ່ນໜ້າທີ່ຂອງເຈົ້າ! ເຫດໃດເຈົ້າຈັ່ງບໍ່ເຫົ່າ ເພື່ອໃຫ້ນາຍຕື່ນ" ໝາຕອບວ່າ "ເຈົ້າບໍ່ຕ້ອງສອດເຂົ້າມາຫຍຸ້ງໃນເຣື່ອງຂອງຂ້ອຍ; ເຈົ້າຮູ້ບໍ່ວ່າ ຂ້ອຍເຝົ້າເຮືອນໃຫ້ທໍ່ນີ້ຢ່າງໃດ ເຂົາມີຄວາມສຳບາຍມາເຫິງ ເລີຍບໍ່ຮູ້ຈັກຄຸນຂອງຂ້ອຍ,

ຫຼັກອັນນີ້ ພຽງແຕ່ຈະໃຫ້ອາຫານກິນກໍມັກເສີຍໆລືມໆ ທັນນະດານາຍ ຖ້າຍັງບໍ່ປະສົບເຫດການທີ່ພາໃຫ້ຕົກໃຈ ກໍມັກລືມພອກລູກນ້ອງ".

ລິເຄົາ "ຟັງແດ່ປ້າກຮ່າ! ຜູ້ທີ່ຮ້ອງຂໍຮາງວັນໃນຂນະທີ່ຕົນເຮັດວຽກຕາມໜ້າທີ່ ຈະຮຽກວ່າ ເປັນບ່າວເຂົາໄດ້ຢ່າງໃດ? ຈະວ່າເປັນມິດສະຫາຍແບບໃດ?"

ໜາຄານຄືນ: "ຜູ້ທີ່ບໍ່ໃຫ້ຮາງວັນແກ່ບ່າວ ໃນຂນະທີ່ເຂົາເຮັດວຽກຕາມໜ້າທີ່ ຈະຮຽກວ່າເປັນນາຍແບບໃດ ເພາະວ່າໃນການລ້ຽງເກືອຜູ້ນ້ອຍທີ່ມາຂໍໃສ່ຢູ່ນຳ ໑ ໃນການຕອບແທນຄຸນນາຍ ໑ ໃນການປະຕິບັດທັມ ໑ ແລະໃນການອອກລູກ ໑ ສີ່ປະການນີ້ ຈະຢືມມືຂອງຄົນອື່ນເຮັດບໍ່ໄດ້".

ລິຄຽດ "ເຮີຍ! ປ້າກຊື່ ປະປ່ອຍໜ້າທີ່ຂອງຕົນເສັຽແລ້ວ ຊ່າງຫົວມັນເທາະ ກູຈະເຮັດໃຫ້ນາຍຕື່ນຈົນໄດ້ ເພາະຜູ້ມີບອກ ຄອນບູຊາດາເວັນ-ທາງເບື້ອງຫລັງ, ບູຊາພຣະເພີງດ້ວຍເບື້ອງທ້ອງ, ບູຊານາຍທັງກາຍແລະໃຈ, ປະຕິບັດທັມເພື່ອຊີວິດໜ້າ ດ້ວຍຄວາມບໍ່ມີມາຍາ" ວ່າແລ້ວ ຄໍກໍຮ້ອງຂັ້ນຈົນສຸດສຽງດັງກ້ອງບ້ານ; ເວລານັ້ນ ຊາງຊັກເສື້ອກໍລັງນອນຫລັບແຈບ ໄດ້ຍິນສຽງລິກໍສະດຸ້ງຕື່ນ ມີຄວາມຄຽດໃຫ້ລິບໍ່ມີຫຽັງທີ່ ຄວາໄດ້ຄ້ອນຕະໂບ້ງຂນາດໃຫຍ່ ແລ້ວກໍລົງໄປຕີລິສຸດແລ້ວແຕ່ຈະຖືກບ່ອນໃດ ຟາດເອົາເສັຽຈົນຂັ້ແຕກ.

ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ ບໍ່ຄວນເຂົ້າໄປກ່ຽວຂ້ອງໃນວຽກການຂອງຄົນອື່ນອັນບໍ່ແມ່ນໜ້າທີ່ຂອງຕົນ, ການຕິດຕາມຮາຊສົມບາຍຂອງເຮົາເພື່ອຈັບສັດມາເປັນອາຫານ ເປັນໜ້າທີ່ຂອງເຮົາພໍແລ້ວ ແລະອາຫານທີ່ຈັຍ-ໄດ້ວານນີ້ເຫລືອຢູ່ເປັນກີ ກິນແຕ່ທີ່ເຫລືອນັ້ນໄປກ່ອນກໍໄດ້.

ອະນຸພາຄຍະ ເຄືອງ: "ນີ້ແມ່ນເພື່ອນທຳການຕອບແທນຄຸນນາຍ ມີຫວັງແຕ່ກິນທີ່ນັ້ນບໍ! ເວົ້າງ່າຍໆຈັ່ງຊີ້ບໍ່ສິນຄອນເປັນບ່າວເລີຍ."

ທະມະນະ ຖາມ: "ຊັ້ນຊິເຮັດແນວໃດ?"

ອະນຸພາຄຍະ ຕອບ: "ຮວ້າຍ! ດຽວນີ້ນາຍເຮົາຢາກນ້ຳ ໄປເຖິງຝັ່ງຫ້ວຍແລ້ວ ຍັງບໍ່ທັນໄດ້ກິນ ຕົກໃຈແນວໃດບໍ່ຮູ້ພ້າວແລ່ນມາ."

ທະມະນະ: "ເອີ! ຈັ່ງໃດໂຕຈັ່ງຮູ້?"

ອະນຸພາຄຍະ: "ອັນໃດແດ່ທີ່ຜູ້ເປັນບັນດິດຈະບໍ່ຮູ້, ສຸພາສິດເພິ່ນວ່າ ຖ້ອຍຄຳທີ່ເວົ້າອອກມາ ແມ່ນປະສຸສັດ(໑)ຍັງໝາຍຮູ້ໄດ້: ຄື ຊ້າງ ມ້າ ທີ່ແອບເຟີກແລ້ວ ເມື່ອບອກກໍເຄື່ອນຍ້າຍໄປຕາມ; ອັນຄົນຜູ້ເປັນບັນດິດຍ່ອມຮູ້ທັນຄົນ ເຖິງແມ່ນເຂົາບໍ່ທັນແຍ້ມອອກກໍຕາມ, ປັນຍາອັນສັຽມແຫລມເປັນທາງໃຫ້ຫຍັ່ງຮູ້ເຖິງໃນໃຈ ຈາກອາການອັນເໜັງຕີງຂອງຄົນອື່ນ."

ກິຣິຍາພາຍນອກ, ການຍິວຣະຍາດ, ການເໜັງຕີງ, ການເວົ້າປືປາຍ, ການເລືອດຕາ, ຫລື ບຸ້ຍສີບ ເຫລົ່ານີ້ເປັນທາງໃຫ້ສ່ອງຮູ້ເຖິງໃຈ ເພາະສະນັ້ນ ເວລານີ້ ເປັນເວລາທີ່ນາຍຕົກໃຈ ຈຶ່ງເປັນໂອກາດທີ່ຄວນເຮັດໃຫ້ນາຍພາຍໂພດໄດ້ຢ່າງໃຫຍ່ ເພິ່ນຍັງວ່າ:—

"ສົນທະນາໃຫ້ຖືກກັບເວລາ, ປານີໃຫ້ຕ້ອງກັບໃຈມັກ, ຮ້າຍໃຫ້ສົມກັບອຳນາດຂອງຕົນ; ຜູ້ໃດຮູ້ຈັກເຮັດດັ່ງນີ້ ຜູ້ນັ້ນເປັນນັກປາດ."

ທະມະນະ ຖາມ: "ສ່ຽວເອີຍ! ໂຕຍັງບໍ່ເຂົ້າໃຈໜ້າທີ່ປະຕິບັດ-ການ"ຈຶ່ງສັງເກດດັ່ງນີ້:—

ຜູ້ໃດ ນາຍບໍ່ໄດ້ຮຽກ ແບ້ແຕ້ລເບີໜ້າເຂົ້າໄປຫາ, ນາຍຍັງບໍ່ທັນຖາມ ເວົ້າລອນລານຖແລງຈົນຟັງບໍ່ທັນ, ຍົກຍໍຕົວເອງວ່າເປັນຄົນຮັກແພງ

---

(໑)ປະສຸສັດ ແມ່ນສັດລ້ຽງ ດັ່ງ ຊ້າງ ມ້າ ງົວ ຄວາຍ ເປັນຕົ້ນ.

ຂອງນາຍ ເຮົາວ່າ ຜູ້ນັ້ນ ປັນຍາຜູ້."

ອະນຸພາຄຍະ ຕອບ: "ສ່ຽວເອີຍ! ເຮົາຈະບໍ່ຮູ້ຫນ້າທີ່ອັນຄວນປະຕິ-ບັດນາຍຢ່າງໃດ ຈົ່ງສັງເກດເບິ່ງ:-

ສິ່ງໃດແດ່ ທີ່ທັມມະຊາດຂອງມັນເອງ ຈະບອກວ່າງາມ ຫລື ບໍ່ງາມ ສິ່ງໃດຖືກໃຈຂອງຜູ່ໃດ ສິ່ງນັ້ນກໍເປັນຂອງງາມສຳຫລັບຜູ່ນັ້ນ:

ຜູ້ມີປັນຍາຕ້ອງຮຽນຮູ້ຈິດໃຈຂອງຄົນ ທີ່ສະແດງອອກມາດ້ວຍອາການພາຍນອກ ແລ້ວປະຕິບັດໃຫ້ຖືກໃຈໄດ້ທຸກທ່າ:

ເມື່ອໄດ້ຍິນສຽງຖາມວ່າ ໃຜນັ້ນ? ຄວນຂານຕອບວ່າ ຂ້າພະເຈົ້າ ແລ້ວບອກຕໍ່ໄປວ່າ ຕ້ອງການຫຍັງ ເຊີນບອກມາທັງໝົດ: ໜ້າທີ່ຜູ່ຮັບໃຊ້ ຕ້ອງປະຕິບັດຕາມຄຳສັ່ງຂອງນາຍຈົນສຸດສາມາດ:

ຜູ້ສັນໂດດ ມີໃຈໜັກ, ມີປັນຍາ ທັນຕາມຄຳສັ່ງໂດຍບໍ່ຊັກຊ້າ, ຄົນລັກສະນະນີ້ ຈຶ່ງຢູ່ໃນຣາຊສຳນັກ(໑)ໄດ້."

ພະນະນະ ຖາມ: "ຕີລາງວ່າ ນາຍບໍ່ພໍໃຈ ໃນການທີ່ໝູ່ແບ້ແຕ້ເຂົ້າໄປຫາ ໃນເວລາບໍ່ຄວນ ຈະວ່າຢ່າງໃດ?"

ອະນຸພາຄຍະ ຕອບ: "ກໍອາດເປັນໄດ້ ແຕ່ເຖິງຈັ່ງຊັ້ນ ບ່າວຄວນຢູ່ຮັບໃຊ້ນາຍໂດຍແທ້ ເພາະວ່າ ການບໍ່ກ້າເຮັດຫຍັງ ຍ່ອມຍ່ານຜິດ ອັນນີ້ເປັນລັກສະນະຂອງຄົນໂງ່: ເຈົ້ານາຍຜູ້ໃຫຍ່ ມັກຕາຍໂຕດພໍໃຈແກ່ຄົນຢູ່ໃກ້ ເຖິງແມ່ນຈະບໍ່ມີຄວາມຮູ້, ສະກຸນຕ່ຳ, ແລະກິຣິຍາຫຍາບ ກໍຕາມ ດັ່ງດຽວກັນກັບສັດຕີ ແລະ ເຄືອເຂົາ ມັກກ່ຽວພັນກັບຂອງທີ່ຢູ່ໃກ້ສເນີ."

---

(໑) ຣາຊສຳນັກ ແມ່ນວັງພຣະເຈົ້າແຜ່ນດິນ.

ທະມະນະ ຖາມ: "ຈັ່ງຊັ້ນ ໂຕຈະເຂົ້າໄປຫານາຍ ຈະເວົ້າວ່າຢ່າງໃດ?" ອະນຸພາຄຍະ ຕອບ: "ອ້າວ! ຕ້ອງເບິ່ງທ່າທາງກ່ອນແໜ! ວ່າເພິ່ນ ກະຣຸນາ ຫລືບໍ່?" ທຳຢ່າງໃດຈຶ່ງຈະຮູ້ຈັກອາການຂອງນາຍໄດ້? ທະມະນະ ຖາມ.

ອະນຸພາຄຍະ ຕອບ: "ເຫລືອດສາຍຕາມາຮັບແຕ່ໄກ, ຍຸ້ມຫົວພໍຄວນ, ເວົ້າຄວາມເກົ່າທີ່ເຄີຍສນິດຮັກແພງຂຶ້ນມາ, ຮັກແພງໃນຜູ້ທີ່ບໍ່ໄດ້ຮັບໃຊ້, ເອື້ອເຟື້ອກວ້າງຂວາງ ແມ່ນທຳຜິດ ກໍຕື່ມຄວາມຮັກໃຫ້ຄິດເຫັນຄວາມດີແຕ່ກ່ອນ ເຫລົ່ານີ້ ເປັນລັກສະນະຂອງນາຍຜູ້ມີໃຈກະຣຸນາ; ໃຊ້ບໍ່ມີເວລາ ລີ້ໃຫ້ມີຫວັງຢູ່ສເມີ(ແຕ່ບໍ່ໄດ້), ຂີ້ຖີ່ອາງວັນ ເຫລົ່ານີ້ ເປັນລັກສະນະຂອງນາຍຜູ້ມີໃຈສາມານ; ນາຍໃຈດີ ໂທດເປັນຄຸນ ນາຍໃຈຂີ້ໂທດ ຄຸນເປັນໂທດ ນາຍຍຸດຕິທັມ ໂທດເປັນໂທດ ຄຸນກໍເປັນຄຸນ ການຄາດຄະເນດູ ລັກສະນະຂອງນາຍ ມີ ໓ ປະການດັ່ງນີ້."

ທະມະນະ ຖາມ: "ແມ່ນຢູ່ດອກ ແຕ່ວ່າ ເມື່ອຍັງບໍ່ເຖິງເວລາ ອັນຄວນເວົ້າ ກໍຢ່າເວົ້າ ເພາະເວົ້າບໍ່ຖືກເວລາ ເຖິງແມ່ນພຣະພຣຶຫັສບໍດີ ຜູ້ເກັ່ງກ້າໃນທາງສີປາກ ກໍຍັງຖືກຕິວ່າ ບໍ່ມີຄວາມຄິດ".

ອະນຸພາຄຍະ ຕອບ: ຊັ້ນ ຜູ້ຢ່າວິຕົກເລີຍ ຄຳທີ່ບໍ່ສົມຄວນກັບເວລາ ຂ້າພະເຈົ້າບໍ່ເວົ້າດອກ, ແຕ່ເຖິງຄາວສົມຄວນແລ້ວຖ້າຂ້າພະເຈົ້າບໍ່ຮ້ອງຮຽນສເນີຄວາມເຫັນຕາມເຫດທີ່ມີ ຕໍ່ແໜ່ງເສນາບໍດີຂອງຂ້າພະເຈົ້າ ກໍບໍ່ມີປໂຍດ ດັ່ງນີ້ຂ້າພະເຈົ້າຈຶ່ງຈຳເປັນຕ້ອງເຂົ້າໄປເຝົ້ານາຍ."

---

(໑)ພຣະພຣຶຫັສບໍດີ ຖືວ່າເປັນພຣະຣິສີຜູ້ເປັນຍອດນັກປາດ.

ທະນະບະ ວອຍພອນວ່າ: "ຂໍຈົ່ງເປັນຜົນສໍາເຣັດຕາມປະສົງເຖີ້ນ." ອະນຸພາຄຍະ ຮັບພອນຂອງເພື່ອນແລ້ວ ກໍເຂົ້າໄປຫາຣາຊາປິງຄະລະໂດຍອາການນອບນ້ອມ.

ຣາຊາປິງຄະລະ ທັກຂຶ້ນວ່າ: "ເອີ ເຫິງນານແລ້ວບໍ່ເຫັນໜ້າເຈົ້າ."

ອະນຸພາຄຍະ ທູນຕອບ: "ຂ້ານ້ອຍຢູ່ເປັນປ່າວ ບໍ່ສູ້ມີປໂຍດອັນໃດຈັກໜ່ອຍທີ່ຝ່າພຣະບາດ ແຕ່ເຖິງດັ່ງນັ້ນ ເຖິງຄາວສົມຄວນແລ້ວຂ້ານ້ອຍຢູ່ວາໄສໃພເພົ່ງ ກໍຕ້ອງເຂົ້າມາເຝົ້າ, ຂ້າແຕ່ພຣະຣາຊາ ພຽງແຕ່ຫຽ້າ ແລະ ໄມ້ ພຣະອົງເອົາໃຊ້ຈີ້ມແຂ້ວ ຫລືແຄະຂີ້ຫູ ສ່ວນຄົນມີທັງກາຍ ວາຈາ ແລະ ໃຈ ຈະບໍ່ໃຄກ່ວາຫຽ້າ ແລະໄມ້ແດ່ບໍ່! ເຖິງແມ່ນວ່າ ຂ້ານ້ອຍຈະຫ່າງເຫີນບໍ່ໄດ້ມາເຝົ້າເປັນເວລານານ ຈົນພຣະບາດເປັນເຈົ້າລືງໄລ ກໍຕາມ ແຕ່ເຫດການນັ້ນມີເພາະວ່າ :

"ແກ້ວມະນີເອົາໄປປະດັບຕີນ, ແກ້ວແວ່ນເອົາໄວ້ເທິງຫົວ ເມື່ອຈະຊື້ຂາຍກັນ ແກ້ວແວ່ນກໍມີຣາຄາທີ່ແກ້ວແວ່ນທັມມະດາ ແກ້ວມະນີ ກໍມີຣາຄາທີ່ແກ້ວມະນີ.

ຜູ້ມີນິໄສນັ້ນຄົງ ແຕ່ຂາດປັນຍາ ແມ່ນຈະປະພຶດກິຣິຍາຫຽາບ ຈະຖືເອົາເປັນອາຈິນ ກໍຍັງບໍ່ໄດ້, ແປວໄຟ ເຖິງແມ່ນຈັບປີ້ນລົງ ກໍບໍ່ທົ່ງລົງລຸ່ມເລີຍ

ຂ້າແຕ່ເທ ອະທັມມະດາຢູ່ເປັນນາຍ ຄວນມີຄວາມຮູ້ຈັກ ລັກສະນະພິເສດຢູ່ທຸກເວລາ ເພາະວ່າ :

ເມື່ອໃດພຣະຣາຊາ ທົງຈັດການບໍາຄົບທຸກພວກສເນີກັບພິດ ບໍ່ໃຫ້ແຕກຕ່າງ (ດີກັບຊົ່ວທໍ່ກັນ) ເມື່ອນັ້ນ ອານຸພາບອັນເປັນກໍາລັງຂອງກິຈການທັງຫລາຍກໍເຊື່ອມຖອຍ.

ຂ້າແດ່ພຣະອາຊາ ບຸຣຸດ(໑)ມີ ໓ ຂັ້ນ ຄື ສູງສຸດ, ຜ້ານກາງ, ແລະ ຕ່ຳ ສະນັ້ນ ຄວນເລືອກໃຊ້ໃຫ້ຖືກຕາມຊະນິດຂອງງານທັງສາມລະຖານ.

ຄົນໃຊ້ ກໍດີ ເຄື່ອງເອ້ ກໍດີ ຕ້ອງປະກອບໃຫ້ຄວນແກ່ຖານະ ດັ່ງ ປິ່ນເກົ້າ ຈະເອົາລົງໄປປະດັບຕີນ ຫລື ກ້ອງຂາຈະເອົາມາປະດັບຫົວ ກໍບໍ່ຄວນ.

ແກ້ວມະນີອັນມີລາຄາແພງ ຄວນປະດັບກັບທອງຄຳ ຈະເອົາໄປປະດັບກັບແຫວນຂີ້ກົ່ວ ກໍຈະບໍ່ມີແສງເລີຍ.

ຍົກເອົາແກ້ວແວ່ນຂຶ້ນປະດັບມຸງກຸດ, ເອົາແກ້ວມະນີລົງມາປະດັບກ້ອງຂາ; ອັນນີ້ບໍ່ແມ່ນຄວາມຜິດຂອງແກ້ວມະນີ ແຕ່ຫາກເປັນຄວາມຜິດ - ຂອງຜູ້ໃຊ້ນັ້ນເອງ ແມ່ນບໍ່ຮູ້ຈັກຫຍັງເລີຍ.

ຄົນນັ້ນມີປັນຍາ, ຄົນນັ້ນຊື່ສັດ, ຄົນນັ້ນດີທັງສອງຢ່າງ; ພຣະກະສັດຜູ້ສລາດເລືອກຂ້າໃຊ້ດັ່ງນີ້ ຍ່ອມບໍ່ອຶບຸນດ້ວຍເສວະກາມາດ(໒)ທີ່ທະຣົງຄຸນ.

ມ້າ, ສາດຕາ(໓), ໜັງສື, ພິນ, ຖ້ອຍຄຳ, ຊາຍ, ຍິງ; ຈະໃຊ້ໄດ້ດີ ຫລື ບໍ່ດີ ແລ້ວແຕ່ວິທີຂອງຜູ້ໃຊ້.

ຊາຫຍັງກັບຜູ້ມີຄວາມພັກດີ(໔) ແຕ່ບໍ່ມີຄວາມສາມາດ, ຊາຫຍັງກັບຜູ້ມີຄວາມສາມາດ ແຕ່ຄອຍຂັດຂວາງເປັນສັດຕູ; ຂ້າແດ່ອາຊະ ຂ່ອນ ຂ້າພຣະບາດມີທັງຄວາມພັກດີ ແລະສາມາດ ບໍ່ຄວນທີ່ພຣະບາດຈະດູແຄວນ

(໑)ຄົນ, ຜູ້ຊາຍ (໒)ອາມາດຜູ້ຮັບໃຊ້, ຂ້າຣາຊການ (໓)ຫອກດາບ

(໔)ຊື່ສັດຕໍ່.

ອັນວ່າ ພຣະຣາຊາຜູ້ມີບີໄລດູແຄວນຄົນ ກໍຈະມີແຕ່ຄົນຊົ້ນອຶດປັນຍາເປັນບໍລິວານ ສະນັ້ນ ພຣະອົງກໍຈະຂາດຜູ້ມີສະຕິປັນຍາເປັນທີ່ປຶກສາ; ເມື່ອຣາຊອານາຈັກເວັ້ນຈາກຜູ້ມີປັນຍາແລ້ວ ປະສາສະໂນບາຍ(໑)ກໍເຊື່ອມ, ທາງປະສາສະໂນບາຍເຊື່ອມແລ້ວ ປະເທດກໍຫລົ້ມຈົມ.

ປະຊາຊົນພົລເມືອງຍ່ອມໂຄຣົບຢຳແຢງຄົນຜູ້ທີ່ພຣະຣາຊາຍ້ອງຍໍ, ຜູ້ໃດຖືກພຣະຣາຊາດູແຄວນເສັງແລ້ວ ຜູ້ນັ້ນ ກໍຖືກເຂົາດູແຄວນທຸກໜ້າ.

ຖ້ອຍຄຳທີ່ເວົ້າຖືກຕ້ອງດີ ແມ່ນເດັກນ້ອຍເວົ້າ ຄົນມີປັນຍາຕ້ອງຖື-ເອົາ; ເມື່ອຍັງບໍ່ເຫັນແສງຕາເວັນ ແສງຕະກຽງກໍຈະໃຊ້ບໍ່ເປັນປໂຍດໄດ້-ຫລື?

ຣາຊາປິງຄະລະ ຖາມ: "ເອີ! ທ່ານອະນຸພາຄຍະ ເວົ້າຫຍັງຫື? ເຈົ້າກໍເປັນລູກຜູ້ມີປັນຍາແຫ່ງປະທານອາມາດຂອງເຮົາຢູ່ ຖືກໃຜເວົ້າຂວັບ-ນິນທາທໍ ຈຶ່ງຖິ້ມປະລະເລີຍບໍ່ສູ່ມາຫາເຮົາ? ຈຶ່ງບອກມາດຽວນີ້."

ອະນຸພາຄຍະ ຕອບຢ່າງກ້າຫານວ່າ: "ເທວະ ເມື່ອປະທານໂອ-ກາດໃຫ້ເວົ້າດັ່ງນີ້ ຂ້ານ້ອຍກໍຂໍຖາມ ຄື: ພຣະບາດເປັນເຈົ້າມີຄວາມປະສົງຈະໄປດື່ມນ້ຳ ແຕ່ບໍ່ທັນໄດ້ດື່ມກໍກັບມາ ເໝືອນວ່າມີຄວາມຕົກໃຈອັນໃດຈັກຢ່າງໜຶ່ງ".

ຣາຊາປິງຄະລະ: "ເອີ! ແມ່ນຄວາມເຈົ້າ, ດຽວນີ້ ຂ້າພະເຈົ້າສັງເກດເຫັນວ່າ ໃນປ່າທີ່ເຮົາຢູ່ນີ້ ໄດ້ມີສັດປລາດເຂົ້າມາຢູ່ແລ້ວ, ສຽງມັນຮ້ອງດັງພິລຶກໜ້າຢ້ານແທ້ ເຈົ້າກໍຄົງໄດ້ຍິນເໝືອນກັນ, ເມື່ອຄະເນເບິ່ງຕາມສຽງຮ້ອງແລ້ວ ອ້າຍນັ້ນຄົງຕົວໃຫຍ່ ມີກຳລັງມະຫຶມາເຕັມທີ ສະນັ້ນເຮົາມາ

---

(໑)ຣະບຽບການປົກຄອງ, ການເມືອງ.

ພາກັນອົບພະຍົບໜີຈາກປ່ານີ້ເທາະ."

ອະນຸພາຄະຍະ ທູນ: "ເທາະ ອັນນີ້ເປັນເຫດໃຫ້ໜ້າວິຕົກຢູ່ ສຽງນັ້ນ ຂ້ານ້ອຍກໍໄດ້ຍິນຄືກັນ, ແຕ່ບູໃດ ພຽງແຕ່ໃນເທື່ອທີແຣກ ຍັງບໍ່ທັນສິ້ນ ຕອງໃຫ້ຖີ່ຖ້ວນ ກໍທູນແນະນໍາໃຫ້ພຣະພູບໍດີ(໑)ລະອາຊີນບັດໂລດ ຫລືໃຫ້ ຕ້າງທໍາສົງຄາມ ຢູ່ນັ້ນ ບໍ່ນັບເປັນນຸບຕິ(໒)ເລີຍ."

ອາຊີ ເວົ້າວ່າ: "ອະນຸພາຄະຍະເອີຍ! ເຮົາມີຄວາມວິຕົກຫລາຍ ຈະທໍາປະການໃດດີ?"

ອະນຸພາຄະຍະ ຄິດໃນໃຈວ່າ "ເທັນຈະຢ້ານອີ່ຫລີເວີ້ຍ!" ຈຶ່ງເວົ້າ ອັບຮອງນໍາອາຊີວ່າ: "ເທາະ ຕາບໃດຂ້າພະເຈົ້າຍັງມີຊີວິດຢູ່ ຕາບນັ້ນ ພຣະບາດເປັນເຈົ້າບໍ່ຄວນວິຕົກ ຂໍແຕ່ໃຫ້ບຸດໝູນບໍາໃຈຂອງທະນະບະ ແລະ ບໍລິວານອື່ນໆໄວ້ກໍແລ້ວກັນ." ວ່າແລ້ວ ອະນຸພາຄະຍະ ກໍອອກມາຫາ ທະ-ນະບະໆຈຶ່ງເວົ້າວ່າ: "ເພື່ອນເອີຍ! ເຫດທີນຕື້ນປາຍຂອງໄພນີ້ ຈະແກ້ໄຂໄດ້ ຫລື ບໍ່ໄດ້ ກໍຍັງບໍ່ຮູ້ ໂດນາອັບຮອງກ່ອນເທົ່ານີ້ ກໍໜ້າຢ້ານຢູ່."

ອະນຸພາຄະຍະ ຫົວແລ້ວຕອບວ່າ: ອ້າຍສຽວເອີຍ! ໂດບໍ່ຕ້ອງເວົ້ານິດລາ! ເຮົາຮູ້ເລື່ອງນີ້ດີແລ້ວ ຄື ງົວພະລິພັດ(໓) ນັ້ນອ້ອງຄະນອງທີ່ນັ້ນ ຊາດພືສພະ(໔)ນັ້ນເປັນອາຫານແຊບຂອງເຮົາ ສໍາຫລັບອາຊີແລ້ວ ຈະບໍ່ຍິ່ງດີໄປອີກຫລື?"

ທະນະບະ: "ອ້າວ! ຖ້າຈັ່ງຊັ້ນ ເປັນຫຍັງບໍ່ບອກນາຍ ກໍາຈັດ ຄວາມຢ້ານຂອງນາຍໃຫ້ຫາຍເສັຽໃນເວລານັ້ນໂລດບໍ່ດີຫລື?"

---

(໑)ເຈົ້າແຜ່ນດິນ (໒)ທີ່ປຶກສາ, ອັຄມົນຕີ(໓)ງົວພະລິພັດ: ງົວເຖິກໃຫຍ່-(ສ. ພລີພັທທ) (໔)ພືສພະ: ງົວ (ສ. ພຣືສພະ)

ອະສຸພາຄຍະ ຕອບ: "ໂຫ້! ຖ້າໄປບອກກ່ອນແລ້ວ ເຮົາຈະໄດ້ຮັບຮາງວັນຫລື? ອີກປະການນຶ່ງ ເພິ່ນວ່າ ບໍ່ຄວນເຮັດໃຫ້ນາຍພົ້ນຈາກການເພິ່ງບ່າວເລີຍ ເພາະຖ້າເຮັດໃຫ້ເພິ່ນພົ້ນເພິ່ງແລ້ວ ບ່າວກໍຈະເປັນຄືນຄືແມວ ຊື່ ທະທິກັນ ນັ້ນແຫລະ."

ທະມະນະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະສຸພາຄຍະ ເລົ່ານິທານ:

ນິທານແອັມທີ ປ

ເຣື່ອງ ແມວ ກັບ ຮາຊສີ

ຮາຊສີ ຊື່ ມະຫາວິກົມ ອາໄສຢູ່ພູອັນພຸຫລວງຂອນ ໃນປ່າອຸດຣາບົດ ເມື່ອນອນຢູ່ໃນຖ້ຳ ມີໜູຂຶ້ນໄປແຫັນຂົນສ້ອຍຄໍ ຮາຊສີຕື່ນຂຶ້ນ ເຫັນຂົນສ້ອຍຄໍ-ຂາດ ກໍມີຄວາມຄຽດຈະຄຸບໜູແຕ່ບໍ່ທັນ ໜູແລ່ນລົງຫລືບຫີນໄປ ຮາຊສີຈຶ່ງມານອນຄຶດຢູ່ວ່າ: ເຮັດຢ່າງໃດໜໍ! ມີຄຳພາສິດບົດນຶ່ງວ່າ "ຜູ້ໃດຈະປາບສັດຕູເລັກນ້ອຍດ້ວຍຄວາມກ້າຫານບໍ່ສຳເຣັດ ເມື່ອປະສົງຈະປາບໃຫ້ໄດ້ ກໍຕ້ອງຫາຜູ້ທີ່ມີສົມເປັນຄູ່ປາບກັນ, ຊ່າງໄມ້ ເມື່ອຖາກໄມ້ຕ້ອງໃຊ້ຂວານ ແຕ່ເມື່ອຈະຫຍິບຜ້າຕ້ອງໃຊ້ເຂັມ." ເມື່ອຄຶດດັ່ງນີ້ແລ້ວ ຈຶ່ງອອກໄປຫາບ້ານຄົນ ກໍໄປພົບແມວຕົວນຶ່ງ ຊື່ ທະທິກັນ ຈຶ່ງຊວນມາຢູ່ນຳໂດຍສັນຍາຈະໃຫ້ກິນຢ່າງດີເປັນອາຫານ, ຕັ້ງແຕ່ແມວມາຢູ່ນຳຮາຊສີ ໜູກໍບໍ່ກ້າມາຫາກິນ ຮາຊສີບໍ່ຖືກໜູມາກຸກກວນ ກໍນອນເປັນສຸກສະບາຍ ຖ້າຮາຊສີໄດ້ຍິນສຽງໜູເທື່ອໃດ ກໍຕື່ນຮາງວັນໃຫ້ແມວຫຼາຍໆເທື່ອ ເຫິງມາ ໜູອົດອາຫານ ອົດຮົນທົນບໍ່ໄດ້ ກໍອອກມາຫາກິນ ແມວເຫັນກໍເຕັ້ນຄຸບເອົາໄປກິນເສັຽ ຄັນຮາຊສີບໍ່ໄດ້ຍິນສຽງໜູ - ນັບວ່າໝົດສັດຕູແລ້ວ ບໍ່ຕ້ອງການໃຊ້ແມວອີກຕໍ່ໄປ ກໍເລີຍບໍ່ເອົາໃຈໃສ່.../.

ໃນການໃຫ້ອາຫານແກ່ແມວ ເພາະຈັ່ງຊັ້ນ ຂ້າພະເຈົ້າຈຶ່ງວ່າ " ບໍ່ຄວນ-ເຮັດໃຫ້ນາຍພົ້ນຈາກການເພິ່ງບ່າວ....ໆ" ວ່າແລ້ວໝາຈອກທັງສອງ ກໍພາກັນອອກໄປຫາງົວບັນທະກະ ໝາທະມະນະ ທຳທ່າສະງ່າຜ່າເຜີຍ ນັ່ງຢູ່ແຄມກົກໄມ້ ແລ້ວ ອະນຸພາຄຍະຈຶ່ງເວົ້ານຳງົວບັນທະກະວ່າ: "ເຮີຍ..! ທ່ານງົວ ຮູ້ບໍ! ຂ້າພະເຈົ້ານີ້ເປັນເຈົ້າໜ້າທີ່ອັນພຣະຣາຊາປິງຄະລະຕັ້ງໃຫ້ເປັນຜູ້ເບິ່ງແຍງປ່າ ທ່ານເສນາບໍດີທະມະນະ ໃຫ້ຂ້າພະເຈົ້າມາບອກທ່ານໃຫ້ໄປຫາໂດຍໄວ ຖ້າບໍ່ໄປຈຶ່ງໜີຈາກປ່ານີ້ ໃນດຽວນີ້ ບໍ່ດັ່ງນັ້ນທ່ານຈະໄດ້ຮັບຄວາມຜິດ."

ງົວບັນທະກະບໍ່ຮູ້ທຳນຽມຂອງປະເທດ ໄດ້ຟັງດັ່ງນັ້ນ ກໍມີຄວາມຢ້ານ ຍ່າງເຂົ້າໄປຫາໝາທະມະນະ ສະແດງຄວາມໂຄຣົບແລ້ວ ເວົ້າວ່າ: ຂໍແຕ່ທ່ານເສນາ ຂໍໄດ້ກະຣຸນາບອກຂ້າພະເຈົ້າວ່າ ຈະໃຫ້ຂ້າພະເຈົ້າທຳຢ່າງໃດ?

ທະມະນະ ບອກວ່າ: "ເມື່ອທ່ານປະສົງຈະຢູ່ໃນປ່ານີ້ຕໍ່ໄປ ທ່ານຈຶ່ງໄປອ່ອນນ້ອມຕໍ່ຣາຊາປິງຄະລະ ຜູ້ເປັນນາຍຂອງເຮົາ."

ງົວບັນທະກະ ເວົ້າວ່າ: "ເມື່ອທ່ານສັນຍາວ່າຈະບໍ່ທຳອັນຕຣາຍໃຫ້ແກ່ຂ້າພະເຈົ້າແລ້ວ ຂ້າພະເຈົ້າກໍຈະໄປ."

ທະມະນະ ຮັບຮອງວ່າ: "ທ່ານບໍ່ຕ້ອງຢ້ານໃນຂໍ້ນັ້ນ ເພາະວ່າທັມມະດາລົມພາຍຸ ຈະບໍ່ຫັກຫານກໍຫຍ້າ ແລະ ໄມ້ອໍ້ທີ່ໂອນອ່ອນໄປຕາມ - ແຕ່ຍ່ອມຫັກຫານທຳລາຍຕົ້ນໄມ້ທີ່ສູງລື່ນໃດ ຜູ້ມີອິດທານຸພາບຍິ່ງໃຫຍ່ ຍ່ອມບໍ່ຫັກຫານຜູ້ນ້ອຍລົບນັ້ນ"

ວ່າແລ້ວ ສອງສະຫາຍກໍພາງົວບັນທະກະເຂົ້າໄປຫາຣາຊສີ....

ໃຫ້ງົວເຊົາຢູ່ແຕ່ໄກ ແລ້ວຕົນເອງເຂົ້າໄປຫາຣາຊາປົງຄະລະ.

ປົງຄະລະ ຖາມວ່າ: "ເຫັນງົວມັນແລ້ວບໍ່!" ວະສຸພາຄຍະ ຕອບວ່າ: "ເຫັນແລ້ວ ຕາມທີ່ພຣະບາດເປັນເຈົ້າໄດ້ຍິນສຽງມັນ ເປັນການຄືນຈິງ ເພາະອ້າຍນັ້ນ ງົວໃຫຍ່ມະຫືມາ(໑) ໜ້າຢ້ານແທ້ ຂ້າພະເຈົ້າໄດ້ແນະນຳມັນ ບັດນີ້ມັນຍາກມາເຝົ້າພຣະບາດເປັນເຈົ້າ ຂໍໃຫ້ຈັດການຮັບຮອງໄວ້ ແຕ່ເຖິງຢ່າງໃດກໍຕາມ ພຽງແຕ່ໄດ້ຍິນສຽງກໍຢ່າພ້າວຢ້ານ ເພາະທັມມະດາ ຝາຍກັ້ນນ້ຳ ຍ່ອມຂາດພັງທະລາຍຍ້ອນກະແສນ້ຳເຊາະ, ຂໍ້ປຶກສາທີ່ບໍ່ອາບັງກໍລັບດຽວກັນ, ມິດພາບອັນສນິດຍ່ອມແຕກມ້າງຍ້ອນການສັບສໍ່, ຄົນຂີ້ຢ້ານຍ່ອມແຕກຕື່ນຍ້ອນພຽງແຕ່ໄດ້ຍິນສຽງ.

ເມື່ອຍັງບໍ່ໄດ້ພິຈາຣະນາຫາເຫດ ພຽງແຕ່ໄດ້ຍິນສຽງກໍຢ່າພ້າວຢ້ານ ນາງໂສເພນີ(໒) ເມື່ອລາວໄດ້ພິສູດ(໓)ມູນເຫດຂອງສຽງໄດ້ຈຶ່ງໄດ້ຮັບຄວາມຍ້ອງຍໍນັບຖືຈາກຊາວເມືອງ."

ຣາຊາປົງຄະລະ ຖາມ: "ເຣື່ອງເປັນຢ່າງໃດ?"

ວະສຸພາຄຍະ ຖແລງ:

ນິທານແວ່ນທີ ໒

ເຣື່ອງນາງໂສເພນີ

ທີ່ພູສີ ອັນຢູ່ໃກ້ນະຄອນພົມບູຣີ ມີສຽງລືກັນວ່າ ເທິງຈອມພູນັ້ນ ມີຜີຮ້າຍຕົວນຶ່ງ ຊື່ ຄັນຕາກັນ(໔) ອາໄສຢູ່.

ເຣື່ອງເດີມມີວ່າ "ໂຈນຄົນນຶ່ງ ໄດ້ລັກເອົາກະດິງໃຫຍ່ຂອງວັດນຶ່ງ-

---

(໑) ໃຫຍ່ຫລາຍ(໒) ຍິງແມ່ຈ້າງ(໓)ພິສູຈນ໌, ເບິ່ງໃຫ້ຄັກ(໔) ກະດິງ.

ໄປ ເວລາພອນເດີນທາງມາເຖິງພູສີ ເລີຍຖືກເສືອຂົບຕາຍ,ໝູ່ລິງທີ່ອາໄສ
ຢູ່ໃນພູສີນັ້ນ ນາໄດ້ກະດິງໄປ ກໍພາກັນຊຸ້ນຫລິ້ນສເນີ. ເລື່ອງທີ່ເສືອຂົບຄົນ
ຕາຍນັ້ນ ກໍມີຄົນຮູ້ຢູ່ ທັງເມື່ອໂຈນຕາຍແລ້ວ ກໍຍັງໄດ້ຍິນສຽງກະດິງດັງຢູ່
ຊາວເມືອງພາກັນຢ້ານກົວອັນຕະລາຍມາກ ຈົນແຕກເມືອງໜີ ຕໍ່ມາມີຍິງໂສ
-ເພນີ ຄົນນຶ່ງ ຊື່ ກະຣາໄລ ໄດ້ສືບສວນຄັກແນ່ແລ້ວວ່າ ສຽງນັ້ນ ແມ່ນ
ສຽງກະດິງທີ່ລິງຊຸ້ນ ຈຶ່ງສເນີເລື່ອງແກ່ພຣະຣາຊາຂອງເມືອງນັ້ນ ຂໍອາສາ
ໄປຕາບຕີ ຊື່ຄັນຕາກັນ ໃຫ້ສໍາເຣັດ ພຣະຣາຊາມີຄວາມຍິນດີປະທານເງິນ
ຄໍາໃຫ້ນາງຕາມທີ່ນາງຂໍແລ້ວ ນາງກໍພິທີໄປທໍາການບູຊາເທພດາຢູ່ເທິງພູ-
ນັ້ນ ແຕ່ທີ່ແທ້ ນາງໄດ້ຊື້ເອົາໝາກໄມ້ທີ່ລິງມັກໄປຖິ້ມເຮັ່ງຮວາຍໄວ້ໃນປ່າ
ພໍລິງເຫັນໝາກໄມ້ ກໍວາງກະດິງລົງມາກິນໝາກໄມ້ ນາງກະຣາໄລຖືໄດ້ກະ
ດິງ ແລ້ວກໍພ້າວກັບມາເມືອງ ແຕ່ນັ້ນມາສຽງກະດິງທີ່ຄົນທັງຫລາຍເຂົ້າໃຈ
ວ່າແມ່ນສຽງຜີຄັນຕາກັນຮ້ອງໄຫ້ນັ້ນ ກໍມິດໄປ ແລະ ນາງກໍໄດ້ຮັບຄວາມ-
ນັບຖືຈາກຄົນທັງຫລາຍ"ທີ່ນັ້ນເອງ! ເພາະຈັ່ງຊັ້ນ ຂ້າພະເຈົ້າຈຶ່ງວ່າພຽງ
ແຕ່ໄດ້ຍິນສຽງ ກໍຢ່າພ້າວຢ້ານ.

ໝາຈອກວະສຸພາຄຍະ ເວົ້າທີ່ນີ້ ແລ້ວ ກໍອອກໄປ
ພາງົວນັນທະກະເຂົ້າມາຫາຣາຊສີ ແລະຕໍ່ນັ້ນມາ ຣາຊສີກັບງົວກໍໄດ້ເປັນ-
ສະຫາຍຮັກແພງສນິດສນົມກັນຢູ່ເປັນສຸກສໍາຣານໃນປ່ານັ້ນສືບມາສັງງກາລະ
ນານ ແຕ່ມິຕພາບອັນສນິດສນົມຂອງຣາຊສີກັບງົວນັ້ນ ໃນກາລະຕໍ່ມາ ກໍຖືກ
ໝາຈອກວະສຸພາຄຍະມຸນຕີ ທໍາລາຍເສັ່ງຈົນສອງສະຫາຍນັ້ນໄດ້ຮັບຄວາມພິ
-ນາດ.

ນາງຕັນໄດ ເວົ້ານິທານຮອດບ່ອນນີ້ ກໍພໍດີເປັນເວລາແຈ້ງສວ່າງ

ນາງຈຶ່ງລົມກັບນ້ອງສາວວ່າ: "ນ້ອງອິໄລວັນເອີຍ! ນິທານຕອນຕໍ່ໄປ ໃນເຣື່ອງພາຈອກວະສຸພາຄຍະລັບສົ່ງຫງົ່ຍິງໃຫ້ ງົວ ກັບ ຣາຊສີ ແຕກກັນນັ້ນ ຍັງຢູ່ຫລາຍ ແລະ ມ່ວນກວ່າທີ່ເວົ້າມາແລ້ວນີ້ ຖ້າເອື້ອຍຫາກມີອາຍຸຍືນຕໍ່ໄປອີກຈັກຄືນນຶ່ງ ເອື້ອຍຈະເວົ້າໃຫ້ຟັງຈົນສຸດ ແຕ່ວາສນາຊາຕາຂອງ-ເອື້ອຍ ເຫັນຈະສຸດລົງພຽງໃນວັນນີ້ແລ້ວ ຄົງຈະບໍ່ໄດ້ເຫັນໜ້າຂອງນ້ອງແລະບໍ່ໄດ້ເວົ້ານິທານໃຫ້ນ້ອງຟັງອີກຕໍ່ໄປ."

ຝ່າຍພຣະຍາວິມະລະ ນອນຟັງນິທານຂອງນາງຕັນໄຕຢູ່ ຄິດຊື່ນມ່ວນໃນພຣະໄທ ພໍໃຈໃນນິທານຂອງນາງເປັນອັນມາກ ຈຶ່ງທົງຮຳເພິງວ່າ: ຈະໃຫ້ນາງຢູ່ອີກຕໍ່ໄປອີກຄືນນຶ່ງ ເພື່ອໃຫ້ນາງໄດ້ເວົ້ານິທານພໍສຸດ ແລ້ວຈຶ່ງຈະໃຫ້ຂ້າເສັຽ, ຮຳເພິງດັ່ງນີ້ແລ້ວ ກໍສະເດັດອອກຈາກທີ່ບັນທົມ ສົງສນານຄັນທະວາຣີ(໑) ແລ້ວກໍສະເດັດອອກສນາມນ່ອນປະຊຸມອຳມາດ.

ຝ່າຍມະຫາອຳມາດຜູ່ເປັນບິດາຂອງນາງຕັນໄຕ ແຕ່ໃນກາງຄືນ-ກໍນອນບໍ່ຫລັບຕລອດຄືນ ເພາະເປັນຫ່ວງນຳລູກ ຕື່ນເຊົ້າມາແຮ່ງທຸກໃຈຫລາຍໃນການທີ່ຕົນເອງຈະໄດ້ເປັນຜູ່ປະຫານບຸດຕີຂອງຕົນເອງ ແຕ່ພໍຂຶ້ນໄປເຝົ້າ-ພຣະເຈົ້າແຜ່ນດິນ ກໍບໍ່ເຫັນພຣະເຈົ້າແຜ່ນດິນຕັດສັ່ງແນວໃດ ຈົນເຖິງເວລາເລີກສນາມ ທ່ານມະຫາອຳມາດຈຶ່ງມີຄວາມເບົາໃຈ.

ເຖິງຄືນທີສອງ ເວລາຂ້ອນຊິແຈ້ງ ນາງອິໄລວັນ ກໍປຸກເອື້ອຍຂຶ້ນ-ໃຫ້ເວົ້ານິທານໃຫ້ຟັງດັ່ງຄືນກ່ອນ, ນາງຕັນໄຕລຸກຂຶ້ນ ທູນຂໍອະນຸຍາດນຳພຣະຍາ ແລ້ວຈຶ່ງເຮົ້ານິທານເຣື່ອງງົວນັນທະກະ ກັບ ຣາຊສີປີງຄະລະ ທີ່ຖືກພາຈອກຍຸຍົງໃຫ້ແຕກກັນຕໍ່ໄປວ່າ:

ຢູ່ມາວັນນຶ່ງຣາຊສີ ຊື່ ສະດັບທະກັນ ພີ່ຊາຍຂອງຣາຊສີປີງຄະລະ

(໑) ອາບນ້ຳຫອມ.

ນາຍານ ປິງຄະລະຈຶ່ງອອກໄປຫາເນື້ອນາລ້ຽງພີ່ຊາຍ, ງົວບັນທະກະເຫັນດັ່ງນັ້ນ ຈຶ່ງຖາມປິງຄະລະວ່າ: "ໂຍ້ອ! ສັດທີ່ທ່ານຂ້າມານີ້ເຊົ້ານີ້ ໄປໃສຜິດ"

ຣາຊາປິງຄະລະ ຕອບ:"ອະນຸພາຄຍະ ແລະ ທະນະນະ ນັ້ນແຫລະ ເປັນຜູ້ຈັດການຜິດ"

ບັນທະກະ ວ່າ: "ໂອ! ຈັ່ງຊັ້ນກໍບໍ່ຄວນແລ້ວ ອ້າຍສອງຕົວນັ້ນມັນກິນຫລາຍປານນັ້ນແທ້ຫລື?"

ຣາຊສີຕອບ: "ກໍກິນແດ່ ໃຫ້ຕົວອື່ນແດ່ ເຊີເຊີນເປຊັ້ນແຫລ້ວ!"

ບັນທະກະວ່າ: "ເປັນຫຽງມັນມາເຮັດຕາມໃຈ ໂດຍບໍ່ໄດ້ຮັບອະນຸຍາດດັ່ງນີ້ ໂພດລາດອກ! ເຊີເຊີນເກີນໄປ"

ຣາຊາປິງຄະລະ ຕອບ: "ໂອຍ! ມັນເປັນຈັ່ງຊັ້ນເອງຜິດທຸກອັນນັ້ນແຫລະ"

ບັນທະກະ ວ່າ: "ຖ້າຈັ່ງຊັ້ນກໍບໍ່ສົມຄວນຫລາຍ ເພີ່ນຍັງບອກສອນວ່າ: ບ່າວຄົນໃດ ເມື່ອຍັງບໍ່ໄດ້ຄອບໃຫ້ນາຍຮູ້ກ່ອນແລ້ວກໍບໍ່ຄວນເຮັດສິ່ງໃດຕາມໃຈ ເວັ້ນແຕ່ເຮັດເພື່ອປ້ອງກັນເຫດຮ້າຍ ອັນຈະເກີດແກ່ນາຍ ທີ່ນັ້ນ; ຂ້າແຕ່ພຣະຣາຊາ ອາມາດຄວນມີລັກສະນະຄືໝໍ້ນ້ຳຂອງອີສີ ຄືເວລາຫງ່ຽນ ໃຫ້ໄຫລອອກແຕ່ໜ້ອຍ ເວລາຖອກໃສ່ໃຫ້ຂັງໄວ້ໄດ້ຫລາຍ, ຜູ້ໃດເວົ້າວ່າ ຊາຫຽງກັບເງິນອັດດຽວ ຜູ້ນັ້ນ ເປັນຄົນໄຮ້ຊັບ, ຜູ້ໃດຄອຍຕື່ມແຖມ-ພຣະຣາຊຊັບ ແມ່ນພຽງແດງດຽວທຸກໆອັນ ຜູ້ນັ້ນເປັນອາມາດທີ່ດີແທ້.... ເພາະຄັງເປັນຫົວໃຈຂອງທ້າວພຣະຍາ; ປະການນຶ່ງ ຊາຍຜູ້ສູນຊັບແລ້ວ ແມ່ນປະພຶດດີຖືກຕາມປະເພນີ ກໍບໍ່ເປັນທີ່ນິຍົມຂອງຄົນທັງຫລາຍ......

ບໍ່ໝຳ ເນັ້ງຂອງຕົນກໍເອົາໃຈອອກ ບໍ່ຕ້ອງເວົ້າເຖິງຜູ້ອື່ນກໍໄດ້ ແລະ ຂໍ້ຕໍ່ໄປນີ້ ເປັນຄວາມເສັ່ງຫາຍແກ່ການດຳເນີນນະໂຍບາຍຂອງປະເທດ ຄື:

ຄວາມຟູມເຟືອຍເຊີເຊີມ, ຂາດການສືບສວນ, ການເກັບຫອມສັບ ໂດຍຜິດທາງ ແລະ ການສໍ້ໂກງຂອງຜູ້ຢູ່ທາງ ເຫລົ່ານີ້ ເປັນລັກສະນະຊື່ອ ຮ້າຍຂຂອງການຄ້າ."

ຝ່າຍອາຊີ ລະຕັບທະກັນ ກໍເວົ້າຂຶ້ນວ່າ: "ຟັງແດ່ນ້ອງ! ອະນຸພາ ຄຍະ ກັບ ທະນະບະ ອາໄສເຮັດການນຳເຈົ້ານາເຫືງ ໄດ້ຮັບຕຳແໜ່ງເປັນ-ການະຍາທິການີ(ຫົວໜ້າການບໍລິຫານ) ໃນໜ້າທີ່ຮັກສາໄນຕີ ແລະ ສົງຄາມ; ທັນນະດາຜູ້ມີອຳນາດບໍ່ຄວນຕັ້ງ ການະຍາທິການີ ໃນຕຳແໜ່ງ ທະນາທິການ (ຫົວໜ້າການຄ້າ) ເພາະຕາມປະເພນີເຄີຍໄດ້ຍິນມາວ່າ:-

ພຣານ(ນັກບວດ) ໑ ນັກຮົບ ໑ ພີ່ງພັນພີ່ນ້ອງ ໑ ທັງສາມພວກນີ້ບໍ່ ຄວນໃຫ້ເປັນ ທະນາທິການ ຍ້ອນວ່າ:-

ພຣານ ຂີ້ຖີ່ ບໍ່ຍອມໃຊ້ຈ່າຍ ເຖິງແມ່ນຊັບນັ້ນຈະມີໄອ້ສຳຫລັບໃຊ້ວຽກ ກໍຕາມ, ໃຫ້ນັກຮົບມີໜ້າທີ່ໃນການເງິນ ກໍຈະຖອດດາບອອກຈັດການ, ໃຫ້ພີ່ ນ້ອງວົງວານ ເປັນຂຸນຄ້າ ກໍຈະກິນກິນໝົດ ເພາະຖືວ່າຕົນເປັນພີ່ນ້ອງ.

ຜູ້ທີ່ທຳຄວາມຊອບໄວ້ ເມື່ອໄດ້ມີອຳນາດ ກໍບໍ່ສູ້ໃສ່ໃຈໃນຄວາມຜິດ ຂອງຕົນ ຄິດລະຫາວວ່າ ໄດ້ທຳປະໂຍດແກ່ນາຍມາແລ້ວ ຈຶ່ງຄິດກະບົດສໍ້ໂກງ ກິນສເນີໄປ.

ຂ້າໃຊ້ເກົ່າ ແມ່ນກະທຳຜິດ ກໍບໍ່ສູ້ຕົກໃຈຢ້ານ ເຮັດອັນໃດເອົາແຕ່ ໃຈໂຕ.

ອາມາດທຸກຄົນບໍ່ຄວນຕັ້ງແຕ່ງໃຫ້ຮັ່ງມີຫລາຍ ເພາະວິທີດຳເນີນ-

ນະໂຍບາຍຂອງນັກປາດ ເພິ່ນວ່າ ອິດທິຂອງຊັບພາຍ້ອມໃຈຄົນໃຫ້ເປັນໄປຕ່າງໆ; ປໂຍດນາເຖິງແລ້ວ ບໍ່ເອົາໄວ້ໃຫ້ໄດ້, ໝຸນວຽນຊັບ (ຫາທາງໄດ້) ຖແລງຕາມໃຈນາຍສເນີ, ເສີຍເມີຍຕໍ່ໜ້າທີ່, ຂາດຄວາມພິຈາຣະນາ, ນິວເນົາແຕ່ໃນຄວາມສນຸກ; ເຫລົ່ານີ້ ເປັນຄວາມເສັຽຫາຍຂອງອາມາດ.

ລົງໂທດແດ່, ເລື່ອນຕໍາແໜ່ງແດ່, ຍ້າຍໜ້າທີ່ແດ່, ນີ້ເປັນວິທີດໍາເນີນການຂອງທ້າວພຣະຍາ; ອາມາດສ່ວນຫລາຍເປັນຄືກັນກັບຟືອັນໄຄ່ຕຶງ ຖ້າບໍ່ບີບແດ່ກໍບໍ່ຄາຍເງິນຫລວງອອກມາໄດ້.

ຄວນຖອດອໍານາດຜູ່ຮັກສາຄັງໃຫ້ເລື້ອຍໆ ເພາະວ່າ ຜ້າອາບນໍ້າບິດເທື່ອດຽວ ນໍ້າຈະໄຫລອອກໝົດໄດ້ຢ່າງໃດ?

ເມື່ອຮູ້ດັ່ງນີ້ ກໍຄວນຈັດການໃຫ້ຮາບຄາບສາຈັກເທື່ອ ໃນເມື່ອມີໂອກາດ."

ຣາຊາປົງຄະລະ ຮັບວ່າ: "ແມ່ນແທ້! ອ້າຍໝາຈອກທັງສອງຕົວນີ້ ບໍ່ຊູ້ຫົວຊາຄໍາສັ່ງຂອງຂ້າພະເຈົ້າເລີຍ."

ສະດັບທະກັນ ສິ່ງເສີນ: "ຖ້າຈັ່ງຊັ້ນແຮ່ງບໍ່ຄວນປະໄວ້ເປັນອັນ-ຂາດ ຕ້ອງຟ້າວຈັດການ ເພາະເພິ່ນວ່າ ພຣະຣາຊາບໍ່ຄວນປະປ່ອຍໃຫ້ໂອ-ຣົດ(໑)ດື້ດ້ານ, ອັນສິຣິຂອງຜູ້ດື້ດ້ານມີແຕ່ຈະມົວໝອງ, ຄອງໃນຕີຂອງຜູ້ປີ້ນໄປມີແຕ່ຈະສູນເສັຽ, ສະກຸນຂອງຜົວເມັຽທີ່ບໍ່ມີອິນທີໃຫ້ເກີດຄວາມກໍາ-ໜັດ ມີແຕ່ຈະສັຽງສູນ, ຄວາມດີຂອງຜູ້ທີ່ມາກມູນໄປດ້ວຍຄວາມໂລບ ມີແຕ່ຈະທະລາຍ, ພົນແຫ່ງຄວາມຮູ້ຂອງຜູ້ປະພຶດຮ້າຍ ມີແຕ່ຈະລ່ວງຫລົ່ນ, -ຄວາມສຸກໃນສະກົນ(໒)ຂອງຄົນຂີ້ຖີ່ ມີແຕ່ຈະຫ່າງເຫ, ພຣະຣາຊາທີ່ມີອາ-ນາດໂລເລ ມີແຕ່ຈະດັບວາຍ.

---

(໑)ລູກຊາຍ (໒)ສະກົນ: ຮ່າງກາຍ(ສ.ສະກັນທະ)

ພຣະກະສັດ ເປັນເໝືອນບິດາ ທັງປົກປັກຮັກສາປະຊາກອນໃຫ້ພົ້ນໄພ ຈາກຂ້າເສິກ, ຈາກເສວະກາມາດ, ຈາກສັດຕູ, ຈາກຜູ່ ທີ່ທຳໂພດຜາຍ, ແລະ ຈາກຄວາມໂລບຂອງທ້າວພຣະຍາເອງ.

ສະນັ້ນ ນ້ອງຄວນຟັງຄຳເຕືອນຂອງຂ້າພະເຈົ້າ ຄື ຂໍແນະນຳໃຫ້-ຕັ້ງໂອສັນທະກະ ໃນຕຳແໜ່ງໂພຊະນາທິການ(໑)ເສັຽ ເພາະເປັນຜູ່ບໍຣິໂພກແຕ່ສັສຍາຫານ (໒) ຄົງບໍ່ຕ້ອງການຈະລໍ້ໂກງ."

ຣາຊາປິງຄະລະ ເຫັນຊອບຕາມຂໍ້ແນະນຳ ຈຶ່ງຕັ້ງໂອບັນທະກະ ໃຫ້ເປັນ ໂພຊະນາທິການ ປົດອະສຸພາຄຍະ ແລະ ທະນະບະ ອອກເສັຽຈາກຕຳ-ແໜ່ງນັ້ນ.

ຕໍ່ມາ ອະສຸພາຄຍະ ແລະ ທະນະບະ ບໍ່ສາມາດຈະລັກລອບກິນອາ-ຫານໄດ້ຕາມເຄີຍ ມີຄວາມປືດເຄືອງລົງ ຈຶ່ງຫາຣິບຄວາມທຸກຕໍ່ກັນວ່າ ເຮົາຈະທຳຢ່າງໃດ?

ອະສຸພາ. ຍະ ຕອບວ່າ: "ຈະໂສກເສົ້າເສັຽໃຈໄປເຮັດຫຍັງ? ເພາະເລື່ອງນີ້ມັນເປັນຄວາມຜິດຂອງເຮົາເອງ ເຮົາເປັນຜູ່ຊັກຈູງໃຫ້ຣາຊສີກັບງົວເປັນມິດກັນໄດ້ ເຮົາກໍຕ້ອງຫາອຸບາຍທຳລາຍມິຕພາບນັ້ນໃຫ້ໄດ້ເໝືອນ-ກັນ ເພາະວ່າ ຄົນສລາດຫລັກແຫລມ ສາມາດປັ້ນເລື່ອງທີ່ບໍ່ຈິງ ໃຫ້ເຫັນຈິງໄດ້ ດັ່ງດຽວກັນກັບຊ່າງແຕ້ມທີ່ສລາດສາມາດຂຽນຮູບໃຫ້ພື້ນທີ່ຮາບໃຫ້ຄົນເຫັນເປັນບ່ອນສູງບ່ອນຕ່ຳໄດ້.

ຜູ່ມີໃຈບໍ່ຫວັ່ນໄຫວຫລົງລືມໃນເຫດການອັນເກີດຂຶ້ນປັດຈຸບັນທັນດ່ວນຜູ່ນັ້ນ ສາມາດແກ້ໄຂຄວາມຂັດຂ້ອງໄດ້ ເໝືອນດັ່ງພະຣິຍາແຕ່ງຄົນລັຽງງົວກັບ

---

(໑)ໂພຊະນາທິການ: ຫົວໜ້າກອງສະບຽງ (໒)ສັສຍາຫານ: ຫງ້າ

ຊາຍຊູ້ ໒ ຄົນ."

ທະນະນະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະນຸພາຄຍະ ເລົ່ານິຍາຍ:-

ນິທານແອັນທີ ໔

ເຣື່ອງ ເມັຽຂອງຄົນລັຽງງົວ

ໃນເມືອງທະວາຣາວະດີ ມີເມັຽຂອງຊາວລັຽງງົວຄົນນຶ່ງ ເປັນຄົນໃຈໂລເລ ລັກຫລິ້ນຊູ້ ກັບ ທັນທະນາຍົກ(ຕາແສງ) ແລະ ກັບລູກຊາຍຕາແສງນັ້ນອີກ ເພາະ ເພິ່ນກ່າວວ່າ:

ທັມມະດາໄຟບໍ່ຫ່ອນອີ່ມຟືນ, ທະເລໃຫຍ່ບໍ່ອີ່ມນ້ຳ, ຄວາມຕາຍບໍ່ອີ່ມສຳໃນຊີວິດຂອງສັດ, ນາງຜູ້ງາມກະດັດ ກໍບໍ່ອີ່ມໃນຜູ້ຊາຍ.

ຕໍ່ມາວັນນຶ່ງ ເມັຽຄົນລັຽງງົວກຳລັງຊື່ນຊົມຢູ່ກັບລູກຊາຍຂອງຕາ-ແສງ, ພໍດີຕາແສງກໍເຂົ້າມາອີກ, ນາງເຫັນຕາແສງມາ ຈຶ່ງເອົາລູກຊາຍຂອງຕາແສງເຊື່ອງໄວ້ໃນຊ່ອນເຂົ້າ ແລ້ວກໍອອກມາພິຣົມຊົມຊື່ນກັບຕາແສງນັ້ນອີກ, ເວລານັ້ນ ຜົວກັບມາຈາກໄຮ່ ພໍນາງເຫັນຜົວມາ ກໍບອກກັບຕາ-ແສງໃຫ້ຖືຄ້ອນທຳທ່າຮ້າຍໄວ້ ແລ້ວໃຫ້ຟ້າວອອກໄປ, ຜົວມາເຖິງຈຶ່ງຖາມເມັຽວ່າ: "ຕາແສງເຂົ້າມາຫຍັງທີ້?" ເມັຽ ຕອບວ່າ: "ບໍ່ຈັກ! ຮ້າຍໃຫ້ລູກຊາຍແນວໃດບໍ່ຮູ້ ລູກຊາຍຢ້ານແລ່ນມາເພິ່ງຂ້ອຍ ຂ້ອຍເລີຍເອົາເຊື່ອງໄວ້ໃນຊ່ອນເຂົ້າຫັ້ນເນ! ພໍ່ຊອກຫາລູກຊາຍບໍ່ເຫັນ ກໍເລີຍຮ້າຍປຶດປ້າດກັບໄປ." ວ່າແລ້ວ ນາງກໍຈູງແຂນລູກຊາຍຂອງຕາແສງອອກມາໃຫ້ເບິ່ງ:-ນີ້ແຫລະ ເພິ່ນຈຶ່ງວ່າ:

ທັມມະດາສັດຕີ ກິນອາຫານແຕ່ ໒ ທີ່ ມີປັນຍາຫລັກແຫລມ ໔ ທີ່

ແລະ ມີກົນມາຍາ ໔ ທີ່ ແຕ່ມີການຣາຄະເຖິງ ໓ ທີ່ ເຫດສະນັ້ນຂ້າພະເຈົ້າຈຶ່ງວ່າ ຜູ້ໃດມີໃຈບໍ່ຫວັ່ນໄຫວຕໍ່ເຫດການທີ່ເກີດຂຶ້ນໃນປັດຈຸບັນ ຜູ້ນັ້ນກໍສາມາດແກ້ໄຂຄວາມຂັດຂ້ອງໄດ້ ດັ່ງເນັ່ງຂອງຊາຍລັງງວິດ.

ທະມະນະ ເວົ້າວ່າ: "ທີ່ທ່ານເວົ້າມານີ້ແມ່ນຢູ່! ແຕ່ເຮົາເຮັດຈັ່ງໃດຄວາມຮັກແພງສນິດສນົມຂອງ ຣາຊສີ ກັບ ງົວ ຈຶ່ງຈະແຕກກັນໄດ້."

ວະສຸພາຄຍະ ຕອບ: "ຕ້ອງຄຶດອຸບາຍຕີ່ສ່ງວ! ເພິ່ນຍັງວ່າ ຖ້າຈະຂື່ນເອົາດ້ວຍກຳລັງ ແລະ ອຳນາດ ບໍ່ສຳເລັດແລ້ວ ຕ້ອງໃຊ້ກົນອຸບາຍ ແບບດຽວກັນກັບກາທຳອຸບາຍໃຫ້ງູເຫົ່າຖືກຂ້າຕາຍ" ແລ້ວວະສຸພາຄຍະ ຈຶ່ງເລົ່າຕໍ່ໄປວ່າ:-

ນິທານແອັມທີ ໕

ເຣື່ອງ ກາ ກັບ ງູເຫົ່າ

ມີສອງກາຜົວເມັ່ງເຮັດຮັງຢູ່ເທິງຕົ້ນໄມ້, ງູເຫົ່າຕົວນຶ່ງອາໄສຢູ່ໃນ-ໂກນໄມ້ຕົ້ນນັ້ນ, ເວລາໃດ ນາງກາປະໄຂ່ໄວ້ໃນຮັງ ງູເຫົ່າໄປລັກກິນໝົດ ນາງກາຈຶ່ງຫາຣິບຄວາມທຸກນຳຜົວວ່າ ເຮົາຄວນໜີຈາກຕົ້ນໄມ້ຕົ້ນນີ້ເສັຽ ເພາະວ່າ ຕາບໃດທີ່ງູເຫົ່າຕົວນີ້ຍັງຢູ່ນີ້ ລູກຂອງເຮົາຄົງບໍ່ມີວັນເປັນຕົວເລີຍ ເພາະເພິ່ນວ່າ: ເມັ່ງຮ້າຍ, ເພື່ອນໃຈຄົດ, ບ່າວຖຽງຄວາມ, ຢູ່ໃນເຮືອນທີ່ມີງູ - ເຫລົ່ານີ້ ແມ່ນມັດຈຸຣາດ(໑) ໂດຍບໍ່ຕ້ອງສົງໄສ.

ກາຕົວຜົວຕອບວ່າ: "ເຣື່ອງທີ່ນີ້ຢ່າພ້າວວາງອາໄລ ເຮົາໄດ້ຮັບໄພ-ຈາກງູຕົວນີ້ມາພໍແຮງແລ້ວ ຄາວນີ້ເຮົາຕ້ອງຈັດການກັບມັນ ເພາະວ່າ:

ຜູ້ໃດມີປັນຍາ ຜູ້ນັ້ນເປັນຜູ້ມີກຳລັງ, ຜູ້ໄຮ້ປັນຍາ ຫລືຈະສູ້ຜູ້ມີປັນຍາໄດ້ ດັ່ງຣາຊສີຕົວມີກຳລັງແຕ່ໄຮ້ປັນຍາ ເລີຍຕ້ອງເສັຽປຽບໃຫ້ກະຕ່າຍ."

ບາງກາ ຖາມວ່າ: ເຣື່ອງເປັນຢ່າງໃດ?

ກາຜູ້ ບັນຣະຍາຍ:-

ນິທານແອັນທີ ໘

ເຣື່ອງ ຣາຊສີ ກັບ ກະຕ່າຍ

ມີຣາຊສີຕົວນຶ່ງ ເປັນພຍາຂອງສັດ. ພວກສັດທັງຫລາຍປະຊຸມ-ຕົກລົງກັນປັນພຽນໄປໃຫ້ຣາຊສີກິນວັນລະຕົວ. ວັນນຶ່ງຖືກພຽນກະຕ່າຍເຖົ້າ ມັນຈຶ່ງຄິດຕຶກຕອງວ່າ:

"ຍ້ອນຢ້ານຕາຍຕົວ! ຄົນຈຶ່ງນົບນອບພອບຄານ ບັດນີ້! ເຖິງວາຣະຈະຕ້ອງຕາຍແນ່ແລ້ວ ຈະໄປຢຳແຢງໂຄອົບມັນເຮັດຫຍັງ?" ຄິດດັ່ງນີ້ແລ້ວ ກໍເຂົ້າໄປຫາຣາຊສີຕາມສະບາຍ ບໍ່ຟ້າວຟັ່ງ ຝ່າຍຣາຊສີຄອຍຖ້າຢູ່ເຫິງ ມີຄວາມຫິວຫລາຍ ພໍເຫັນກະຕ່າຍມາຈຶ່ງນາບວ່າ: "ມຶງໄປອໍ້ແອ້ ຢູ່ໃສ ຈຶ່ງມາຊ້າແທ້!"

ກະຕ່າຍ ຕອບວ່າ: "ເມື່ອຂ້າພະເຈົ້າເດີນມາຕາມທາງ ຖືກຣາຊສີອີກຕົວນຶ່ງຄຸມໄວ້ ແລະບັງຄັບໃຫ້ຂ້າພະເຈົ້າສາບານວ່າ ຕ້ອງກັບຄືນໄປ ຂ້າພະເຈົ້າອ້ອນວອນເກືອບຕາຍຈຶ່ງມາໄດ້."

ຣາຊສີຄຽດເປັນໄຟ: "ອ້າຍຮ່ານັ້ນ ມັນຢູ່ໃສ? ພາກູໄປເບິ່ງ!" ວ່າແລ້ວກະຕ່າຍກໍພາໄປ ແລ້ວຊີ້ບອກໃຫ້ຣາຊສີເບິ່ງເງົາຕົວເອງອັນສ່ອງຢູ່ໃນຖ້ຳແກ້ວທີ່ເປັນເຫວເລິກ ຣາຊສີຫລຽວລົງໄປເຫັນ ເຂົ້າໃຈວ່າແມ່ນຄູ່-ແຂ່ງຂັນອຳນາດອີກຕົວນຶ່ງຕ່າງຫາກ ມີຄວາມຈອງຫອງ ກໍໂດດລົງໄປໃນ-ຖ້ຳແກ້ວ ເລີຍຕຳຫີນຄົມອີກແຕກຕາຍ.

<u>ໝາຍເຫດ</u>: ທ້າ ໕໐(໑)ມັດຈຸຣາດ: ຄວາມຕາຍ

ກາຕິວຸຊ໌ ເວົ້າຕໍ່ໄປວ່າ: "ເຫດດັ່ງນັ້ນ ຂ້າພະເຈົ້າຈຶ່ງວ່າ ຜູ້ມີຍາ ຕ້ອງຕາບແພ້ຜູ້ມີກຳລັງແຕ່ຫາຍາບໍ່ໄດ້." ເວົ້າແລ້ວຈຶ່ງບອກອຸບາຍ ແກ່ເມັຽ ວ່າ: "ຢູ່ໃກ້ຕົ້ນໄມ້ທີ່ເຮົາຢູ່ນີ້ມີນ້ຳສ້າງ ພຣະຣາຊໂອຣົດຂອງກະສັດນາຄົງບ້ໍ ສເນີ ແລະມັກຖອດສັງວານຄໍວາງໄວ້ເທິງກ້ອນຫີນ ເຈົ້າຈຶ່ງໄປລັກເອົາສັງ-ວານນັ້ນ ມາໄວ້ທີ່ໂກບງູ." ນາງກາ ເຮັດຕາມຄຳແນະນຳຂອງຜົວ ຝ່າຍງູ ກໍເລີຍຖືກພວກນະຫາດເລັກຂ້າຕາຍໃນເວລາມາຊອກຫາສາຍສັງວານ. ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ "ຖ້າຈະຂື້ນເອົາດ້ວຍກຳລັງບໍ່ໄດ້ ຕ້ອງໃຊ້ກົນອຸບາຍ" ອະນຸພາຄຍະວ່າ.

ແລ້ວ[illegible]າຈອກທັງສອງກໍເຂົ້າໄປຫາຣາຊາປິງຄະລະ ສະແດງຄວາມໂຄຣົບຕາມທີ່ນິຽມແລ້ວ ອະນຸພາຄຍະຈຶ່ງເວົ້າຕໍ່ຣາຊສີວ່າ: "ເທວະ ຂ້າ-ພະເຈົ້າສັງເກດເຫັນເຫດຮ້າຍຢ່າງນຶ່ງອັນໜ້າຢ້ານ ອາດເປັນໄພມາເຖິງພຣະບາດເປັນເຈົ້າໄດ້ ຂ້າພະເຈົ້າຈຶ່ງມາຣາຍງານ ເພາະປະເພນີມີຢູ່ວ່າ: ພຣະຣາຊາເປັນເໝືອນດັ່ງພາຊະນະຮັບໂພຄສຸກ(໑), ມຸນຕີ ເປັນເໝືອນດັ່ງພາ-ຊະນະຮັບຮອງຣາຊກິດ; ເມື່ອຣາຊກິດຂອງພຣະຣາຊາເສັຽຫາຍພາດພັ້ງໄປ ຜູ້ທີ່ຈະໄດ້ຮັບຄວາມຕິຕຽນ ກໍແມ່ນມຸນຕີ; ອີກປະການນຶ່ງ ເປັນບ່າວທ່ານ - ຄວນສະລະຊີວິດຍອມໃຫ້ຕັດຫົວ ດີກວ່າຈະປະວາງໃຫ້ຜູ້ຄິດຄິດທຳຮ້າຍແກ່-ເຈົ້າ ຂອງຕົນ."

ຣາຊາປິງຄະລະ ຖາມ: "ເຣື່ອງອັນໃດກັນ" ອະນຸພາຄຍະວ່າ: "ດຽວນີ້ ອ້າຍນັນທະກະ ສະແດງອາການບໍ່ສົມຄວນຕໍ່ພຣະບາດ ຕໍ່ໜ້າຂ້າພະເຈົ້າ ມັນກໍກ້າກ່າວນິນທາຫຸ່ນສັກດານຸພາບຂອງພຣະບາດ ເຫັນທີ່ມັນບັງອາດ

---

(໑)ສເວີຍຄວາມສຸກ

ຢາກເປັນຣາຊາໃນປ່ານີ້ເປັນແນ່ແທ້ ຂ້າແຕ່ຣາຊາ ການທີ່ພຣະກະສັດຜູ້ທົງອານຸພາບ ມາຄອດຄອບຂ້າເກົ່າຜູ້ຮູ້ຊຳນານໃນຣັຖສາດ(໑)ເສັງພົດ ແລ້ວຕັ້ງຄົນໃໝ່ທີ່ມີແຕ່ຄວາມຖແລງແປງລິ້ນໃຫ້ເປັນແທນນັ້ນ ເປັນຄວາມເສັງຫາຍຢ່າງໃຫຍ່ຫລວງ ອາດພາໃຫ້ປະເທດບ້ານເມືອງຫລົ້ມຈົມໄດ້ ດັ່ງດຽວກັນກັບພຣະຍາເກສະທຸມມະຣາດ."

ຣາຊາປົງຄະລະ ມີຄວາມສົງໄສ ຈຶ່ງຖາມວ່າ"ເຣື່ອງເປັນຢ່າງ-ໃດ?"

ອະນຸພາຄຍະ ບັນຍາຍ:

ນິທານແອັນທີ ໗

ເຣື່ອງ <u>ພຣະຍາເກສະທຸມມະຣາດ</u>

ປາງກ່ອນ ພຣະກະສັດນາມວ່າ ວິທຸມມະຣາດ ສເວີຍສົມບັດຢູ່ໃນປະເທດມະຫາຣັດຖະ ພຣະອົງມີອຳມາດໃຫຍ່ ໕ ຄົນ ເປັນທີ່ປຶກສາຣາຊະ-ການ ແລະ ຈັດພຣະຣາຊກິດຕ່າງພຣະອົງ ພຣະຣາຊາວິທຸມມະຣາດມີໂອ-ຣົດອົງນຶ່ງ ນາມວ່າ ເກສະທຸມມະຣາດ ເປັນມະກຸດຣາຊກຸມມານ(໒) ແຕ່ເກສະທຸມມະຣາດ ມີປ່າວໂລ່ເລ ແລະ ສໍພໍຖແລງກັບຜູ່ ໕ ຄົນ.

ຕັ້ງນຶ່ງມີຂ້າເສີກມາຢ່ຳຍີເຂດແດນ ພຣະຍາວິທຸມມະຣາດ ຈຶ່ງຕັດສັ່ງໃຫ້ອຳມາດໃຫຍ່ ໕ ຄົນນັ້ນ ເປັນແມ່ທັບຍົກພົນອອກໄປຂັບໄລ່ສັດຕູ ພໍສົງຄາມສງົບແລ້ວ ພຣະອົງປະທານຄວາມຊອບ ຕັ້ງໃຫ້ອຳມາດທັງ ໕ ຄົນນັ້ນ ເປັນເຈົ້າເມືອງຮັກສາເຂດແດນຣາຊອານາຈັກ.

---

(໑)ແບບແຜນການປົກຄອງປະເທດ (໒)ຜູ່ຈະສເວີຍເມືອງແທນ.

ຝ່າຍບ່າວ ໕ ຄົນຂອງກຸມມານເກສະທຸມມະອາດ ເຫັນອຳນາດ ໕ ຄົນ ໄດ້ດີມີຄວາມສຸກ ກໍຄຶດຕຶງສາ ຈຶ່ງຈາກັນເປັນຄວາມລັບ ແລ້ວເຂົ້າໄປຫາເກສະທຸມມະຣາຊກຸມມານ ທູນວ່າ "ຂ້າແຕ່ພຣະກຸມມານ ບັດນີ້ ອຳນາດໃຫຍ່ຂອງພຣະຣາຊບິດາ ໄດ້ຮັບອິສຣິຍະຍົດເປັນອັນມາກ ທັງມີຄວາມສຸກບໍຣິບູນດ້ວຍຊັບສິນບັດນາໆປະການ ຈຶ່ງພາກັນຄິດທ້າວທານບໍ່ໄດ້ມີຄວາມເຊື່ອຟັງນັບຖືແລະຢຳແຢງໃນພຣະອົງຕໍ່ເປັນມະກຸດຣາຊກຸມມານເລີຍ ຖ້າບໍ່ເຊື່ອຂໍໃຫ້ພຣະອົງມີໜັງສືສັ່ງໄປໃຫ້ພວກນັ້ນຫາຂອງທີ່ຕ້ອງປະສົງມາຖວາຍລອງເບິ່ງ, ພວກຂ້າພຣະບາດຈະຖືໄປເອງ ເຂົາຈະຈັດໃຫ້ຕາມພຣະປະສົງຫລືບໍ່?"

ພຣະກຸມມານຫລົງເຊື່ອ ຈຶ່ງຂຽນໜັງສືສັ່ງບັງຄັບໃຫ້ອຳນາດທັງ ໕ ຄົນນັ້ນ ຈັດຫາບັນນາການເປັນຕົ້ນ ເງິນຄຳ ແລະສິ່ງຂອງທີ່ຫາຍາກເຂົ້າມາຖວາຍ ແລ້ວມອບໜັງສືໃຫ້ມະຫາດເລັກ ໕ ຄົນນັ້ນຖືໄປ; ມະຫາດເລັກທັງ໕ ຄົນ ໄປເຖິງຂຸນດ່ານແລ້ວ ຈຶ່ງເອົາໜັງສືຂອງພຣະຣາຊກຸມມານມອບໃຫ້ - ພວກຂຸນດ່ານທັງ ໕ ໄດ້ເຫັນດັ່ງນັ້ນ ກໍມີຄວາມຍິນດີຈັດການຕ້ອນຮັບມະຫາດເລັກຂອງພຣະຣາຊກຸມມານເປັນຢ່າງດີ ແລ້ວຈັດຫາບັນນາການຕ່າງໆ ໃຫ້ຕາມປະສົງ ພວກມະຫາດເລັກທັງ ໕ ຄົນນັ້ນ ໄດ້ບັນນາການແລ້ວ ກໍແບ່ງປັນກັນໄປບຳຣຸງຄອບຄົວຂອງໃຜມັນ ບໍ່ທໍ່ແຕ່ນັ້ນ ຍັງກັບມາທູນພຣະຣາຊກຸມ-ມານວ່າ "ພວກຂຸນດ່ານທັງ ໕. ຄົນ ບໍ່ໄດ້ຈັດຫາບັນນາການໃຫ້ຕາມປະສົງ-ຈັກຢ່າງ ທັງຍັງດູໝິ່ນດູແຄວນພຣະຣາຊກຸມມານເປັນອັນມາກອີກດ້ວຍ."

ພຣະຣາຊກຸມມານໄດ້ສະດັບຟັງ ກໍມີພຣະໄທຂາຄາດພວກຂຸນດ່ານ-ນັ້ນເປັນກຳລັງ ແຕ່ຍັງອົດກັ້ນໄວ້ໄດ້ ເພາະຍັງບໍ່ເຖິງເວລາ ຕໍ່ມາເມື່ອພຣະຣາຊບິດາຕາຍໄປ ພຣະຣາ ຊກຸມມານນັ້ນກໍໄດ້ຂຶ້ນສເວີຍຣາດເປັນພຣະກະ-

ສັດແທັນ ຈຶ່ງມີພຣະຣາຊອາດຍາສັ່ງປົດຂຸນດ່ານທັງ ໕ ຄົນ ຜູ່ເປັນອາມາດ ເກົ່ານັ້ນອອກ ເອົາໄປປະຫານຊີວິດເສັຽ ແລ້ວຕັ້ງບ່າວ ໕ ຄົນຂອງຕົນໃຫ້ ໄປເປັນຂຸນດ່ານແທນ, ອາມາດໃໝ່ເປັນຄົນໂລເລບໍ່ຮູ້ໃນຫລັກຣັຖສາດ ທຳ ການປົກຄອງປະຊາຣາດຕາມລຳພັງໃຈ ຈຶ່ງພາໃຫ້ເກີດເດືອດຮ້ອນ ບໍ່ນານ ພຣະຍາຕຸງຄະພິນ ຜູ່ເປັນສັດຕູເກົ່າໄດ້ຊາບຂ່າວຄວາມເປັນໄປຂອງພວກ-ອາມາດໃໝ່ແຫ່ງພຣະເກລະທຸມມະຣາດ ຈຶ່ງຍົກຣີພົນໂຍທາມາຮົບເອົາ-ເອົາປະເທດມະຫາຣັດຖະໄດ້ຢ່າງງ່າຍດາຍ ສ່ວນພຣະຍາເກລະທຸມມະຣາດ ລັກອອກໜີຈາກພຣະນະຄອນໄດ້ ກໍຂຶ້ນມ້າໜີເຂົ້າປ່າໄປແຕ່ອົງດຽວ.

ອະສຸພາຄຍະ ເວົ້າຊ້ຳຄວາມເກົ່າວ່າ: "ເພາະສະນັ້ນຂ້າພະເຈົ້າ ຈຶ່ງວ່າ ການທີ່ກະສັດຜູ່ຫົ່ງອານຸພາບ ມາຖອດຖອນຂ້າເກົ່າຜູ່ຮູ້ຊຳນານໃນ-ຣັຖສາດອອກເສັຽ ແລ້ວຕັ້ງຄົນໃໝ່ຜູ່ບໍ່ມີຄວາມຊຳນານ ເຂົ້າມາແທນນັ້ນ ເປັນໄພແກ່ສີຣິຣາຊສົມບັດຢ່າງໃຫຍ່ຫລວງ ດັ່ງດຽວກັນກັບພຣະຍາເກລະ-ທຸມມະຣາດ ທີ່ເລົ່າມາ."

ອະສຸພາຄຍະ ເວົ້າຕໍ່ໄປວ່າ: "ຂ້າແຕ່ພຣະຣາຊາ ໃນປະເທດນີ້ ກໍມີ–ແຕ່ພຣະບາດເປັນເຈົ້າມີອຳນາດສິດຂາດດີຢູ່ແລ້ວ ບໍ່ຄວນຈະມອບອຳ-ນາດໃຫ້ຜູ່ອື່ນອີກ ບັດນີ້ ພຣະບາດເປັນເຈົ້າມາຖອດຂ້າເກົ່າອອກໝົດ ແຕ່ງ ຕັ້ງຄົນຕ່າງແດນໃຫ້ເປັນໃຫຍ່ ມີອຳນາດເໜືອພວກເກົ່ານີ້ ບໍ່ຫອບຖືກຕ້ອງ-ຕາມທຳນອງຄອງທັມ ເພາະວ່າ ຜູ່ເປັນໃຫຍ່ ບໍ່ຄວນຊ່ອຍເຫລືອເກື້ອກູນ-ຄົນຕ່າງປະເທດ ໃຫ້ຍິ່ງກວ່າຄົນພາຍໃນຂອງຕົນ ໂດຍອ້າງວ່າຄົນເກົ່າກະ ທຳຜິດ ເພາະຜູ່ທີ່ຈະທຳຄວາມເສັຽຫາຍໃຫ້ແກ່ຣາຊສົມບັດໂດຍການໄຂ-ຄວາມລັບໃຫ້ແຜ່ຫລາຍ ນອກຈາກຄົນ(ຕ່າງເມືອງ)ນັ້ນຫລັອ ຈະແມ່ນໃຜ?

ອີກປະການນຶ່ງ ເພິ່ນກ່າວໄວ້ວ່າ: ຜູ້ໃດກໍຕາມທີ່ເຮົາຍັງບໍ່ຮູ້ຈັກຫົວຕີນປາຍ-ນອນ(ຄວາມປະພຶດເປັນໄປຂອງເຂົາ) ຜູ້ນັ້ນບໍ່ຄວນໃຫ້ຢູ່ຮ່ວມເຮືອນ ເມັນຄືກັບຂ້າຕາຍຍ້ອນໃຫ້ເຮືອດມາອາໄສຢູ່ນຳ."

ຣາຊາປິງຄະລະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະນຸພາຄຍະ ເລົ່ານິຍາຍ:

ນິທານແອັນທີ ໘

ເຣື່ອງ ເມັນກັບເຮືອດ

ເມັນຕົວນຶ່ງ ຊື່ ອະນະຄະທິບ ອາໄສຢູ່ໃນອາສນາອັນເປັນທີ່ບັນທົມຂອງພຣະຍາໂກສະລະຣາດ ອີງສເວີຍຣາຊສົມບັດຢູ່ໃນນະຄອນໂກສະລະບີ-ໄລ ມັນຄ່ອຍດູດກິນເລືອດຂອງພຣະຍາທຸກໆວັນ ໂດຍພຣະຍາບໍ່ຮູ້ເນື່ອເພາະປາກມັນອ່ອນ, ວັນນຶ່ງ ມີເຮືອດຕົວນຶ່ງ ຊື່ ຈັນທາລະ ມາຂໍອາໄສຢູ່ນຳເມັນເພາະຢາກລອງດູດກິນເລືອດພຣະຍາເບິ່ງ ເມັນຈຶ່ງເວົ້າຕໍ່ເຮືອດວ່າ "ກູໃຫ້ມຶງອາໄສຢູ່ນຳບໍ່ໄດ້ດອກ ເພາະປາກຂອງມຶງແຂງຫລາຍ ຜູ້ທີ່ປາກແຂງຍ່ອມຂົບຜູ້ອື່ນຕາຍ ເໝືອນດັ່ງປູໜີບຄໍນົກຍາງຕາຍສັນນັ້ນ"

ເຮືອດຖາມ: "ເຣື່ອງເປັນຢ່າງໃດ?"

ເມັນ ເລົ່ານິທານ:

ນິທານແອັນທີ ໙

ເຣື່ອງ ປູ ກັບ ນົກຍາງ

ມີປ່າໃຫຍ່ປ່ານຶ່ງຢູ່ເຂດແຂວງເມືອງມັດຊິມະບີໄລ ທີ່ໃກ້ປ່ານັ້ນ ມີໜອງນຶ່ງ ຊື່ ກັກກຸທະ(໑) ມີໝູ່ປາອາໄສຢູ່ເປັນອັນມາກ ມີນົກຍາງເຖົ້າ

(໑)ສອງກຸມ

....

ຕົວນຶ່ງ ມາເຫັນໜອງນັ້ນມີປາຫລາຍ ກໍບິນແອະລົງໄປປະລົງຈະໄດ້ກິນປາ ສ່ວນພວກປາທັງຫລາຍເຫັນນົກຍາງ ກໍເຕືອນກັນບໍ່ໃຫ້ອອກມາບ່ອນແປນ; ນົກຍາງບໍ່ໄດ້ກິນປາໃນແຄມໜອງທາງດ້ານນີ້ ຈຶ່ງບິນໄປລົງທາງໃໝ່ ແລ້ວທຳອຸບາຍເປັນທຸກຢືນຂາດຽວ ມີນ້ຳຕາໄຫລຍ້ອຍອອກ ແມ່ນເຫັນປານ້ອຍລອຍມາໃກ້ຕ່ານໄປມາຕາມຫວ່າງຂາ ກໍບໍ່ລອບກິນ ປາໃຫຍ່ຕົວນຶ່ງມາເຫັນອາການນົກຍາງເປັນຢ່າງນັ້ນ ຄິດປລາດໃຈຈຶ່ງຮ້ອງຖາມແຕ່ໄກວ່າ "ເຫດໃດທ່ານຈຶ່ງມາຢືນໂສກເສົ້າເຫງົາຫງ່ອມຢູ່ບໍ່ກິນອາຫານ"

ນົກຍາງ ຕອບ: "ດູລາປາ ຂໍທ່ານຈົ່ງຟັງຂ້າພະເຈົ້າກ່ອນ ຂ້າພະເຈົ້ານີ້ແຕ່ເດີມກໍມີປົກກະຕິກິນປາເປັນອາຫານ ບັດນີ້ໄດ້ໄປຮັບສິນມາຈາກທ່ານມຸນີ(໑)ທີ່ຢູ່ໃນປ່າຫິມມະພານ ທ່ານສອນໃຫ້ງົດເວັ້ນການຂ້າສັດເສັຽ ເພາະເປັນບາບ ຂ້າພະເຈົ້າຈຶ່ງໄດ້ງົດເວັ້ນບໍ່ກິນສັດເປັນ ເປັນອາຫານຕັ້ງແຕ່ນັ້ນມາ ປະກອບກັບໄດ້ຮຽນທັມຫລາຍຂໍ້ ຈຶ່ງເປັນຜູ້ມີໃຈກະຣຸນາ ວັນນີ້ ຂ້າພະເຈົ້າມາຈາກອຸດຣະນະຄອນ ໄດ້ຍິນພຣະກະແສຮັບສັ່ງຂອງພຣະຍາເມືອງນັ້ນວ່າ ຈະໃຫ້ພວກພານແຫມາລົງປາທີ່ໜອງກັກກຸທະນີ້ ໃນເວລາບໍ່ນານ ຂ້າພະເຈົ້າໄດ້ຍິນດັ່ງນັ້ນ ມີຄວາມສົງສານພວກສູເປັນອັນມາກ ຈຶ່ງໄດ້ມາບອກ.

ປາທັງຫລາຍໄດ້ຍິນນົກຍາງເວົ້າດັ່ງນັ້ນ ມີຄວາມຕົກໃຈຢ້ານ ຈຶ່ງເວົ້າວິງວອນນົກຍາງວ່າ: "ຂ້າແຕ່ທ່ານນົກຍາງ ຖ້າແມ່ນຈິງຄືຄວາມທ່ານເວົ້າແທ້ ທ່ານຄິດເຫັນຈັ່ງໃດແດ່ໃນການທີ່ຈະຊ່ວຍເຫລືອພວກຂ້າພະເຈົ້າ" ນົກຍາງຕອບວ່າ: "ມີໜອງໃຫຍ່ໜອງນຶ່ງຢູ່ທາງປະເທດທັກສິນາບິດນ້ຳເລິກ

---

(໑)ຣິສີ, ນັກປາດ.

ແລະ ໃສສະອາດດີ ຖ້າພວກທ່ານຍ້າຍໄປຢູ່ໜອງນັ້ນໄດ້ ກໍພົ້ນໄພ"

ປາ ຖາມ: "ເຮັດແນວໃດພວກຂ້າພະເຈົ້າຈຶ່ງຈະໄປໄດ້?"

ນົກຍາງ ຕອບ: "ຖ້າພວກທ່ານເຊື່ອໃຈຂ້າພະເຈົ້າຂ້າພະເຈົ້າ ກໍຈະພາໄປ ໂດຍຄາບພວກທ່ານໄປເທື່ອລະໂຕ"

ປາທັງຫລາຍປຶກສາກັນ ຕົກລົງໃຫ້ນົກຍາງພາປາຕົວນຶ່ງໄປເບິ່ງ-ກ່ອນ ຖ້າມີຈິງແທ້ກໍໃຫ້ກັບຄືນມາບອກ ເມື່ອຕົກລົງກັນແລ້ວ ນົກຍາງກໍຄາບປາຕົວນັ້ນພາໄປເຖິງໜອງໃຫຍ່ອັນຢູ່ທາງປະເທດທັກສິນາບົດ ປ່ອຍປາຕົວນັ້ນລົງໄປໃນໜອງໃຫ້ລອຍຫລິ້ນຕາມສະບາຍໃຈແລ້ວພາກັບຄືນມາໜອງເດີມ ປາຕົວນັ້ນກໍບອກເລົ່າແກ່ຝູງປາທັງຫລາຍຕາມທີ່ຕົນໄດ້ໄປເຫັນມາ, ຝູງປາໄດ້ຊາບດັ່ງນັ້ນ ກໍຊ້ອງຊໍກັນເຂົ້າມາຂໍໃຫ້ນົກຍາງພາໄປ ນົກຍາງໄດ້ທີ ຈຶ່ງຄາບປາໃນໜອງນັ້ນໄປກິນທີລະຕົວໆຈົນໝົດໜອງ.

ໃນຄັ້ງນັ້ນ ມີປູໃຫຍ່ຕົວນຶ່ງ ຊື່ຈັນທາລະກັກກະຕະ ມັນເຫັນນົກຍາງຄາບປາໄປດັ່ງນັ້ນທຸກວັນ ກໍມີຄວາມສົງໄສຄິດໃນໃຈວ່າ: "ບໍ່ຫລອນວ່ານົກຕົວນີ້ຫລອກເອົາພີ່ນ້ອງຂອງກູໄປກິນໝົດແລ້ວຫລື? ກູລອງໄປເບິ່ງເອງກ່ອນ-ນາ!" ຄິດແລ້ວ ຈຶ່ງເຂົ້າໄປຫານົກຍາງ ເວົ້າອ້ອນວອນວ່າ: "ດູລາທ່ານນົກຍາງ ທ່ານຈົ່ງເມດຕາພາຂ້າພະເຈົ້າໄປນຳແດ່" ນົກຍາງເຫັນປູກໍຄິດວ່າ "ປານີ້ກູໄດ້ກິນທຸກວັນໆຈົນເບື່ອແລ້ວສ່ວນປູຍັງບໍ່ທັນໄດ້ລອງເບິ່ງ ວັນນີ້ ກູຈະລອງຊີມອ້າຍປູນີ້ລອງເບິ່ງກ່ອນນາ!" ຄິດແລ້ວກໍຮັບຮອງຈະພາປູໄປ ແຕ່ພໍອ້າປາກຈະຄາບເອົາປູ ປູສລາດຈຶ່ງເວົ້າກັບນົກຍາງວ່າ: "ຂ້າພະເຈົ້າລອກຄາບໃໝ່ ຂອງຍັງອ່ອນຢູ່ ເມື່ອທ່ານຄາບແຮງ ຂອງຂ້າພະເຈົ້າກໍຈະແຕກ, ປະການນຶ່ງ ຂ້າພະເຈົ້າຢ້ານທ່ານຄາບບໍ່ພົ້ນ ແລ້ວຂ້າພະເຈົ້າກໍຈະຕົກຕາຍ,

ສະນັ້ນ-ຂໍທ່ານກະຣຸນາໃຫ້ຂ້າພະເຈົ້າໄດ້ຄາບຄໍທ່ານໄປເຖີ້ນ" ນົກຍາງບໍ່ຮູ້ກົນອຸບາຍຂອງປູກໍຍອມໃຫ້ປູຄາບຄໍແລ້ວພາບິນໄປ ເຖິງບ່ອນທີ່ຕົນເຄີຍເຊົາກິນປາກໍພາປູແວະລົງ ປູແລເຫັນກ້າງປາເຕັມຢູ່ໃນທີ່ນັ້ນ ກໍຮູ້ໄດ້ທັນທີວ່ານົກຍາງພາປາມາກິນໃນທີ່ນີ້ ຈຶ່ງໜີບຄໍນົກຍາງໃຫ້ແໜ້ນເຂົ້າແລ້ວຂນາບນົກຍາງວ່າ: "ມຶງຈຶ່ງພາກູຄືນໄປໜອງເກົ່າຂອງກູດຽວນີ້ ກູຈຶ່ງຈະວາງຄໍມຶງ ບໍ່ດັ່ງນັ້ນ ກູກັບມຶງຕ້ອງຕາຍນຳກັນ" ນົກຍາງເຈັບຫລາຍ ຈຶ່ງພາປູບິນກັບຄືນໄປພໍເຖິງໜອງ ປູກໍໜີບຄໍນົກຍາງຂາດຕາຍກັບບ່ອນ.

ເພາະສະນັ້ນ ຂ້າພະເຈົ້າ(ເມັນເອົ້າ)ຈຶ່ງວ່າ "ຜູ້ທີ່ປາກແຂງ-ຍ່ອມຂົບຜູ້ອື່ນຕາຍ" ເຫດດັ່ງນັ້ນ ຂ້າພະເຈົ້າຈຶ່ງໃຫ້ທ່ານອາໄສຢູ່ນຳບໍ່ໄດ້.

ເຮືອດໄຫວ້ວອນ: "ເຖິງແມ່ນປາກຂອງຂ້າພະເຈົ້າກ້າແຂງກໍຈະບໍ່ທຳໃຫ້ທ່ານຕ້ອງເດືອດຮ້ອນ ເພາະຜູ້ທີ່ເຂົ້າໄປອາໄສເຂົາ ແລ້ວທຳໃຫ້-ເຂົາເດືອດຮ້ອນນັ້ນ ເປັນຄົນຊົ່ວຮ້າຍທີ່ສຸດ"

ເມື່ອເມັນຍິນຍອມໃຫ້ເຮືອດອາໄສຢູ່ນຳແລ້ວ ໃນຄືນນຶ່ງ ພຣະຍາກຳລັງບັນທົມຫລັບ ເຮືອດອົດບໍ່ໄດ້ກໍອອກມາຂົບກິນເລືອດພຣະຍາ ພຣະຍາຕື່ນຂຶ້ນໃຕ້ໄຟສ່ອງຫາບໍ່ເຫັນເຮືອດ ເຫັນແຕ່ເມັນ ເພາະໜີບໍ່ທັນ ພຣະຍາເຂົ້າໃຈວ່າເມັນຂົບ ກໍຂ້າເສັຽ ສ່ວນເຮືອດໜີໄປໄດ້.

ອະສຸພາຄຍະ ເລົ່ານິທານອັນນີ້ໃຫ້ອາຊລີຟັງແລ້ວ ຈຶ່ງກ່າວສໂລກນີ້ວ່າ:

"ຜູ້ໃດ ເມື່ອຍັງບໍ່ຮູ້ຈັກຄວາມປະພຶດຂອງເຂົາແລ້ວ ແລະ ໃຫ້ເຂົາຄົນອື່ນມາອາໄສ ຜູ້ນັ້ນ ກໍຄົງບໍ່ພົ້ນຈາກຄວາມຕາຍ ດັ່ງດຽວກັນກັບເມັນນັ້ນຕາຍຍ້ອນເຮືອດ ຊື່ຈັນທາລະ ສະນັ້ນ"

ອະສຸພາຄຍະ ເວົ້າຕໍ່ໄປວ່າ: "ບັດນີ້ ພຣະບາດເປັນເຈົ້າ ໃຫ້ນັນທະກະ ຜູ້ທີ່ເຮົາບໍ່ຮູ້ຈັກຫົວນອນປ່າຍຕີນ ເຂົ້າມາອາໄສຢູ່ນຳ ບໍ່ພໍາຍັງຕັ້ງໃຫ້ມີຍົດສັກສູງດ້ວຍ ອັນນີ້ເປັນໄພຢ່າງມະຫັນ(໑) ເພາະມັນຈະຕ້ອງທຳຮ້າຍຕໍ່ພຼະບາດເປັນເຈົ້າໃນວັນໃດວັນນຶ່ງ ເມື່ອຂ້າພະເຈົ້າໄດ້ບອກໃຫ້ຮູ້ຣະວັງຕົວດັ່ງນີ້ ຫາກຍັງບໍ່ເຊື່ອຟັງ ພາຍຫລັງມາ ຈະມາຕູ່ອາມາດບໍ່ໄດ້"

ອາຊາປິງຄະລະ ຄິດໃນໃຈວ່າ: "ພຽງແຕ່ໄດ້ຟັງຄຳຫາຂອງຝ່າຍດຽວ ບໍ່ຄວນທຳໂທດຜູ້ອື່ນ ເມື່ອໄດ້ສືບສວນເຫັນຈິງແລ້ວ ຈຶ່ງຄວນທຳໂທດຫລືຍ້ອງຍໍ" ຄິດແລ້ວ ຈຶ່ງຫັນມາເວົ້ານຳອະສຸພາຄຍະວ່າ: "ຖ້າເຮົາຈະກ່າວເຕືອນໃຫ້ນັນທະກະຮູ້ເນື່ອ ແລະປ່ຽນໃຈໃໝ່ເສັຽ ຈະບໍ່ດີຫລື?"

ອະສຸພາຄຍະ ຟ້າວຄັດຄ້ານວ່າ: "ບໍ່ຄວນເລີຍ! ບໍ່ຄວນເລີຍ! ເພາະຈະທຳຄວາມລັບໃຫ້ແຕກກະຈາຍອອກ ຄວາມລັບເປັນຂອງແພງ ຕ້ອງຮັກສາໃຫ້ແຈບ ຢ່າໃຫ້ຟັ້ງຟື່ອໄດ້ ຖ້າຟັ້ງຟື່ອແລ້ວກໍຈະບໍ່ມີຜົນປະການໃດ ອັນຜູ້ຈະທຳທຸຣະຢ່າງໃດຢ່າງນຶ່ງ ຖ້າບໍ່ຟ້າວທຳໃຫ້ທັນກັບເຫດການແລ້ວ ເວລາກໍຈະກືນກິນທຸຣະຂອງຜູ້ນັ້ນເສັຽ"

ອາຊລີ ເວົ້າ: "ຈັ່ງໃດກໍຊ່າງ ເຮົາຕ້ອງພິຈາຣະນາໃຫ້ຮູ້ເສັຽກ່ອນວ່າ ງົວນັນທະກະນັ້ນຈະມີອຳນາດ ແລະ ກຳລັງພໍຈະທຳອັນຕະຣາຍໃຫ້ເຮົາໄດ້ພໍປານໃດ?"

ອະສຸພາຄຍະ ຕອບວ່າ: "ເທວະ ນອກຈາກເບິ່ງສະພາບຮ່າງກາຍ ແລະ ສິ່ງທີ່ກ່ຽວກັບຮ່າງກາຍແລ້ວ ຈະຄາດຄະເນກຳລັງ ແລະ ຄວາມສາມາດອັນແທ້ຈິງບໍ່ໄດ້ດອກ ໃຫ້ເບິ່ງແຕ່ນ້ຳມະຫາສມຸດຍັງສູ້ນົກແຕບແຕ້ບໍ່ໄດ້"

---

(໑)ມະຫັນຕ : ໃຫຍ່.

ຣາຊສີ ຖາມ: "ເຣື່ອງເປັນຢ່າງໃດ?"

ມະນຸພາຄຍະ ບັນຣະຍາຍ:-

ນິທານແຊ້ນທີ ໑໐

ເຣື່ອງ ນົກແຕບແຕ້ ກັບ ນ້ຳສມຸດ

ນົກແຕບແຕ້ຕົວເມັຽ ອາໃສຫາກິນຢູ່ແຄມຝັ່ງສມຸດ ຕົວຜູ້ຊື່ ອຸດຕາ-ນະປາຕະ ຕົວເມັຽຊື່ ປີຍະວາທະ ເມື່ອເວລານາງນົກມີໄຂ່ຈຶ່ງເວົ້ານຳຜົວວ່າ: "ທ່ານສາມີ ບັດນີ້ທ້ອງຂ້າພະເຈົ້າແກ່ແລ້ວ ຈະໃຫ້ໄຂ່ໃສ່ບ່ອນໃດ?" ນົກຜົວຕອບວ່າ: "ຫາດຊາຍນັ້ນງາມດີ ແລະ ເໝາະສົມ ຈົ່ງໄຂ່ໃສ່ທີ່ນັ້ນເຖີດ" ນົກເມັຽຕອບວ່າ: "ບ່ອນນັ້ນສມຸດຂຶ້ນມາຖ້ວມເຖິງ ເມື່ອຟອງນ້ຳມາມັນຈະບໍ່ພັດເອົາລູກເຮົາໄປໝົດຫລື?" ນົກຜົວຂຶ້ນສຽງດັງ: "ນີ້ເຫັນວ່າ ຂ້າພະເຈົ້າບໍ່ມີກຳລັງພໍຈະສູ້ກັບນ້ຳສມຸດໄດ້ຫລື? ເຮີຍ! ນາງ! ຕາບໃດທີ່ຂ້າພະເຈົ້າຍັງຢູ່ ນາງບໍ່ຕ້ອງຕົກໃຈ ນ້ຳສມຸດຈະທຳອັນໃດແກ່-ເຮົາໄດ້ ຈົ່ງໄປໄຂ່ທີ່ນັ້ນເຖີນ."

ນົກຕົວເມັຽເຊື່ອຄວາມຜົວ ກໍໄປໄຂ່ໃສ່ຫາດ ຝ່າຍນ້ຳສມຸດໄດ້ຍິນນົກອຸດຕານະປາຕະ ເວົ້າລະຫາວດັ່ງນັ້ນ ກໍຢາກຈະລອງດີ ຈຶ່ງບັນດານໃຫ້ຟອງນ້ຳມາພັດເອົາໄຂ່ນົກໄປໝົດ, ນາງນົກມີຄວາມເສັຽໃຈ ຮ້ອງໄຫ້ຮ່ຳໄຮນຳລູກເປັນອັນມາກ ແລ້ວເວົ້ານຳຜົວວ່າ : "ທ່ານຜູ້ເປັນທີ່ເພິ່ງເອີຍ! ບັດນີ້ ນ້ຳສມຸດພັດເອົາໄຂ່ເຮົາໄປແລ້ວ! ເຈົ້າຈົ່ງທຳໃຫ້ນ້ຳສມຸດຢ້ານ ສົ່ງລູກເຮົາຄືນມາເຖີນ" ນົກຜົວຮັບຮອງວ່າ: "ຂ້າພະເຈົ້າຈະນຳເອົາລູກຄືນມາໃຫ້ໄດ້ ຖ້າບໍ່ໄດ້ ຂໍໃຫ້ຂ້າພະເຈົ້າຕົກນາຣົກ ດັ່ງດຽວກັບນາຍພານປ່າຜູ້ຂ້າແມ່ລີງກິນ ນັ້ນເຖີນ."

ນົກເນັ່ງ ຖາມວ່າ: "ນິຍາຍເປັນດັ່ງລື?"

ນົກຕົວ ເລົ່ານິຍາຍ:-

ນິທານແອັນທີ ໑໑

ເຣື່ອງ ນາຍພານ ກັບ ລິງ

ມີປ່າໃຫຍ່ແຫ່ງນຶ່ງ ຢູ່ໃນຂົງເຂດນະຄອນກັລນິຣະ ພານເນື້ອຄົນນຶ່ງ ໃນນະຄອນກັລນິຣະ ມັກອອກໄປຫາຍິງເນື້ອໃນປ່ານັ້ນສເມີ ວັນນຶ່ງກຳລັງນາຍພານຍ່າງອອກຫາຍິງເນື້ອຢູ່ກາງປ່າ ກໍຈອບເສືອໂຄ່ງໃຫຍ່ເຂົ້າຢ່າງຈຳຈົນ, ຈຶ່ງປີນຂຶ້ນຕົ້ນໄຮໃຫຍ່ ແຕ່ມີຄວ້າໃສ່ງ່າເຄົ່າບໍ່ເຖິງ ທັນໃດນັ້ນ ແມ່ລິງຕົວນຶ່ງຢູ່ເທິງຕົ້ນໄມ້ໄຮນັ້ນ ເຫັນນາຍພານກຳລັງປີນຂຶ້ນຕົ້ນໄມ້ ເພາະຢ້ານເສືອກິນ ມີຄວາມສົງສານ ຈຶ່ງພ້າວມາດຶງແຂນນາຍພານຂຶ້ນໄປ, ເສືອແລ່ນມາເຖິງຕົ້ນໄຮ ແຫນໜ້າຂຶ້ນໄປເຫັນລິງຈ່ອງແຂນນາຍພານໄວ້ ຈຶ່ງເວົ້າກັບລິງວ່າ:

ເອີຍ! ລິງ, ວາງອ້າຍຄົນຊົ່ວນີ້ລົງມາໃຫ້ກູກິນເສັຽດີກວ່າ ເພາະທັມມະດາຄົນ ຍ່ອມເປັນສັດຕູຂອງພວກເຮົາ ບຽດບຽນສັງຫານພວກເຮົາກິນສເມີ ສ່ວນພວກເຮົາເປັນສັດປ່ານຳກັນ ຄວນຮັກແພງກັນ ອ້າຍຄົນນັ້ນບໍ່ຢູ່ປ່ານຳເຮົາດອກ."

ລິງຕອບເສືອວ່າ: "ເອີຍເສືອ ຄົນຜູ້ນີ້ນັບໜີຕາຍມາເພິ່ງກູ, ກູຈະວາງໃຫ້ມຶງກິນບໍ່ໄດ້ ເພາະເພິ່ນວ່າ:

ຄວນຊ່ອຍເຫລືອຄົນທີ່ປະສົບໄພ ເຊິ່ງໜ້າຫລ່າເຂົ້າມາຫາ ແມ່ນຈະເປັນສັດຕູກໍຕາມ; ອັນວ່າຕົ້ນພຶກສາ ກໍຍັງຍອມໃຫ້ຄົນຜູ້ມາຕັດ ຊົນເງົາຮົ່ມຂອງຕົນ"

ເສືອຕອບລິງວ່າ: "ລິງເອີຍ! ມຶງບໍ່ ຕ້ອງໄປທຳຄຸນກັບຜູ້ເປັນ..

ສັນຍະຊາດພານດອກ ຊາດຄົນພານນັ້ນຈະຮູ້ຈັກຄຸນຄົນຢ່າງໃດ ຖ້າມຶງບໍ່ຟັງຄວາມກູ ຈຶ່ງຖ້າເບິ່ງ ໄປພາຍໜ້າມັນຈະຕ້ອງທຳອັນຕະລາຍແກ່ມຶງແນ່ນອນ ດັ່ງດຽວກັນກັບຊ່າງຄຳ ທີ່ໄດ້ທຳອັນຕະລາຍໃຫ້ແກ່ພານຜູ້ຊື່ວ່າ ຍັນຍະພານ ສັນນັ້ນ"

ລິງ ຖາມ: "ນິຍາຍເປັນຢ່າງໃດ?"

ເສືອເລົ່ານິທານ:

ນິທານອັນທີ ໑໔

ເລື່ອງຊ່າງຄຳ ກັບ ພານ

ພານຜູ້ນຶ່ງ ຊື່ ຍັນຍະພານ ຢູ່ບ້ານພົນນາກະຄາມ ໃກ້ຝັ່ງແມ່ນ້ຳພົນນາກະ ສະໄມນຶ່ງ ຍັນຍະພານອອກຈາກບ້ານເດີນທາງໄປເມືອງພາລາ-ນະສີ ພໍໄປເຖິງກາງປ່າໃຫຍ່ທີ່ກັນດານ ພານມີຄວາມຢາກນ້ຳ ຈຶ່ງໄປຊອກຫານ້ຳກິນ, ໄດ້ພົບສ້າງໃຫຍ່ ແລະ ເລິກ ໜ່ວຍນຶ່ງໃນປ່ານັ້ນ ຈຶ່ງຕັດເອົາເຄືອເຂົາມັດນ້ຳເຕົ້າຢ່ອນລົງໄປເພື່ອຕັກນ້ຳ; ໃນສ້າງນັ້ນ ມີສັດສີ່ຈຳພວກຕົກຢູ່ດ້ວຍເວນກັນຂອງເຂົາ ຄື: ເສືອ, ລິງ, ງູເຫົ່າ ແລະ ຊ່າງຄຳ ພໍພານຢ່ອນເຄືອເຂົາລົງໄປ ລິງຈັບເຄືອເຂົາໄດ້ກໍໄຕ່ຂຶ້ນມານຳເຄືອເຂົາຈຶ່ງໂດດອອກຈາກສ້າງໄດ້ ແລ້ວເວົ້າກັບພານວ່າ: "ທ່ານຜູ້ຈະເລີນ ຂ້າພະ-ເຈົ້າມີຊີວິດລອດຕາຍມາໄດ້ໃນຄາວນີ້ ກໍຍ້ອນບຸນຄຸນຂອງທ່ານ ຂ້າພະເຈົ້າຈະບໍ່ລືມບຸນຄຸນຂອງທ່ານເລີຍ; ທີ່ຢູ່ຂອງຂ້າພະເຈົ້າຢູ່ໃນພຣະຣາຊອຸທຍານແຫ່ງມະຖຸຣະນະຄອນ ເວລາໃດທ່ານໄດ້ເດີນທາງໄປທີ່ເມືອງນັ້ນ ກະລຸນາໄດ້ໄປຢາມຂ້າພະເຈົ້າດ້ວຍ ແລະ ຂ້າພະເຈົ້າຂໍບອກໃຫ້ທ່ານຊາບວ່າ ໃນສ້າງທີ່ຂ້າພະເຈົ້າຕົກນັ້ນ ຍັງມີສັດອີກ ໓ ໂຕເຫລືອຢູ່ຄື: ເສືອ, ລິງ ແລະ

ຄົນ ທ່ານຈຶ່ງໄດ້ເອົາເສືອແລະງູອອກດ້ວຍ ສ່ວນຄົນນັ້ນຢ່າເອົາອອກເລີຍ" ວ່າທີ່ນັ້ນແລ້ວ ລີງກໍລາພານໜີໄປ.

ລີງໄປແລ້ວ ພານກໍ່ຍ່ອນເຊືອກເຄືອເຂົາລົງໄປໃນສ້າງອີກ ທັນໃດນັ້ນ ເສືອກໍຈັບເຊືອກຈ່ອງຂຶ້ນມາໄດ້ ແລ້ວເວົ້າຕໍ່ພານວ່າ: "ທ່ານຜູ້ຈະເຣີນ ບຸນຄຸນຂອງທ່ານນີ້ເຫລືອລົ້ນ ໃນການທີ່ໄດ້ຊ່ອຍຂ້າພະເຈົ້າໃຫ້ລອດຕາຍຄາວນີ້ ຂ້າພະເຈົ້າຢູ່ປ່າກາລີກາວັນ ໃກ້ນະຄອນມະຖຸຣະພູມ ເມື່ອທ່ານໄດ້ໄປທາງນັ້ນ ກະຣຸນາແວະຢາມຂ້າພະເຈົ້າດ້ວຍ ຂ້າພະເຈົ້າຈະໄດ້ຕອບບຸນແທນຄຸນ ວ່າແລ້ວເສືອກໍລາໜີໄປ. ພານຍ່ອນເຊືອກລົງເທື່ອທີ ສ ງູກໍກັງອແລະຂຶ້ນມາໄດ້ ແລ້ວເວົ້ານໍາພານວ່າ: "ຂ້າພະເຈົ້າ ຊື່ ບຸປະພາ ອາໄສຢູ່ນິນ-ດິບ(໑)ໃນອັດບຶ່ງທີ່ຢູ່ໃນເມືອງມະຖຸຣະ ຖ້າທ່ານໄດ້ໄປເມືອງນັ້ນຈຶ່ງໄປຢາມຂ້າພະເຈົ້າດ້ວຍ ຂ້າພະເຈົ້າຈະໄດ້ຕອບແທນຄຸນ, ງູເຖົ້າເວົ້າຕໍ່ໄປວ່າ ໃນສ້າງນີ້ຍັງມີຄົນໜຶ່ງເຫລືອຢູ່ ທ່ານຢ່າເອົາມັນອອກເລີຍ ເພາະມັນເປັນຄົນບໍ່ດີ:"ວ່າທີ່ນັ້ນແລ້ວກໍລາໜີໄປ.

ຝ່າຍພານ ໄດ້ຍິນຄໍາຂອງສັດທັງສາມໄດ້ຫ້າມບໍ່ໃຫ້ເອົາຄົນອອກດັ່ງນັ້ນ ກໍຄິດໃນໃຈວ່າ "ສັດເດັຽຣະສານ ກູຍັງປານີເອົາອອກ ເປັນຊາດຄົນ-ແທ້ໆ ບໍ່ເອົາອອກຈະຄວນຫລື? ຈະຟັງແຕ່ຄວາມຂອງສັດທັງສາມນັ້ນ ເຫັນບໍ່ເປັນການ" ຄິດແລ້ວຈຶ່ງຢ່ອນເຊືອກລົງດຶງຊ່າງຄໍາຂຶ້ນມາ ຊ່າງຄໍາທໍາຄວາມໂຄຣົບແກ່ພານແລ້ວ ບອກວ່າ "ຂ້າພະເຈົ້າເປັນຊ່າງຄໍາ ຢູ່ບ້ານໃກ້ທາດຫລວງ ໃນນະຄອນມະຖຸຣະ ຖ້າທ່ານໄດ້ໄປໃນເມືອງນັ້ນ ໂຜດໄດ້ໄປຢາມຂ້າພະເຈົ້າດ້ວຍ ເພື່ອຈະໄດ້ຕອບແທນຄຸນ" ວ່າແລ້ວຊ່າງຄໍາກໍລາໜີໄປ.

---

(໑)ນິນດິບ : ຫໍນ້ອຍ, ຫໍດີ.

ສ່ວນພານອາບນ້ຳກິນນ້ຳລະບາຍແລ້ວ ກໍເດີນທາງຕໍ່ໄປຈົນເຖິງ-ເມືອງພາຣານະສີ ທຳກິດຊຳຣະລ້າງບາບຕາມພິທີແລ້ວກໍກັບຄືນ ຂາກັບມາພານຄິດຢາກໄປຢາມສັດທັງ ໔ ຈຳພວກ ຕາມທີ່ສັ່ງໄວ້ ຈຶ່ງແວະໄປທາງເມືອງມະຖຸຣະ ເຂົ້າໄປໃນອຸທຍານ ລີງຕົວນັ້ນເຫັນພານມາ ກໍດີໃຈຈັດຫາໝາກໄມ້ນາໆຊະນິດມາລ້ຽງພານຕາມຖານະ ພໍສົມຄວນແລ້ວກໍລາລີງ ແລ້ວໄປຢາມເສືອທີ່ຢູ່ປ່າກາລີກາວັນ ເສືອມີຄວາມຍິນດີຈຶ່ງເອົາເຄື່ອງສັງວານ-ຄຳ ອັນເປັນຂອງພຣະຣາຊກຸມານທີ່ມັນໄດ້ກິນນັ້ນມາມອບໃຫ້ພານ ເພື່ອຕອບແທນຄຸນ ພານໄດ້ເຄື່ອງສັງວານຄຳນັ້ນແລ້ວ ກໍລາຈາກເສືອໄປ ຂນະເດີນມານຳທາງ ໄດ້ຄຶດຮ່ຳຮອນວ່າ: "ເຄື່ອງສັງວານນີ້ເປັນຂອງກະສັດ, ມີຄ່າຫລາຍ ບໍ່ຄວນທີ່ຈະເອົາອອກເອ້ຍ້ອງ ຄວນຈະຫລໍ່ຫລອມໄວ້ ໃຫ້ເປນຂອງມຸນມັງຕໍ່ໄປ" ຄິດດັ່ງນີ້ແລ້ວ ກໍຄິດເຫັນລະຫາຍຊ່າງຄຳຜູ້ທີ່ຕົນໄດ້ຊ່ອຍເຫລືອມາແຕ່ກ່ອນ ຈຶ່ງເບັດໜ້າໄປຫາຊ່າງຄຳ ເພື່ອໄປຫາຊ່າງຄຳຫລໍ່ຫຼອມໃຫ້.

ຊ່າງຄຳໄດ້ເຫັນສາຍສັງວານນັ້ນ ກໍຈື່ໄດ້ທັນທີວ່າ ເປັນສາຍສັງ-ວານຄຳຂອງພຣະຣາຊກຸມານອົງທີ່ຖືກເສືອຂົບຕາຍ ເພາະເປັນສີມືຂອງເຂົາເອງ ທັນທີນັ້ນ ຄວາມຄຶດໂລບ ແລະ ຫຶງສາ ກໍເກີດຂຶ້ນໃນສັນດານ-ຂອງຊ່າງຄຳ ມັນຮ່ຳເພິງວ່າ: "ເວລາກູຕົກລ້າງ ໄດ້ຮັບຄວາມຍາກແຄ້ນແສນສາຫັດ ພານຄົນນີ້ບໍ່ໄດ້ເອົາກູອອກກ່ອນ ມັນກັບໄປເອົາສັດເດັຍຣະ-ສານ ອັນບໍ່ແມ່ນເຊື້ອຊາດດຽວກັນອອກກ່ອນ ມັນຖືກູແຄ່ວນກູຜູ້ເປັນມະ-ນຸດດັ່ງດຽວກັນ ບັດນີ້ກູຈະຕ້ອງທຳໃຫ້ມັນຮູ້ຈັກຄວາມເປັນມະນຸດຂອງກູເສັຽກ່ອນ" ຄິດແລ້ວກໍບອກພານໃຫ້ຄອຍຖ້າຢູ່ເຮືອນ ສ່ວນຊ່າງຄຳຜູ້ອາງທັນນັ້ນ

ຮີບນຳຄວາມໄປທູນພຣະກະສັດວ່າ: "ຂໍທານໂທດ ເຣື່ອງທີ່ວ່າເສືອຂົບພຣະຣາຊໂອຣົດຕາຍນັ້ນ ບໍ່ແມ່ນສາແລ້ວ ຄວາມຈິງຂ້າພຣະບາດສືບສວນແລະໄດ້ຄວາມແນ່ ແມ່ນໂຈນຄົນນຶ່ງເປັນຜູ້ຂ້າພຣະຣາຊກຸມມານ ແລ້ວມັນຫາອຸບາຍ-ເອົາສົບໄປຖິ້ມໄວ້ໃນປ່າ ເວລານີ້ໂຈນຄົນນັ້ນໄດ້ເອົາສາຍສັງວານຂອງພຣະຣາຊກຸມມານມາໃຫ້ຂ້າພະບາດຫລໍ່ຫລອມໃໝ່ເພື່ອທຳລາຍຮູບພັນເດີມ ຂ້າພຣະບາດໄດ້ອຸບາຍໃຫ້ມັນຖ້າຢູ່ເຮືອນຂອງຂ້າພຣະບາດແລ້ວ ຂໍໃຫ້ສົ່ງຣາຊບຸຣຸດໄປຈັບເອົາຕົວມາ"

ພຣະຣາຊາໄດ້ສະດັບພ້ອມທັງມີພຣະໄທຄິດເຖິງພຣະຣາຊກຸມມານເປັນອັນມາກກໍໃຫ້ຣາຊບຸຣຸດ(໑)ໄປຈັບພານຄົນນັ້ນມາພ້ອມດ້ວຍສາຍສັງວານ ແລ້ວກໍຕັດຖາມພານວ່າ: "ພານ! ມຶງໄດ້ສາຍສັງວານນີ້ມາແຕ່ໃສ?" ພານທູນວ່າ: "ຂໍທານໂທດ ໄດ້ມາຈາກເສືອ ເສືອໄດ້ມອບສັງວານນີ້ໃຫ້ແກ່ຂ້າ-ພຣະບາດ"

ພຣະຣາຊາບໍ່ທົງພິຈາຣະນາໃຫ້ຖ້ວນຖີ່ ຫລົງເຊື່ອຕາມຄຳພານຂອງຊ່າງຄຳ ຈຶ່ງທົງພຣະຣາຊອາດຍາວ່າ: "ອ້າຍໂຈນ! ເສືອສາງທີ່ໃດຈະນີ-ສາຍສັງວານ ມຶງແຫລະເປັນໂຈນຂ້າພຣະຣາຊໂອຣົດຂອງກູ ເຮີຍ! ຣາຊບຸຣຸດ ຈົ່ງເອົາໂຈນນີ້ໄປປະຫານເສັຽ" ທັນທີນັ້ນພວກຣາຊບຸຣຸດກໍຄຸມເອົາພານ-ໄປສູ່ທີ່ປະຫານ ເວລາກຳລັງຖືກຄຸມໄປ ພານໄດ້ກ່າວສໂລກນີ້ຂຶ້ນວ່າ "ຄຳໃດອັນເສືອ ລີງ ແລະ ງູ ຫາກບອກກູໃນວັນນັ້ນ ກູບໍ່ຟັງລ່ວງເກີນຄຳຂອງເຂົາເສັຽ ຈຶ່ງຖືກຄົນຖ່ອຍຫລອກລວງໄດ້."

ໃນເວລາຖືກຄຸມຕົວໄປນັ້ນ ພວກຣາຊບຸດໄດ້ພາເອົາພານ-ກາຍມາ

---

(໑)ຄົນໃຊ້ຂອງພຣະຣາຊາ, ຕຳຣວຈ.

ທາງທີ່ນົບດິບບ່ອນງູຕົວທີ່ພານໄດ້ຊ່ອຍເຫລືອນັ້ນຢູ່, ງູເຫັນພານໄດ້ຮັບເຄາະ ຮ້າຍເຖິງຂນາດ ມີຄວາມລຳບາກ ຈຶ່ງຄິດວ່າ: "ເຖິງຄາວແລ້ວທີ່ກູຈະໄດ້ ຕອບແທນບຸນຄຸນຂອງທ່ານຜູ້ມີຄຸນ" ຄິດດັ່ງນີ້ແລ້ວ ງູກໍອອກຈາກນົບດິບແລ່ນ ລັດຂຶ້ນຕາລາດພຣະຣາຊາ ລິວເຂົ້າຕອດພຣະຣາຊບຸດຕີຂອງພຣະກະສັດ ທີ່ ກຳລັງເປັນສາວງາມເຕັມທີ່ດູຈດັ່ງດອກບົວທີ່ກຳລັງບານ ໃຫ້ລົ້ມລົງຕໍ່ໜ້າ ພຣະຣາຊບິດາ ແລ້ວຟ້າວລັບລີ້ໄປດ້ວຍກຳລັງຣິດ ພຣະຣາຊບິດາຕົກພຣະ ໄທ ຈຶ່ງໃຫ້ໄປນຳໝໍງູມາປິ່ນປົວຕັ້ງຫລາຍໝໍ ພິດງູກໍບໍ່ສ່ວງຫາຍ ດ້ວຍອຳ- ນາດຈິດກະຕັນຍູ ງູໄດ້ອະທິຖານໄຫວ້ຂໍໃຫ້ນາງອອກປາກເອງວ່າ: "ໝໍອື່ນ ທັງຫລາຍຈະມາປິ່ນປົວພິດງູຕົວນີ້ ໃຫ້ສ່ວງຫາຍບໍ່ໄດ້ ເວັ້ນໄວ້ແຕ່ພານຄົນ ທີ່ຣາຊບຸຣຸດຄຸມເອົາຕົວໄປປະຫານ"

ພຣະຣາຊາໄດ້ທົງສະດັບຄຳສູນອອກປາກຂອງນາງດັ່ງນັ້ນ ຈຶ່ງໃຫ້ ຣາຊບຸຣຸດຄົນນຶ່ງຟ້າວແລ່ນໄປນຳພານຄືນມາ ພໍກາຍມາທາງນົບດິບ ງູໄດ້ ເອີ້ນບອກພານຕາມພາສາງູທີ່ຄົນອື່ນບໍ່ສາມາດຮູ້ນຳໄດ້ວ່າ: "ທ່ານພານຜູ້ມີ ຄຸນ ທ່ານຈົ່ງເປົ່າພິດຂອງເຮົາໃຫ້ສ່ວງຫາຍຕາມໃຈເຖີດ".

ພານຂຶ້ນໄປຖວາຍບັງຄົມພຣະຣາຊາແລ້ວ ຈຶ່ງກົ້ມລົງເປົ່າລູກສາວ ພຣະຍາ: "ອົມຄຸຣຸງມະຫາຄຸຣຸ ຫຸນລຸລົວະຫາຍະ ຢົ່ງ!" ທັນໃດນັ້ນ ພິດງູ ກໍສ່ວງຫາຍປານປິດຖິ້ມ ພຣະຣາຊກຸມມາຣີລຸກນັ່ງໄດ້ທັນທີ ແລະມີອາການ ເໝືອນບໍ່ມີແນວໃດເກີດຂຶ້ນ ພຣະຣາຊາທົງພໍພຣະໄທ ຈຶ່ງພຣະຣາຊທານຊັບ ສິນບັດແລະຍົດສັກບໍຣິວານແກ່ພານເປັນອັນມາກ ພານໄດ້ຮັບອິສຣິຍະຍົດອັນ ຍິ່ງໃຫຍ່ ເພາະການທຳຄຸນພຽງເລັກນ້ອຍ ຈຶ່ງກ່າວສໂລກນີ້ວ່າ:

"ການທຳຄຸນໃຫ້ມະນຸດ(ຜູ້ອະກະຕັນຍູ ດັ່ງຊ່າງຄຳ) ບໍ່ມີປໂຍດ

---

(໓) ອິສຣິຍະຍົດ : ຄວາມເປັນໃຫຍ່

ອັນໃດເລີຍ ສູ້ທຳຄຸນໃນສັດເດັຽຣະສານຍັງດີກວ່າ ເຮົາທຳຄຸນໜ້ອຍນຶ່ງ ຄື: ເສືອ, ລີງ ແລະ ງູ ຍັງໄດ້ຮັບຄວາມເປັນໃຫຍ່ເຖິງປານນີ້"

ຄັນພານກ່າວສໂລກອັນນີ້ແລ້ວ ຈຶ່ງກາບທູນເຫດການທີ່ເປັນມາ ຕັ້ງແຕ່ຕົ້ນໃຫ້ພຣະຣາຊາຊົງຮູ້ທຸກປະການ ພຣະຣາຊາໄດ້ຊົງສະດັບເຫດການຈຶ່ງມີພຣະຣາຊອາດຍາໃຫ້ຈັບເອົາຊ່າງຄຳນັ້ນໄປປະຫານເສັຽ.

ເສືອເລົ່ານິທານນີ້ໃຫ້ລີງຟັງແລ້ວ ຈຶ່ງເວົ້າຊ້ຳອີກວ່າ: "ເຫັນບໍ່ລີງ! ຄົນນີ້ຊົ່ວທີ່ສຸດ ບໍ່ຮູ້ຈັກຄຸນສັງດອກ ເບິ່ງແຕ່ຊ່າງຄຳນັ້ນເທາະ ສະນັ້ນ ມຶງຈົ່ງວາງອ້າຍໜໍ່ນັ້ນລົງມາໃຫ້ກູກິນເສັຽ".

ລີງຕອບເສືອວ່າ: "ເອີ້ຍ! ເສືອ ພວກສູແຮ່ງຮ້າຍ ໃຈຊົ່ວໂຫດສາມານບັກ ບໍ່ຮູ້ຈັກຄຸນຜູ້ໃດເລີຍ ຕົວຢ່າງພານໃຈດີເຫັນເສືອຕາຍມາປົວເອົາຄືນ ຍັງຖືກເສືອຕົວນັ້ນຂົບຕາຍຊ້ຳ"

ເສືອຖາມ: "ເຣື່ອງເປັນຢ່າງໃດ?"

ລີງຖແລງ:

ນິທານແຊ້ມທີ ໑໙

ເຣື່ອງພານກັບເສືອ

ປາງກ່ອນມີພານຜູ້ນຶ່ງ ໄປຮຽນສາດຕະສິນອາຄົມທີ່ເມືອງຕັກກະສິລາ ໄດ້ວິຊາຊີວະວິທຍາ(ປົວຄົນຕາຍໃຫ້ຄືນໄດ້) ເວລາກັບຄືນມາເຖິງປ່າໃຫຍ່ແຫ່ງນຶ່ງ ເຫັນເສືອໂຄ່ງຕົວນຶ່ງຖືກງູຕອດ ນອນຕາຍຢູ່ ພານຄິດຢາກລອງສາດຕະສິນທີ່ຮຽນມາໃໝ່ ຈຶ່ງເຂົ້າໄປຫາເສືອ ເພາະເພິ່ນວ່າ:

"ຄົນທີ່ຮຽນໄດ້ວິຊາໃໝ່ ໑ ຜູ້ໄດ້ຮັບອິສຣິຍະຍົດໃໝ່ ໑ ຜູ້ຊາກໄດ້ສິນບັດໃໝ່ ໑ ຜູ້ກຳລັງຂຶ້ນໃຫຍ່ໃໝ່ ໑ ທັງ ໔ ຈຳພວກນີ້ຍ່ອມບໍ່ມີຄວາມອົດ-

ກົ້ນຍັງດິນໄວ້ໄດ້"

ດັ່ງນັ້ນພານຈຶ່ງເສກມົນທີ່ໄດ້ຮຽນມາໃໝ່ເປົ່າໃຫ້ເສືອຄືນ ພໍເສືອຄືນມາ ກໍໂດດຂົບພານນັ້ນກິນເສັຽ ລີງເລົ່ານິຍາຍນີ້ໃຫ້ເສືອຟັງແລ້ວ ຈຶ່ງກ່າວສໂລກນີ້ວ່າ:

."ການທຳຄຸນໃຫ້ຄົນຜູ້ບໍ່ຮູ້ຈັກຄຸນນັ້ນ ແມ່ນຈັ່ງໃດມັນກໍຍັງບັງບຽດ-ທ່ານຜູ້ທີ່ໄດ້ທຳຄຸນໃຫ້ສເມີ ເສືອໂຄ່ງອາທັນ ມັນຍັງຂົບກິນພານຜູ້ປິ່ນປົວຕົນໃຫ້ຈົບຫາຍເສັຽ."

ຄາວນັ້ນ ມີໝາຈອກຕົວນຶ່ງ ມາເຫັນເສືອນັ່ງແຫນໜ້າຢູ່ໃຕ້ຕົ້ນໄມ້ຈຶ່ງຖາມວ່າ: "ສະຫາຍມານັ່ງແຫນໜ້າຢູ່ເຮັດສັງ?" ເສືອຕອບໝາຈອກວ່າ"ກູເວົ້ານິທານສັ່ງສອນລີງ ເພື່ອໃຫ້ມັນຮູ້ເນື່ອຄີງໃນຄວາມໂງ່ຂອງມັນ ທີ່ມັນຫລົງຮັກມະນຸດຜູ້ອາທັນນັ້ນ" ໝາຈອກວ່າ: "ເຈົ້າກູຈະມາຊັກນິທານໃຫ້ລີງຟັງດັ່ງນັ້ນ ມັນຈະຮູ້ຈັກສັງເດ! ເພິ່ນຍັງວ່າ:

"ຜູ້ມີຄວາມຄິດຍັງພໍຕຸກເຕືອນກັນໄດ້ ແຕ່ຜູ້ບໍ່ມີຄວາມຄິດ ບໍ່ຄວນຕຸກເຕືອນເລີຍ, ທັມມະຊາດລີງ ມັນຈະມີຄວາມຄິດປັນຍາແນວໃດ ເບິ່ງແຕ່ນົກຈອກຟ້າບອກສອນມັນດີໆ ມັນຍັງຄຽດແລະບັງບຽດນົກຈົນໄດ້ໜີປະຮັງ"

ເສືອ ຖາມ: "ເຣື່ອງເປັນແນວໃດ?"

ໝາຈອກເລົ່ານິທານ:

ນິທານແອັນທີ ໑໔

ເຣື່ອງ ລີງ ກັບ ນົກຈອກຟ້າ

ແຄມຝັ່ງແມ່ນ້ຳນັມມະທາ ມີປ່າໄມ້ໃຫຍ່ງາມສາງຫລາຍ ນົກຈອກຟ້າຕົວນຶ່ງ ເຮັດຮັງຢູ່ເທິງຕົ້ນໄມ້ໃນປ່ານັ້ນ ເທິງຕົ້ນໄມ້ມີແນງທ່າງຫ້ອຍແລະ

ລີງຄິດພຶ່ງອາໄສຢູ່ນຳ.

ແລງວັນນຶ່ງ ເກີດລົມພາຍຸຝົນຊິລຫາດຕ່າງໃຫຍ່ ຕົກລົງມາເປັນເວລາເຫິງນານ ນົກຈອກຟ້າເຂົ້າໄປນອນຢູ່ໃນຮັງຢ່າງບໍລິນນະສຸກ ສ່ວນລີງນັ່ງຕາກຝົນຢູ່ເທິງງ່າໄມ້ຈົນໜາວສັ່ນ ນົກຈອກຟ້າເຫັນກໍມີຄວາມສົງສານຈຶ່ງກ່າວຕັກເຕືອນວ່າ: "ດູລາລີງ ມືຕີນ ແລະ ເຫື່ອແຮງ ຂອງທ່ານມີຄົບຖ້ວນ ສາ-ມາດທຳກິຈການໄດ້ທຸກຢ່າງ (ເໝືອນມະນຸດ) ເຫດໃດທ່ານ ຈຶ່ງບໍ່ທຳເຮືອນນ້ອຍຢູ່ ພໍໃຫ້ນຸງໃຫ້ບັງລົມຝົນໄດ້."

ລີງໄດ້ຍິນທີ່ນັ້ນກໍຄຽດ ພໍຝົນເຊົາແລ້ວກໍແລ່ນຂຶ້ນໄປຈັບຮັງນົກຍອງ-ເສັງຈົບມຸ່ນ ນົກຈອກຟ້າເຫັນດັ່ງນັ້ນ ຈຶ່ງກ່າວຄຳສໂລກບົດນຶ່ງຕ່າງຕ້ອຍວ່າ: "ດູລາຕ່າງຕ້ອຍ ທ່ານເບິ່ງເທາະ! ເບິ່ງອ້າຍອາທັນນັ້ນ ກູຫວັງປໂຍດໃຫ້ມັນຢູ່ສະບາຍ ຈຶ່ງກ່າວຕັກເຕືອນມັນໂດຍດີ ແຕ່ຄັ້ນແລ້ວຮັງຂອງກູ ຕ້ອງຈິບຫາຍຍ້ອນມັນ"

ຕ່າງຕ້ອຍ ສເນີຕອບວ່າ: "ດູລານົກຈອກຟ້າ ທ່ານຈຶ່ງຮູ້ໄວ້ ທັມມະ-ດາໄມ້ແຫ້ງຕາຍຂານ (ທີ່ຄົດງໍ) ຜູ້ມີປັນຍາບໍ່ຄວນເອົາມາເບັດ (ເຮັດໃຫ້ຊື່) ດາບງ້າວບໍ່ຄວນເອົາຟັນກ້ອນຫີນ, ຄົນຜູ້ມີປັນຍາບໍ່ຄວນກ່າວເຕືອນຜູ້ຫຽາບ-ຊ້າກ້າແຂງເລີຍ"

ຜູ້ມີປຽາ ບໍ່ຄວນກ່າວເຕືອນຄຳອັນມີປໂຍດ ສອນຄົນຜູ້ປາກກ້າ-ທາງຄວາມ, ຜູ້ມີປຽາຄວນຫລີກເວັ້ນການກິນຢູ່ຫລັບນອນນຳຄົນຊົ່ວທຸກເວລາ.

ໝາຈອກເລົ່ານິທານນີ້ແລ້ວ ຈຶ່ງກ່າວຊ້ຳອີກວ່າ: "ສັນຍະຊາດຂອງລີງນີ້ ມັນບໍ່ຮູ້ຈັກຄິດຈັກແນ່ນສັ່ງດອກ ຢ່າສອນມັນເລີຍ ພຣະຍາທັມມະລິນ ແລະ ມະເຫສີ ຖືກຂ້າຕາຍ ກໍຍ້ອນຄວາມໂງ່ຂອງລີງ ນັ້ນເອງ."

ເສືອ ຖາມ: "ເຣື່ອງເປັນຢ່າງໃດ?"

ໝາຈອກເລົ່ານິທານຕື່ມ:

ນິທານແອັນທີ ໑໕

ເຣື່ອງ ພຣະຍາທັມມະລິນ ກັບ ລີງ

ພຣະຍາທັມມະລິນ ສເວີຍຣາຊສົມບັດຢູ່ໃນນະຄອນນະເຫນທະຣາ ພຣະອົງລ້ຽງລີງໃຫຍ່ໄວ້ຕົວນຶ່ງ ແລະສອນໃຫ້ມັນຮູ້ຈັກຖືດາບຢືນຍາມເຝົ້າ-ພຣະອົງ ວັນນຶ່ງພຣະຣາຊາກັບພຣະນະເຫສີ ສະເດັດອອກໄປຫລິ້ນໃນສວນ ລຳພັງແຕ່ສອງພຣະອົງ ພ້ອມກັບ ລີງເປັນຣາຊອົງຄະຮັກ ພຣະຣາຊາ ກັບ ພຣະນະເຫສີເກັບດອກໄມ້ຮ້ອຍເປັນພວງມາໄລໃສ່ຄໍ ແລ້ວຂຶ້ນໄປບັນທົມຫຼັບ ຢູ່ເທິງຫີນມົນດິບ ຕັດສັ່ງລີງໃຫ້ຖືດາບຢືນເຝົ້າວ່າ ຖ້າມີຜູ້ໃດຜູ້ນຶ່ງມາທີ່ນີ້ ຈຶ່ງຟັນເສັຽ ສັ່ງແລ້ວ ພຣະຣາຊາ ກັບ ພຣະນະເຫສີ ກໍບັນທົມຫລັບໄປ ເວ-ລານັ້ນ ມີແມງຜູ້ຕົວນຶ່ງບິນມາຕອມດອກໄມ້ທີ່ຄ້ອງຢູ່ຄໍພຣະຣາຊາແລະພຣະ-ນະເຫສີ ລີງເຫັນດັ່ງນັ້ນ ກໍຄິດວ່າແມງຜູ້ຈະມາທຳອັນຕະຣາຍແກ່ພຣະຣາ-ຊາ ຈຶ່ງຍົກດາບຂຶ້ນຟັນແມງຜູ້ ດາບເລີຍຖືກພຣະສໍ (ຄໍ) ຂອງພຣະຣາຊາ ແລະ ພຣະນະເຫສີ ຂາດຕາຍ. ເພາະສະນັ້ນ ຂ້າພະເຈົ້າ(ໝາຈອກ)ຈຶ່ງວ່າ ສັນຍະຊາດລີງ ບໍ່ຮູ້ຈັກຜິດຈັກແນ່ນ ໝາຈອກກ່າວທີ່ນີ້ແລ້ວກໍໜີໄປ.

ຝ່າຍເສືອນັ້ນ ເຝົ້ານາຍພານກັບລີງຢູ່ຈົນເດິກ ເຫັນທ່າຈະບໍ່ໄດ້ກິນແນ່ແລ້ວ ກໍເລີຍໜີໄປ ສ່ວນນາຍພານນອນຢູ່ງ່າໄມ້ນັ້ນກັບລີງ ພໍຮຸ່ງເຊົ້າມາ ລີງຈະໄປຫາໝາກໄມ້ມາສູ່ນາຍພານກິນ ຈຶ່ງຝາກລູກນ້ອຍສອງຕົວ ໃຫ້ນາຍພານຮັກສາ ພໍແນ່ລີງໄປແລ້ວ ນາຍພານຜູ້ອະກະຕັນຍູ ທົນຄວາມຫິວບໍ່ໄດ້ກໍຂ້າລູກລີງສອງຕົວນັ້ນປີ້ງໄຟກິນເສັຽ ແຖມຍັງຄິດອີກວ່າ ເມື່ອກູກັບຄືນເມືອ

ບໍ່ໄດ້ເບື້ອເຖິກແນວໃດຕິດນີເນືອ ລູກເນັ້ງຂອງກູກໍຈະຮ້າຍດ່າ ຈັ່ງໃດກໍຕ້ອງ ເອົາແມ່ລິງຕົວນີ້ແຫລະ ເມືອເປັນອາຫານ ຄິດດັ່ງນີ້ແລ້ວ ພໍແມ່ລິງກັບຄືນມາ, ນາຍພານກໍເອົາຄ້ອນທຸບຫົວແມ່ລິງຕາຍ ແລ້ວຖືເດີນກັບຄືນມາເຮືອນ ມາ ເຖິງກາງທາງ ພຣະທໍຣະນີກໍຍະຊອກສູບເອົານາຍພານລົງໄປຕົກຢູ່ໃນໜ້ນາ-ຣົກໜ່ອຍຊື່ວ່າ ຕະປາຕະ ນັ້ນແລ.

ນົກແຕບແຕ້ ອຸດຕານະປາຕະ ເລົ່ານິຍາຍໃຫ້ເນັ້ງຟັງແລ້ວ ຈຶ່ງໃຫ້ ປະຊຸມບັນດານົກທັງຫລາຍ ເລົ່າເຫດຄວາມເດືອດຮ້ອນໃຫ້ພວກນົກຟັງ ແລ້ວ ຈຶ່ງພາກັນບິນໄປຫາພຣະຍາຄຸດ ຖແລງເຫດໃຫ້ຊາບ ພຣະຍາສຸບັນນະປັກສີກໍ ນຳເຫດເດືອດຮ້ອນຂອງນົກແຕບແຕ້ນັ້ນ ຂຶ້ນສເນີຕໍ່ພຣະນາຣາຍ ຜູ້ເປັນເຈົ້າ ສ້າງໂລກ ແລ້ວພຣະນາຣາຍກໍທົງບັນດານໃຫ້ຟອງນ້ຳສມຸດນັ້ນ ໄຫລທວນຄືນ ນຳເອົາໄຂ່ນົກແຕບແຕ້ມາໄວ້ທີ່ຫາດຊາຍດັ່ງເດີມ.

ອະສຸພາຄຍະ ເລົ່ານິທານນີ້ສຸດແລ້ວ ຈຶ່ງກາວສໂລກນີ້ວ່າ: " ຂ້າ ແຕ່ຣາຊາ ອັນຄົນຜູ້ມີກຳລັງມາກ ມັກຖືທຸນຜູ້ມີກຳລັງໜ້ອຍວ່າ ເຂົາບໍ່ອາດທຳ ອັນຕະຣາຍໃຫ້ໄດ້ ແຕ່ພຣະອະຣຸນະ (ເຈົ້າແຫ່ງປີນ) ຜູ້ມີສງ່າດັ່ງກ້ອງພິລຶກ, ຍັງຖືກນົກແຕບແຕ້ຍາບແພ້ໄດ້ ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ ນອກຈາກ ເບິ່ງສະພາບຮ່າງກາຍ ແລະ ລິ້ງທີ່ກ່ຽວກັບຮ່າງກາຍແລ້ວ ຈະກະປະມານ-ກຳລັງອັນແທ້ຈິງຂອງຜູ້ອື່ນບໍ່ໄດ້.

ຣາຊສີ ຖາມ: "ເຮັດຈັ່ງໃດຈັ່ງຊິຮູ້ຈັກຄັກແນ່ວ່າ ງົວນັນທະກະຄິດ ຮ້າຍຕໍ່ເຮົາ"

ອະສຸພາຄຍະ ຕອບ: "ໃຫ້ພຣະບາດຄອຍສັງເກດ ເມື່ອນັນທະກະ ເຂົ້າມາ ຄົງກົ້ມຫົວຫັ້ງງທ່າຊົນເຂົ້າມາ ບາດນັ້ນແຫລະຈະຮູ້ໄດ້.......

ແລະ ຈຶ່ງລະວັງໄວ້" ວ່າແລ້ວ ອະນຸພາຄຍະ ກໍລາໜີໄປຫາງົວບັນທະກະ, ງົວບັນທະກະເຫັນອະນຸພາຄຍະມາ ຈຶ່ງຖາມວ່າ: "ສະບາຍດີບໍ! ສະຫາຍ" ອະນຸພາຄຍະ ຕອບ: "ອັນຮ່າງກາຍສະບາຍດີຢູ່ດອກ ແຕ່ຂ້າພະເຈົ້າ ອຸກໜິກອຸກໃຈເຕັມທີ ເພາະມັນເຂົ້າທຳນອງທີ່ເພິ່ນວ່າ ຖິ້ມໝາເສັຽດາຍເຕົ່າ, ຖິ້ມເຕົ່າກໍເສັຽດາຍໝາ ຂ້າພະເຈົ້າກຳລັງຕົກຢູ່ໃນລະຫວ່າງກາງໄຜ ບໍ່ຮູ້ຈະຊ່ອຍຝ່າຍໃດດີ ເພາະຝ່າຍນຶ່ງເປັນນາຍ ອີກຝ່າຍນຶ່ງເປັນເພື່ອນ"

ບັນທະກະຮ້ອນໃຈ ຈຶ່ງຖາມວ່າ: "ເຣື່ອງອີ່ຫຍັງກັນ? ທ່ານມີຄວາມຄັບອົກຄັບໃຈແນວໃດ ບອກມາດູ໊!"

ອະນຸພາຄຍະ ເຂົ້າໄປໃກ້ແລ້ວສື່ມໃສ່ຫູບັນທະກະວ່າ "ສ່ຽວເອີຍ ຂ້າພະເຈົ້າມີຄວາມອິດົກນຳທ່ານຫລາຍ ເພາະດຽວນີ້ສັງເກດເຫັນວ່າ ຣາຊສີ ຊູ່ເປັນນາຍຂອງເຮົາ ບໍ່ມີຄວາມພໍໃຈໃນຕົວເຈົ້າເສັຽແລ້ວ ໄດ້ຍິນເພິ່ນເວົ້າເປັນຄວາມລັບວ່າ ຈະຕ້ອງຂ້າເຈົ້າກິນເສັຽ ຂ້າພະເຈົ້າໄດ້ຍິນມາດັ່ງນີ້ ຈຶ່ງອຸກໃຈຫລາຍ ເພາະການທີ່ທ່ານໄດ້ມາຢູ່ທີ່ນີ້ ເປັນສຸກກໍຍ້ອນຂ້າພະເຈົ້າພາມາ ທ່ານ ແລະ ຂ້າພະເຈົ້າ ເປັນສະຫາຍກັນ ຂ້າພະເຈົ້າມີຄວາມສົງສານໃນເຣື່ອງນີ້ ຈຶ່ງມາຕຸກເຕີນ ຂໍໃຫ້ຟັງຂ້າພະເຈົ້າຢ່າອ້ວງດີ, ຜູ່ໃດບໍ່ຟັງຄວາມຕຸກເຕີນຂອງສະຫາຍຢ່າອ້ວງດີ ຜູ່ນັ້ນຕ້ອງເຖິງຄວາມພິນາດດັ່ງດຽວກັນກັບເຕົ່າບໍ່ຟັງຄວາມຫົງ"

ບັນທະກະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະນຸພາຄຍະ ເລົ່ານິທານ:

ນິທານແບ້ນທີ ໑໗

ເຣື່ອງ ເຕົ່າ ກັບ ຫົງ

ປາງກ່ອນ ມີໜອງໜຶ່ງຊື່ ຕຸນໂລດະບິນ ຢູ່ໃນປະເທດມະຄົດ ມີຫົງສອງໂຕຊື່ ສັງກະຕະ ແລະ ວິກະຕະ ອາໄສຢູ່ໃນໜອງນັ້ນ ຫົງທັງສອງຈຶ່ງ-ເວົ້າກັບເຕົ່າວ່າ: "ສ່ຽວເອີຍ! ນ້ຳໃນໜອງນີ້ບົກແຫ້ງໝົດແລ້ວ ພວກເຮົາຈະອາໄສຢູ່ໄດ້ຢ່າງໃດ? ເພາະບໍ່ມີອິນຈະກິນ ດັ່ງນັ້ນພວກເຮົາຕ້ອງຍ້າຍໄປຫາຢູ່ໜອງອື່ນທີ່ມີນ້ຳ ແລະ ອາຫານບໍລິບູນ ແລະເຣື່ອງບ່ອນຢູ່ໃໝ່ນີ້ ຂ້າພະເຈົ້າ ໄດ້ໄປເຫັນມາແລ້ວ ມີໜອງໜຶ່ງຊື່ ບັນທະນະ ຢູ່ແຄມປ່າໃຫຍ່ໃນອຸດຕະ-ຣະປະເທດ ເຮົາມາພາກັນໄປຢູ່ໜອງນັ້ນເຖີ້ນ"

ເຕົ່າກ່າວວ່າ: "ສະຫາຍທັງສອງມີປີກຫາງ ຈະໄປເວລາໃດກໍໄດ້ບໍ່ຍາກສັງ ສ່ວນຂ້າພະເຈົ້າຈະໄປໄດ້ຢ່າງໃດ?"

ຫົງກ່າວວ່າ: "ຖ້າສະຫາຍຟັງຄວາມເຮົາ ເຮົາກໍຈະຫາອຸບາຍພາສະຫາຍໄປຈົນໄດ້ ຂໍແຕ່ໃຫ້ຟັງຄຳຕຸກເຕີນຂອງເຮົາໃຫ້ໄດ້".

ເຕົ່າ ຖາມ: "ສະຫາຍຈະທຳຢ່າງໃດ?"

ຫົງບອກ: "ເຮົາທັງສອງຈະຄາບສົ້ນໄມ້ຄົນລະທາງ ໃຫ້ສະຫາຍຄາບທາງກາງ ແລ້ວຈະພາບິນໄປ ແຕ່ທ່ານຕ້ອງລະວັງໃຫ້ດີ ເວລາພວກເຮົາພາທ່ານໄປໃນອາກາດ ທ່ານຢ່າເວົ້າຈາແນວໃດເປັນອັນຂາດ ເຖິງແມ່ນຈະມີຜູ້ໃດວ່າກ່າວທັກທ້ວງແນວໃດກໍຢ່າລັ່ງປາກເວົ້າ ຖ້າທ່ານລະວັງໄດ້ທ່ານຈະໄດ້ໄປຢູ່ສະບາຍນຳພວກເຮົາ".

ເຕົ່າຮັບຮອງ: "ເອີດີແລ້ວ ຂ້າພະເຈົ້າຈະບໍ່ລືມຄຳເຕືອນຂອງສະ-ຫາຍດອກ ກະລຸນາພາຂ້າພະເຈົ້າໄປໂດຍໄວເຖີ້ນ"

ເມື່ອຕົກລົງສັນຍາກັນຮຽບຮ້ອຍແລ້ວ ຫົງທັງສອງກໍຄາບສົ້ນໄມ້ຄົນ-ລະສົ້ນ ໃຫ້ເຕົ່າຄາບທາງກາງ ແລ້ວຫາມເຕົ່າບິນໄປ ພໍໄປເຖິງຍ່ານກາງ-

ປ່າແຫ່ງນຶ່ງ ມີໝາຈອກຕົວນຶ່ງເຫັນຫົງຫາມເຕົ່າບິນມາກໍຄຶດໃນໃຈວ່າ "ເຕົ່າຕົວນີ້ ຖ້າກູຍຸໃຫ້ມັນອ້າປາກໄດ້ ມັນຕ້ອງເປັນອາຫານຂອງກູແນ່ນອນ" ຄຶດແລ້ວ ຈຶ່ງແຫນໜ້າຂຶ້ນເວົ້ານຳຫົງວ່າ: "ເຮີຍ! ຫົງ ເຂືອຈັກຫາມເຕົ່າໄປໃສ? ຊາດເຕົ່ານີ້ ມັນເຄີຍຢູ່ນ້ຳ ເຂືອພາມັນໄປທາງອາກາດດັ່ງນີ້ ມັນຈະຂາດໃຈຕາຍສາບໍ້! ຈະເອົາມັນໄປເປັນປໂຍດແນວໃດ ຫລື ວ່າພວກທ່ານຈະເອົາມັນໄປກິນເປັນອາຫານ" ເຕົ່າໄດ້ຍິນຄຳໝາຈອກກ່າວດັ່ງນັ້ນກໍຄຽດ ຄຶດຈະຕອບໝາຈອກວ່າ: "ທຸຣະອັນໃດກັບມຶງ ມຶງຈຶ່ງມາວ່າໃຫ້ ພວກກູເປັນສະຫາຍກັນ ຈະໄປນຳກັນທາງໃດກໍຄຳແລ້ວ ມຶງບໍ່ຕ້ອງມາເວົ້າ" ຄຶດແລ້ວກໍອ້າປາກຂຶ້ນຈະດ່າໝາ ປາກ:ລິຍຫລຸດຈາກໄມ້ຕົກລົງມາຕາຍ.

ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ "ຜູ່ໃດ ບໍ່ຟັງຄວາມຕັກເຕືອນ-ຂອງເພື່ອນຜູ່ຫວັງດີ ຜູ່ນັ້ນ ຕ້ອງເຖິງຄວາມພິນາດ"

ບັນທະກະ ຖາມ ອະສຸພາຄຍະ ວ່າ: "ຂ້າພະເຈົ້າໄດ້ເຮັດຜິດແນວໃດໜໍ! ເຈົ້ານາຍຈຶ່ງຄຽດຊັງ ຈົນຫວັງທຳຮ້າຍເຖິງປານນີ້"

ອະສຸພາຄຍະ ຕອບ: "ທ່ານຈົ່ງຟັງບູຮານເພິ່ນວ່າ ການທຳຄຸນ-ນຳຄົນພານສັນດານຫຽາບ ຕັ້ງຮ້ອຍເທື່ອກໍບໍ່ມີຜົນ, ກ່າວສຸນທອນພົດ (໑) ໃຫ້ຄົນໂງ່ຟັງຕັ້ງຮ້ອຍຫົນກໍເສັຽການ, ເວົ້າສອນຜູ່ມີສັນດານດື້ດຶງ ຕັ້ງຮ້ອຍສະ-ຖານ ກໍບໍ່ມີປໂຍດ, ແນະນຳຄົນສາໂຫດປັນຍາປູ່ຕັ້ງຮ້ອຍແນວກໍເມື່ອຍລ້າ: ອີກປະການນຶ່ງ ເພິ່ນຍັງວ່າ ຢ່າໄວ້ໃຈ ແມ່ນ້ຳ, ຜູ່ມີສາດຕາອາວຸດໃນມື, ສັດມີເລັບ, ມີເຂົາ, ສັດຕີ ແລະ ພຣະຣາຊາ.

ສະນັ້ນ ທ່ານຈົ່ງລະວັງຟັງຄຳເຕືອນຂອງຂ້າພະເຈົ້າ ເພາະນິໄສສັດຕູປາກຫວານປານນ້ຳອ້ອຍ ແຕ່ໃຈນ້ອຍເໝືອນເຂົາຮໍ່: ປະການນຶ່ງ ຜູ່ທີ່

---

(໑) ສຸນທຣພຈນ໌ ເວົ້າດີ, ເວົ້າຄຳມີປໂຍດ.

ກຳລັງເມົາອຳນາດ ກໍມັກປະມາດຂົ່ມເຫງຜູ້ບໍ່ມີກຳລັງສເມີກັນ ດ້ວຍເຂົ້າໃຈວ່າ ເຂົາຈະບໍ່ເຮັດສັງຕົນໄດ້ ດັ່ງຊ້າງສານຊັບມັນ ຢຽບລູກນົກໄສ່ ຕາຍສັບບັ້ນ".

ບັນທະກະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະນຸພາຄຍະ ເລົ່ານິທານ:

ນິທານແອັນທີ ໑໗

ເຣື່ອງ ຊ້າງ ກັບ ນົກໄສ່

ຢູ່ປ່າເອຣຸັນ ມີນົກໄສ່ເຮັດຮັງຢູ່ເທິງສຸມໄມ້ ຄັ້ງນັ້ນມີຊ້າງສານຕົວນຶ່ງກຳລັງຊັບມັນເດີນກົນມາທາງນັ້ນ ນາງນົກໄສ່ເຫັນຊ້າງມາ ຢ້ານຊ້າງດຶງຮຽງໄມ້ທີ່ຮັງຂອງຕົນຢູ່ ຈຶ່ງເຂົ້າໄປຫາຊ້າງ ໄຫວ້ວອນວ່າ: "ຂ້າແຕ່ ເຈົ້າກູຜູ້ປະເສີດ ທີ່ນີ້ເປັນບ່ອນຢູ່ຂອງຂ້າພະເຈົ້າ ແລະເວລານີ້ ລູກຂອງຂ້າພະເຈົ້າຍັງອ່ອນບິນບໍ່ທັນໄດ້ ຂໍເຈົ້າກູຈົ່ງຢ່າໄດ້ດຶງຮຽງໄມ້ ທີ່ຮັງຂອງຂ້າພະເຈົ້າຢູ່ນັ້ນເຖີດ ໂຜດໄດ້ກະຣຸນາຫລີກໄປທາງອື່ນກ່ອນ"

ຊ້າງສານໄດ້ຍິນນາງນົກໄສ່ເວົ້າດັ່ງນັ້ນ ກໍໂອດລະຫາວວ່າຕົນມີກຳລັງມາກ ຈຶ່ງຕອບນາງນົກວ່າ: "ເບິ່ງດູ! ນາງນົກນ້ອຍ ເຫດໃດມຶງຈຶ່ງມາເຮັດຮັງຢູ່ບ່ອນຫາກິນຂອງກູ ທີ່ປ່ານີ້ເປັນເຂດແດນຂອງກູຜິດ ໃຜຈະມາກີດຂວາງບ່ອນຫາກິນຂອງກູບໍ່ໄດ້" ວ່າແລ້ວກໍດຶງຮຽງໄມ້ອັນນົກເຮັດຮັງໄສ່ນັ້ນ ມາຢ່ຳຍີເສັຽ ຢຽບລູກນົກໄສ່ແຫລກລະອຽດແລ້ວກໍໜີໄປ.

ນາງນົກໄສ່ມີຄວາມເສັຽໃຈເປັນອັນມາກ ຈຶ່ງໄຫວ້ວອນນົກຕົວຜົວວ່າ: "ທ່ານສາມີ ເຮັດຈັ່ງໃດເຮົາຈຶ່ງຈະແກ້ແຄ້ນສັດຕົວຫລວງນີ້ໄດ້" ນົກຕົວຜົວເຫັນເມັຽທຸກໂສກນຳລູກດັ່ງນັ້ນ ຈຶ່ງໄປປຶກສານຳກາຕົວຊື່ວ່າ.....

ອະຣິດຖະ ທີ່ເປັນສະຫາຍກັນ ບອກເຫດການທີ່ຊ້າງຂ້າລູກຕົນ ໃຫ້ສະຫາຍ
ຟັງ ກາສະຫາຍກ່າວວ່າ: "ເພື່ອນເອີຍ! ຈະທຸກໂສກໄປເຮັດຫຍັງ ເພາະ
ຄວາມຕາຍນີ້ເປັນຂອງທັມມະດາ ເມື່ອມັນເຖິງເວລາແລ້ວແມ່ນໃຜຈະຫລີກ
ເວັ້ນໄດ້ ເພາະສະນັ້ນ ທ່ານຢ່າໄດ້ເປັນທຸກນຳລູກທີ່ຕາຍໄປແລ້ວນັ້ນອີກ
ເລີຍ ເພາະຄວາມຕາຍເປັນຂອງທັມມະດາ ແຕ່ສິ່ງທີ່ຄວນເຮັດໃນເວລານີ້
ກໍຄື ທຳຢ່າງໃດສັດຕູຂອງທ່ານຈຶ່ງຈະເຖິງຄວາມພິນາດ ທ່ານຈຶ່ງຄິດຫາອຸ
-ບາຍນັ້ນ ດີກວ່າຈະໂສກເສົ້າ" ເວົ້າແລ້ວກໍໃຫ້ນົກໄສ່ໄປຫາມັນທຸກະອາດ
(ພຣະຍາກົບ) ຜູ້ສະຫາຍ ຂໍໃຫ້ບອກອຸບາຍອັນຈະກຳຈັດຊ້າງ ນາງນົກໄສ່.
ໄປຫາພຣະຍາກົບ ເລົ່າເຫດການທີ່ເປັນມາໃຫ້ຊາບທຸກປະການ ພຣະຍາ
ກົບ ໄດ້ຟັງຈຶ່ງກ່າວວ່າ: "ສ່ຽວເອີຍ! ຊ້າງຕົວນັ້ນ ມັນອວດສະຫາວອ້າງ
ວ່າຕົວໃຫຍ່ມີກຳລັງຫລາຍ ໃຜບໍ່ອາດຈະຕໍ່ສູ້ໄດ້ ມັນຈຶ່ງໄດ້ຂົ່ມເຫງທ່ານຜູ້ມີ
ກຳລັງໜ້ອຍ, ທີ່ແທ້ ເມື່ອຜູ້ມີກຳລັງໜ້ອຍ ຫລື ບໍ່ມີກຳລັງກໍຕາມ ແຕ່ມີຜຸງາ
ປັນຍາປະກອບອຸບາຍສລາດ ກໍອາດສາມາດປະຈົບແພ້ຜູ້ມີກຳລັງມາກໄດ້ດັ່ງ
ດຽວກັບເຕົ່າຊາບແພ້ພຣະຍາຄຸດ ສັນນັ້ນ"

ນົກໄສ່ ຖາມ: "ເຣື່ອງເປັນຢ່າງໃດ?"

ກົບ ເລົ່ານິຍາຍ:

ນິທານແຊ້ມທີ ໑໕

ເຣື່ອງ ເຕົ່າກັບຄຸດ

ມີຄຸດຕົວນຶ່ງບິນໄປຫາອາຫານແຄມຝັ່ງມະຫາສມຸດ ເຫັນເຕົ່າຕົວ
ນຶ່ງ ກຳລັງຄານງຸບງັບມາ ຈຶ່ງຊຸດລົງຫງຸມເອົາໄດ້ ເຕົ່າຕົກໃຈ ແຕ່ຕັ້ງສະ
-ຕິ ໄດ້ວ່າ: "ເວລາໃດທີ່ໄພອັນຕະລາຍຍັງຢູ່ໄກ ກໍຄວນຢ້ານ ແລະຫລີກ

ເວັ້ນໄພອັນຕະຣາຍນັ້ນໃຫ້ໄກ ແຕ່ເມື່ອມັນມາໃກ້ແລ້ວ ກໍຄອຍຈັດການໃຫ້-ເໝາະສົມ" ຄິດແລ້ວຈຶ່ງເອີ້ນບອກຄຸດວ່າ: "ດູກ່ອນພຣະຍາຄຸດ ທ່ານມາຫຼອນຂຸດເອົາຂ້າພະເຈົ້າໄດ້ດັ່ງນີ້ ທ່ານຢ່າຟ້າວອວດອ້າງວ່າຕົວມີກຳລັງມາກ ຖ້າທ່ານມີກຳລັງມາກແທ້ ທ່ານຈົ່ງປ່ອຍຂ້າພະເຈົ້າເສັຽກ່ອນແລ້ວຈຶ່ງມາລອງຣິດທີກັນໃໝ່ ຖ້າຂ້າພະເຈົ້າສູ້ທ່ານບໍ່ໄດ້ນັ້ນແຫລະ ທ່ານຈຶ່ງກິນຂ້າພະເຈົ້າເສັຽ"

ຄຸດຖາມ: "ຈະລອງກັນດ້ວຍວິທີໃດ?"

ເຕົ່າຕອບ: "ເສັງກັນຂ້າມມະຫາສມຸດດີ! ທ່ານບິນໄປທາງອາກາດ ຂ້າພະເຈົ້າຈະມຸດໄປທາງນ້ຳ ໃຜຈະຮອດຝັ່ງພຸ້ນກ່ອນກັນ ໃຜຮອດກ່ອນຜູ້ນັ້ນຕ້ອງແພ້"

ຄຸດໄດ້ຟັງເຕົ່າກໍຄິດຫົວຂວັນຢູ່ໃນໃຈວ່າ: "ບ້າອ້າຍເຕົ່າຕົວນີ້ ມັນອວດເກັ່ງ ຈະລອງດີກັບມັນເບິ່ງກ່ອນ ກູບິນກັບໄປກັບມາຈັກພັນຖ້ຽວ ມັນຈະໄປໄດ້ຈັກກີ່ວາໜໍ!" ຄິດແລ້ວກໍວາງເຕົ່າເສັຽ ແລ້ວຕົກລົງນັດວັນຈະສະແດງຣິດເສັງກັນ.

ຝ່າຍເຕົ່າ ພໍຄຸດໜີໄປແລ້ວ ຈຶ່ງຮຽກປະຊຸມບັນດາຍາດພີ່ນ້ອງ ເຕົ່າທັງຫລາຍທີ່ຢູ່ໃນມະຫາສມຸດ ນັດໝາຍໃຫ້ເຕົ່າຢາຍກັນຢູ່ຕັ້ງແຕ່ຝັ່ງທາງນີ້ ຈົນເຖິງຝັ່ງທາງນັ້ນ ເມື່ອໃດຄຸດຮ້ອງຫາໃຫ້ຂານຮັບເປັນຣະຍະໆໄປ ຄັນນັດໝາຍກັນຮຽບຮ້ອຍແລ້ວ ເຖິງວັນນັດແຂ່ງຂັນຄຸດກໍບິນມາຫາເຕົ່າ ເຕົ່າບອກຄຸດວ່າ: "ທ່ານບິນໄປທາງອາກາດ ອາດຈະບໍ່ເຫັນຂ້າພະເຈົ້າເຊື່ອງຢູ່ໃນນ້ຳສະນັ້ນ ເມື່ອທ່ານບິນໄປໆ ຈົ່ງຮຽກຫາຂ້າພະເຈົ້າລເນີເນີ!"

ຕົກລົງກັນແລ້ວ ຄຸດກໍອອກບິນ ເຕົ່າກໍຄານລົງນ້ຳ ພໍເຖິງກາງສມຸດ ຄຸດຈຶ່ງລອງຮຽກຫາເຕົ່າເບິ່ງ ກໍໄດ້ຍິນສຽງເຕົ່າຂານຢູ່ທາງໜ້າໂດຍທຳນອງ

ນີ້ ຈົນເຖິງຝັ່ງມະຫາສມຸດ ເປັນອັນວ່າເຕົ່າແພ້ຄຸດດ້ວຍອຸບາຍອັນສລາດ, ຄຸດຈຶ່ງບໍ່ອາດກິນເຕົ່າໄດ້.

ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ (ກົບເວົ້າ) "ຜູ້ມີກຳລັງໜ້ອຍ ແຕ່ມີພຽງປັນຍາປະກອບດ້ວຍອຸບາຍອັນສລາດ ກໍອາດປະຈົນແພ້-ຜູ້ມີກຳລັງມາກໄດ້ ດັ່ງນີ້ແລ.

ກົບເລົ່ານິຍາຍນີ້ໃຫ້ນົກໄສ່ຟັງແລ້ວ ຈຶ່ງເວົ້າຕໍ່ໄປອີກວ່າ: "ສະນັ້ນ ພວກເຮົາຄວນພ້ອມພຽງກັນ ຄິດຫາອຸບາຍກຳຈັດຊ້າງຕົວນັ້ນໃຫ້ໄດ້ ເພາະເພິ່ນວ່າ: ຄວາມສາມັກຄີໂຮມກຳລັງກັນຂອງສິ່ງເລັກນ້ອຍ ສາມາດເຮັດໃຫ້ວຽກການທີ່ກະທຳສຳເຣັດຜົນໄດ້ຕາມປະສົງ ດັ່ງເສັ້ນຫຍ້າທີ່ຟັ່ນເຂົ້າກັນເປັນເຊືອກ ຍັງສາມາດຜູກຊ້າງສານທີ່ຊົງມັນໄດ້; ອັນກຳລັງແຮງຂອງ-ໝູ່ຍາດພີ່ນ້ອງທີ່ສາມັກຄີກັນທຳປໂຍດ ກຳລັງແຮງຂອງພຣະອິນກໍບໍ່ສາມາດຈະປ້ານໄດ້."

ດັ່ງນີ້ແລ້ວ ນົກໄສ່, ກາ, ກົບ ຈຶ່ງພາກັນໄປຫາແມງວັນຂຽວ, ເລົ່າເຫດການໃຫ້ແມງວັນຂຽວຟັງດັ່ງໄດ້ກ່າວມາແລ້ວ ແມງວັນຂຽວຈຶ່ງວ່າ "ດີແລ້ວສະຫາຍ! ຖ້າເຮົາພ້ອມພຽງກັນໄດ້ດັ່ງນີ້ ກໍອາດປະຈົນແພ້ຊ້າງຕົວນັ້ນໄດ້ ແຕ່ຕ້ອງຄິດຫາອຸບາຍອັນສລາດປາສຈາກອະບາຍຄືຄວາມວິບັດກ່ອນ ນົກຍາງເຖົ້າຄິດຫາແຕ່ອຸບາຍ ບໍ່ຄິດຫາອະບາຍເລີຍຖືກຈອບຜອບກິນລູກໝົດ"

ນົກໄສ່, ກາ, ກົບ ຖາມ: "ເຣື່ອງເປັນຢ່າງໃດ?"

ແມງວັນຂຽວ ເລົ່ານິທານ:

ນິທານແອັນທີ ໑໙

ເຣື່ອງ ນົກຍາງ ກັບ ຈອບຜອບ

ນົກຍາງໝູ່ນຶ່ງອາໄສເຮັດຮັງຢູ່ເທິງຕົ້ນໄຮໃຫຍ່ໃກ້ຝັ່ງແມ່ນ້ຳເຮືອງ, ມີງູຕົວນຶ່ງ ອາໄສຢູ່ຮູໂກນຕົ້ນໄຮນັ້ນ ແລະ ເຄີຍກິນລູກນ້ອຍນົກຍາງສເມີ ດັ່ງນັ້ນ ມີນົກຍາງເຖົ້າຕົວນຶ່ງ ເຫັນພວກນົກຍາງທັງຫລາຍທຸກໂສກນ້ຳລູກ ຈຶ່ງບອກອຸບາຍທີ່ຈະຂ້າງູຕົວນັ້ນວ່າ: "ພວກເຮົາໄປຫາປານາວາງໄວ້ຕັ້ງແຕ່ປາກຮູຈອນຟອນມາຈົນເຖິງໂກນງູກໍແລ້ວກັນ" ຕາມອຸບາຍນີ້ ຈອນຟອນມາເຫັນງູເຂົ້າ ກໍຈະສັງຫານງູເສັຽຕາມສະພາບແຫ່ງເອນກັນຂອງເຂົາ ເມື່ອພ້ອມພຽງກັນເຮັດຕາມນີ້ແລ້ວ ງູກໍຖືກຈອນຟອນຂົບຕາຍເສັຽຕາມປະສົງ ແຕ່ພາຍລຸນມາ ຈອນຟອນກໍກິນລູກນົກຍາງນັ້ນເສັຽຈົນໝົດກັງງ.

ດັ່ງນີ້ ຂ້າພະເຈົ້າ (ແມງວັນຂຽວເອົ້າ) ຈຶ່ງວ່າ ຕ້ອງຄິດຫາອຸບາຍອັນສລາດປາສຈາກອະບາຍ(ຄືຄວາມວິບັດ) ວ່າແລ້ວແມງວັນຂຽວ ຈຶ່ງຊວນພວກສະຫາຍທັງ ໔ ໄປຫານົກ ວາລະວະ (ນົກຕອດຫຸ່ນ) ເລົ່າເຫດການທັງມວນໃຫ້ຟັງ ແລ້ວຂໍໃຫ້ສະຫາຍທຳການຊ່ອຍເຫລືອ ນົກວາລະວະ ຈຶ່ງວ່າ: "ການທີ່ພວກສະຫາຍມາຂໍໃຫ້ຂ້າພະເຈົ້າຊ່ອຍເຫລືອໃນຄັ້ງນີ້ ຂ້າພະເຈົ້າກໍບໍ່ຂືນ ແຕ່ຂ້າພະເຈົ້າເຄີຍໄດ້ຍິນຄຳບູຮານວ່າ: ຄົນເມື່ອໄດ້ປະສົບໄພອັນໜ້າຢ້ານ ຕາລານແລ່ນຫາໃຫ້ຜູ້ອື່ນຊ່ອຍ ໂດຍລັບຍາຈະຕອບຄຸນຢ່າງນັ້ນຢ່າງນີ້ ແຕ່ພໍພົ້ນໄພໄປແລ້ວກໍເສີຍເສັຽ ດັ່ງດຽວກັນກັບເສືອຂໍອຳນວຍໃຫ້ນົກນະຣະຄຸດຕີສັບດູກກລາງອອກຈາກຫວ່າງແຂ້ວ"

ສະຫາຍ ນົກໄສ່, ກາ, ແມງວັນ ຖາມ: "ເຣື່ອງເປັນຢ່າງໃດ?"

ນົກວາລະວະ ເລົ່ານິທານ:

ນິທານແອ້ມທີ ໖໐

ເຣື່ອງ ເສືອກັບນົກນະຣະຄຸດຕີ

ແຕ່ກ່ອນທີ່ປ່ານີ້ ມີເສືອໂຄ່ງຕົວນຶ່ງປະຫານກວາງໄດ້ແລ້ວກໍແກ່ນາ ກິນຢູ່ໃຕ້ຕົ້ນໝາກກ້ອງ ຄັນກິນໄປໆດູກກວາງເລີຍຕິດຄາຢູ່ໃນແຂ້ວເສືອ ມັນໄດ້ຮັບຄວາມເຈັບປວດເປັນທຸກຫລາຍ ຈຶ່ງໄປຫານົກນະຣະຄຸດຕິ ອ້ອນວອນຂໍໃຫ້ນົກຊັບດູກກວາງອອກໃຫ້ ແລະສັນຍາວ່າຈະລ້ຽງເກືອນົກຕົວນັ້ນ ທຸກໆທີ່ໄປຫາເນື້ອໄດ້ມາ ນົກນະຣະຄຸດຕິ ມີຄວາມສົງສານ ກໍສັບຕອດກະດູກອອກໃຫ້ ເສືອຈຶ່ງພົ້ນຈາກຄວາມເຈັບປວດເວທນາ.

ຢູ່ຕໍ່ມາ ເສືອໄປໄດ້ກວາງມາກິນອີກ ແຕ່ເສືອລືມຄວາມສັນຍານັ້ນເສັຽ ບໍ່ໃຫ້ນົກນະຣະຄຸດຕິກິນນຳ ນົກເຫັນດັ່ງນັ້ນ ຈຶ່ງຕໍ່ວ່າ: "ເອີຍ! ເສືອມຶງລືມຄຳສັນຍາແລ້ວຫລືໍ? ເມື່ອມຶງໄດ້ຮັບຄວາມເຈັບປວດເນື່ອງຈາກກະ-ດູກກວາງຄາແຂ້ວ ມຶງໄດ້ວານໃຫ້ກູເອົາອອກໃຫ້ ບັດນີ້ມຶງໄດ້ກິນຊີ້ນທີ່ແຊບມຶງກໍກິນແຕ່ຜູ້ດຽວ ບໍ່ຫລຽວແລເບິ່ງກູຜູ້ມີຄຸນຕໍ່ມຶງເລີຍ" ເສືອໄດ້ຍິນຄຳນົກຈຶ່ງຕອບວ່າ: "ດູກ່ອນນົກນ້ອຍລີບແຫລມ ຈະມີປໂຍດອັນໃດນຳແມ່ງົວນົມທີ່ຮີດເອົານົມອອກໝົດແລ້ວ, ຈະມີປໂຍດອັນໃດນຳຕົ້ນໄມ້ທີ່ກິນໝ່ວຍໝົດແລ້ວ, ຈະມີປໂຍດອັນໃດນຳເຮືອ ໃນເມື່ອໄດ້ຂີ່ຂ້າມນ້ຳພົ້ນແລ້ວ, ສັນດຽວກັນກູກໍບໍ່ມີປໂຍດອັນໃດນຳມຶງ ໃນເມື່ອກູຫາຍເຈັບປວດແລ້ວ"

ນົກຄຽດ ຈຶ່ງຖຽງວ່າ: "ເອີຍ! ບັກອາສັດ(໑) ປຣິຍດຂອງແມ່ງົວນົມ ທີ່ບີບນ້ຳນົມອອກແລ້ວຍັງມີຢູ່, ຕົ້ນໄມ້ທີ່ຄົນກິນໝົດແລ້ວກໍຍັງຈະປົ່ງອີກເຮືອທີ່ຂີ່ຂ້າມນ້ຳແລ້ວ ກໍຍັງຈະໄດ້ຂີ່ກັບຄືນມາ, ມຶງຫາຍເຈັບປວດແລ້ວ -ເຫດໃດຈຶ່ງບໍ່ຄິດເຫັນຄຸນກູ"

ເສືອຕອບ: "ມຶງຮູ້ຢູ່ຕ໊ວ່າ ກູເປັນສັດກິນສັດທີ່ມີຊີວິດທຸກຈຳພວກເປັນອາຫານ ການທີ່ກູໃຫ້ຊີວິດແກ່ມຶງ ໃນຂະນະທີ່ມຶງຢູ່ໃນຣະຫວ່າງແຂ້ວກູ

---

(໑) ອາສັດ = ຄວາມບໍ່ສັດຊື່

ນັ້ນ ຈະບໍ່ແມ່ນບຸນຄຸນອີກຫລື?

ນົກຄຽດຫລາຍກ່າວວ່າ: "ບັກຊາດຊື່ວ! ມຶງບໍ່ເຫັນຄຸນກູແລ້ວ ກໍຕາມໃຈມຶງ ພາຍລຸນມຶງຫາກຈະໄດ້ເຫັນຣິດເດດຂອງກູດອກ" ວ່າແລ້ວກໍໜີໄປ

ນົກອາລະວະ ເລົ່ານິທານນີ້ໃຫ້ພວກສະຫາຍຟັງແລ້ວ ຈຶ່ງກ່າວເປັນຄຳພາສິດວ່າ: "ຜູ້ໃດໂອດອ້າງໂຕວ່າມີກຳລັງມາກ ແລ້ວບີບບີ້ຂົ່ມເຫງ-ຜູ້ມີກຳລັງໜ້ອຍ ຖ້າຜູ້ມີກຳລັງໜ້ອຍຫາກມີຊຽງປັນຍາກໍສາມາດປາບແພ້ຜູ້ມີກຳລັງມາກແຕ່ບໍ່ມີປັນຍານັ້ນໄດ້ ດຸຈດັ່ງນົກມະຣະຄຸດຕິໄດ້ປາບແພ້ເສືອ ສັນນັ້ນ"

ກ່າວດັ່ງນີ້ແລ້ວສັດທັງ ໕ ຄື ນົກໄສ່, ກາ, ແມງວັນ, ກົບ, ແລະນົກຕອດຝຸ່ນ ກໍປຶກສາຕົກລົງກັນ: ໃຫ້ກາກັບນົກຕອດຝຸ່ນ ໄປລັກຕອດຕາຊ້າງໃນເວລາມັນນອນ: ຕາຊ້າງບາດແລ້ວໃຫ້ແມງວັນໄປຂີ້ໃສ່, ເມື່ອຮູ້ວ່າ ຕາບອດເພາະໜອນເຈາະແລ້ວ ຈຶ່ງໃຫ້ສະຫາຍກົບໄປຮ້ອງຢູ່ທີ່ປາກເຫວ: ຕາມອຸບາຍນີ້ຊ້າງກໍຈະເຖິງຄວາມພິນາດໄປເອງ. ເມື່ອຕົກລົງກັນແລ້ວ ສັດເຫລົ່ານັ້ນ ກໍໄປຈັດການກັບຊ້າງຕາມທີ່ໄດ້ນັດໝາຍກັນໄວ້ ພໍສັງເກດເຫັນວ່າຊ້າງຕາບອດທັງສອງຂ້າງແລ້ວ ສະຫາຍນົກທັງຫລາຍຈຶ່ງໄປບອກພະຍາກົບໃຫ້ພາບໍຣິວານໄປຮ້ອງຢູ່ທີ່ປາກເຫວ: ຊ້າງເຖົ້າຕາບອດອຶດຫຽ້າແລະນ້ຳມາໄດ້ຫລາຍວັນ ຄັນໄດ້ຍິນສຽງກົບຮ້ອງ ກໍເຂົ້າໃຈວ່າມີໜອງນ້ຳຢູ່ໃນທີ່ນັ້ນ ຈຶ່ງງົມງົວຍ່າງໄປທີ່ປາກເຫວ ເລີຍພລາດຕົກລົງໄປໃນເຫວຕາຍ".

ໝາຈອກອະສຸພາຄະມຸນຕີ ເລົ່ານິທານໃຫ້ງົວນັນທະກະຟັງແລ້ວ ຈຶ່ງກ່າວຕໍ່ໄປວ່າ: "ຜູ້ມີກຳລັງໜ້ອຍ ແຕ່ມີຄວາມພຽນກ້າຫານບໍ່ທໍ້ຖອຍກໍສາມາດປາບແພ້ສັດຕູທີ່ມີກຳລັງມາກໄດ້ ດັ່ງນົກໄສ່ກັບຊ້າງສານ ສັນນັ້ນ, ສະນັ້ນເມື່ອຮູ້ວ່າ ຣາຊສີຈະທຳຮ້າຍທ່ານແນ່ແລ້ວ ທ່ານກໍຄວນຫາທາງປ້ອງກັນຕົວ"

ວິອນັນທະກະ ຕອບ: "ຄຳທີ່ທ່ານແນະນຳມານີ້ກໍແມ່ນຢູ່ ແຕ່ຂໍໃຫ້ຟັງ: ຜູ້ໃດຈະມີປັນຍາຍອດຍິ່ງປານໃດກໍຕາມ ກໍບໍ່ສາມາດຫ້າມຄວາມຕາຍໄດ້ໃນເມື່ອມັນເຖິງ ດັ່ງດຽວກັບຊາຍໂຈນ ຊື່ ປະດຸດຕະອະ"

ອະສຸພາຄຍະ ຖາມ: "ເຣື່ອງມັນເປັນຢ່າງໃດ?"

ວິອນັນທະກະ ເລົ່ານິທານ:

ນິທານແອັນທີ ໒໑

ເຣື່ອງ ຊາຍໂຈນກັບພາມ

ປາງກ່ອນໃນນະຄອນກຸນຊະຣະ ມີພາມຄົນນຶ່ງ ຊື່ ສວານີ ຊາວເມືອງນັບຖືວ່າ ເປັນຜູ້ທີ່ຄວນນັບຖື ເພາະລາວຖືຂັ້ນໃນການບູຊາໄຟ ດັ່ງນັ້ນ ມີໂຈນຄົນນຶ່ງ ຊື່ ປະດຸດຕະອະ ມັນຢາກຮູ້ຈັກບ່ອນທີ່ຕົນຈະຕາຍ ຈຶ່ງໄປຖາມພາມສວານີວ່າ: "ທ່ານພາມ ຂໍທ່ານໄດ້ກະຣຸນາບອກບ່ອນທີ່ຂ້າພະ-ເຈົ້າຈະຕາຍໃສ່ດ້ວຍ ວ່າ ຂ້າພະເຈົ້າຈະຕາຍໃນທີ່ໃດ?"

ພາມ ບອກ: "ຖ້າທ່ານຢາກຮູ້ຈັກບ່ອນຕາຍຂອງທ່ານ ທ່ານຈຶ່ງເຮັດຕາມຄຳແນະນຳຂອງຂ້າພະເຈົ້າ ຄື ໃນວັນແຮມ ໕ ຄ່ຳ ເມື່ອຄົນທັງຫລາຍເອົາຊາກຜີໄປຖິ້ມໃນປ່າຊ້າ ເວລາກາງຄືນທ່ານຈຶ່ງເອົາຊາກຜີນັ້ນ-ອອກ ແລ້ວເຂົ້າໄປນອນແທນບ່ອນຂອງຜີ ເມື່ອຜີມາຖາມ ທ່ານຈຶ່ງບອກວ່າທີ່ນີ້ເປັນບ່ອນນອນຂອງຂ້າ ດັ່ງນີ້ ຕໍ່ນັ້ນໄປຜີຫາກຈະບອກທ່ານເອງ."

ໂຈນໄປເຮັດຕາມຄຳແນະນຳຂອງພາມນັ້ນ ບໍ່ນານຜີຕົນນຶ່ງໄດ້ມາເຫັນໂຈນນອນຢູ່ໃນບ່ອນຂອງຕົນ ຈຶ່ງຖາມວ່າ: "ໃຜມານອນຢູ່ບ່ອນຂອງກູ

ໂຈນຖາມວ່າ: "ຊັ້ນບ່ອນຂອງຂ້າພະເຈົ້າຢູ່ໃສ?"

ຜີບອກວ່າ: "ທີ່ໃຕ້ຕົ້ນໄມ້ນິໂຄດ ອັນຢູ່ທາງເໜືອນະຄອນປາຕະລີ

-ບຸດ ພຸ້ນ! ເປັນບ່ອນຢູ່ຂອງມຶງ ມຶງຈິ່ງໄປທີ່ນັ້ນເຖີ້ນ"

ໂຈນໄດ້ຮູ້ຈັກບ່ອນທີ່ຕົນຈະຕາຍໃສ່ຕາມຄຳບອກຂອງຜີດັ່ງນັ້ນແລ້ວ, ຕັ້ງແຕ່ນັ້ນມາ ກໍພຍາຍາມຫລີກເວັ້ນບໍ່ໄປທາງເມືອງປາຕະລີບຸດຈັກເທື່ອ.

ວັນນຶ່ງໂຈນເດີນໄປໃນປ່າບ່ອນນຶ່ງດ້ວຍກິດທຸຣະແຫ່ງການໂຈຣະກັມ ມັນໄດ້ເຫັນນາງງາມຄົນນຶ່ງ ອັນມານນັດຸຈຮາດປອມເປັນມາ ຢູ່ໃນກາງປ່າ ນາງນັ້ນມີລັກສະນະງາມລ້ວນຖ້ວນທຸກປະການ ມີເລົາຄີງກົມດຸຈດັ່ງລຳກ້ວຍ, ແອວສ້ອຍຄືກ້ານສອຍ, ກະໂພກເຫວີ ປານທ້າຍເຮືອຊ່ວງ, ຕາດຳປອດປານມະຫານິນ, ນົມທັງສອງຕຶ່ງເຕັ່ງປານຈູມຄ້ອງ, ດວງໜ້າຂາວບໍຣິສຸດດຸຈດັ່ງ-ເດືອນເພັງ : ພໍໂຈນໄດ້ເຫັນນາງງາມດັ່ງນັ້ນ ກໍເຫລືອທີ່ຈະອົດກັ້ນຄວາມມັກໄວ້ໄດ້ ຈິ່ງຖາມວ່າ : "ດູລານາງ ເຈົ້າເປັນລູກເຕົ້າເຫລົ່າກໍຂອງໃຜ ແລະເຫດໃດຈຶ່ງມາຢູ່ໃນປ່າແຕ່ຄົນດຽວ"

ນາງຕອບວ່າ : "ຂ້ອຍເປັນລູກພໍ່ຄ້າໃຫຍ່ຜູ້ຊື່ວ່າ ສຸປະຕິ ພໍ່ຂອງຂ້ອຍກັບບ່າວໄພ່ໄດ້ພາມາຄ້າຂາຍທາງນີ້ ບັງເອີນພໍມາເຖິງປ່ານີ້ ກໍມີຮາຊສີຕົວນຶ່ງມາແລ່ນຕ່າ ພວກບ່າວໄພ່ ແລະ ພໍ່ຂອງຂ້ອຍພ້ອມທັງຂ້ອຍດ້ວຍ ແຕກຕື່ນຢ້ານຮາຊສີ ຕ່າງຄົນຕ່າງໜີເລີຍຫລົງກັນ ສ່ວນຂ້ອຍຫລົງມາທາງນີ້ຜູ້ດຽວສະນັ້ນຂໍໃຫ້ອ້າຍຊ່ອຍເຫລືອນ້ອງດ້ວຍ ນ້ອງບໍ່ມີທີ່ເພິ່ງແລ້ວ"

ຊາຍໂຈນໄດ້ຟັງດັ່ງນັ້ນແລ້ວ ມີຄວາມຍິນດີຫາທີ່ສຸດບໍ່ໄດ້ ຈຶ່ງຮັບເອົານາງມາເປັນພັນຣະຍາ ທັງສອງສົມສູ່ຢູ່ນຳກັນມາ ຈົນນາງໄດ້ລູກຄົນນຶ່ງ, ຕັ້ງແຕ່ວັນນາງອອກລູກມາ ນ້ຳຕາຂອງນາງໄຫລບໍ່ໄດ້ເຫືອດແກ້ນ ຜົວເຫັນອາການຂອງເມັຽຜິດປົກກະຕິ ຈິ່ງຖາມວ່າ : "ນ້ອງທຸກໂສກສິ່ງໃດ ຈິ່ງຮ້ອງໄຫ້ທຸກໆວັນ ຫລື ວ່າມີຄວາມຄຽດຊັງຄັ່ງແຄ້ນແນວໃດ?

ນາງຕອບວ່າ: "ຂ້າແຕ່ສາມີ ເຫດທີ່ນ້ອງຮ້ອງໄຫ້ນີ້ ຈະໄດ້ຄຽດຊັງບັງບຽດຜູ່ໃດກໍຫາບໍ່ໄດ້ ແຕ່ວ່າ ເມື່ອກ່ອນແຕ່ຂ້ອຍຍັງບໍ່ທັນໄດ້ມາເປັນ-ເມັຽຂອງເຈົ້າ ຂ້ອຍໄດ້ທຳການບູຊາບະບົນເທວະດາຕົນນຶ່ງໄວ້ວ່າ ເມື່ອໄດ້ຜົວແລ້ວຂໍໃຫ້ໄດ້ລູກຜູ່ຊາຍກ່ອນ ບັດນີ້ ຄວາມປາຖນາຢາກໄດ້ລູກຜູ່ຊາຍນັ້ນສຳເຣັດແລ້ວ ແຕ່ຂ້ອຍຍັງບໍ່ທັນໄດ້ແກ້ບະເທວະດາ ດານທີ່ໄດ້ປະຕິຍານໄວ້ ຈຶ່ງມີຄວາມທຸກໂສກເປັນອັນມາກ ຂ້ອຍຄຶດວ່າ ຖ້າບໍ່ໄດ້ທຳການບູຊາແກ້ບະນັ້ນແລ້ວ ແໝງຕາຍດີກວ່າ ເພາະເສັຽຄຳປະຕິຍານ"

ຜົວຖາມ: "ນາງປະຕິຍານຕໍ່ເທວະດາໃນຕົ້ນໄມ້ຕົ້ນໃດ?"

ເມັຽບອກ: "ຂ້ອຍໄດ້ປະຕິຍານຕໍ່ທຸພອັດຕີອົງມີສັກດາຍິ່ງໃຫຍ່-ເຊິ່ງຢູ່ໃນພູລີຫານທະ ໃກ້ນະຄອນປາຕະລີບຸດ ພຸ້ນ!"

ຊາຍໂຈນຜູ່ຜົວພໍໄດ້ຍິນຄຳວ່າ ເມືອງປາຕະລີບຸດ ກໍຂົນຄີງລຸກເຍືອກ ຟ້າວບອກເມັຽວ່າ: "ໂອຍເມືອງນັ້ນໄປບໍ່ໄດ້ດອກ ຖ້າໄປ ອ້າຍຕ້ອງຕາຍແນ່, ໄປບໍ່ໄດ້!"

ເມັຽຈຶ່ງອ້ອນວອນວ່າ: "ຖ້າບໍ່ພາໄປກໍຈະກັ້ນໃຈຕາຍເສັຽດຽວນີ້ລະ" ວ່າແລ້ວກໍຮ້ອງໄຫ້ສະອຶກສະອື້ນທຳອາການເໝືອນຈະຂາດໃຈຕາຍ.

ຝ່າຍປະດຸດຕະຣະ ເຫັນເມັຽຮ້ອງໄຫ້ຫລາຍຄຶດເຫລືອຕົນ ຈຶ່ງຕັດສິນໃຈ ພາເມັຽໄປເມືອງປາຕະລີບຸດ ແຕ່ຕັ້ງໃຈໄວ້ວ່າ ຈະບໍ່ໄປທາງທິດເໜືອຂອງເມືອງ ພໍໄປເຖິງ ກໍພາເມັຽໄປເຊົາຢູ່ສາລານອກເມືອງທາງ-ດ້ານໃຕ້ ໃນຄືນຊາຍໂຈນພາເມັຽໄປນອນຢູ່ໃນສາລານັ້ນ ບັງເອີນແພະແມ່ລູກອ່ອນ ຂອງພຣະຍາເສັຽ ພວກອາຊຸບຸຣຸດທັງຫລາຍນຳຊອກຫາ ພໍມາເຖິງສາລາບ່ອນສອງຜົວເມັຽນອນຢູ່ນັ້ນ ກໍໄດ້ຍິນສຽງແພະຮ້ອງຢູ່ເຫິງ...

ສາລາ ຈຶ່ງຂຶ້ນໄປເບິ່ງ ເລີຍເຫັນແພະແມ່ລູກອ່ອນນອນຢູ່ຂ້າງຊາຍໂຈນ ພວກຣາຊບຸຣຸດເຂົ້າໃຈວ່າ ຊາຍຄົນນັ້ນເປັນຂະໂມຍລັກແພະ ຈຶ່ງຈັບໄປຖວາຍພຣະຣາຊາ ແລ້ວພຣະຣາຊາກໍຕັດສິ່ງໃຫ້ເພັຊຄາດເອົາໂຈນນັ້ນ ໄປປະຫານເສັຽທີ່ໃຕ້ຕົ້ນໄມ້ນິໂຄດຣັນຢູ່ທາງທິດເໜືອແຫ່ງນະຄອນປາຕະລິບຸດນັ້ນເອງ.

ເມື່ອໂຈນປະຕຸດຕະຣະຈະຖືກປະຫານ ໄດ້ຮ່ຳເພິງໃນໃຈວ່າ: "ກິຍາອາການສະຖານທີ່ອັນກູຈັກຕາຍໃສ່ນີ້ ອາຈານໄດ້ບອກກູແລ້ວທຸກປະການ ແທ້ຈິງ ເມື່ອກັນມາເຖິງແລ້ວ ບໍ່ມີໃຜຈະຫລີກໜີໄປໄດ້" ເມື່ອໂຈນຮ່ຳເພິງດັ່ງນີ້ແລ້ວ ກໍຖືກຣາຊບຸຣຸດປະຫານເສັຽ.

ເພາະດັ່ງນັ້ນ ຂ້າພະເຈົ້າ (ນັນທະກະ) ຈຶ່ງວ່າ "ຜູ້ໃດບໍ່ສາມາດທີ່ຈະຫ້າມຄວາມຕາຍໄດ້ ໃນເມື່ອມັນມາເຖິງແລ້ວ"

ອະສຸພາຄຍະ ຄັດຄ້ານ: "ເຖິງຈັ່ງຊັ້ນກໍຄວນຫາອຸບາຍປ້ອງກັນຕົວໄວ້ກ່ອນ ເພາະຜູ້ທີ່ນອນຖ້າຕ່າຍໂດຍບໍ່ຄິດຫາອຸບາຍແກ້ ຜູ້ນັ້ນເປັນຄົນໂງ່ດັ່ງດຽວກັບປາຕົວທີ່ຊື່ວ່າ ຍະທັກຄະວິໄສ ນອນຖ້າຕາຍ ຈຶ່ງຖືກນາຍພານແຫເອົາຕົວໄປກິນເສັຽ ສ່ວນປາ ອະນາຄະຕະວິທາຕາ ແລະ ປັດຈຸບັນນະມະຕິ ພົ້ນໄພໄປໄດ້"

ນັນທະກະ ຖາມ: "ເຣື່ອງເປັນຢ່າງໃດ?"

ອະສຸພາຄຍະ ເລົ່ານິທານ:

ນິທານແອັນທີ ໒໒

ເຣື່ອງ ປາສາມຕົວ

ແຕ່ກ່ອນມີປາຄີ່ໃຫຍ່ສາມຕົວເປັນສະຫາຍກັນ ຕົວນຶ່ງຊື່ ອະນາຄະຕະວິທາຕາ ຕົວນຶ່ງ ຊື່ ປັດຈຸປັນນະມະຕິ ອີກຕົວນຶ່ງຊື່ ຍະທັກຄະວິໄສ....

ອາໄສຢູ່ໃນໜອງດຽວກັນ ປີນຶ່ງເກີດແລ້ງ ພວກຊາວບ້ານຈະພາກັນມາຫາປາໃນໜອງນັ້ນ ປາຕົວຊື່ວ່າ ອະນາຄະຕະວິທາຕາ ຮູ້ວ່າຊາວບ້ານຈະມາຫາປາ ຈຶ່ງເວົ້ານຳສະຫາຍທັງສອງວ່າ: "ດູລາສະຫາຍ ຖ້າເຮົາຂືນຢູ່ໃນໜອງນີ້ຕໍ່ໄປ ຄວາມຕາຍຈະມາເຖິງພວກເຮົາໃນອັນຮຸ່ງເຊົ້ານີ້ເປັນແນ່ລະນັ້ນ ເຮົາຄວນຍ້າຍຈາກໜອງນີ້ເສັຽໃຫ້ພົ້ນໄພ" ປາຕົວຊື່ວ່າ ປັດຈຸປັນນະມະຕິ ກ່າວວ່າ: "ເມື່ອໃດອັນຕາຍຫາກມາເຖິງແທ້ ຈຶ່ງຄ່ອຍຈັດການແກ້ໄຂ ເພາະເພິ່ນວ່າ: ຜູ່ໃດແກ້ໄຂຄວາມຫາຍະນະ ເຊິ່ງເກີດຂຶ້ນໄດ້ ຜູ່ນັ້ນເປັນຜູ່ສລາດ ເໝືອນພະຣິຍາພໍ່ຄ້າປະຕິເສດຊາຍຊູ້ໄດ້ຕໍ່ໜ້າຜົວ, ສັນນັ້ນ"

ປາ ຍະທັກຄະວິໄສ ຖາມ: "ເຣື່ອງເປັນຢ່າງໃດ?"

ປາ ປັດຈຸປັນນະມະຕິ ເລົ່ານິທານ:

ນິທານແອັນທີ ໒໘

ເຣື່ອງພະຣິຍາພໍ່ຄ້າປະຕິເສດຊາຍຊູ້ຕໍ່ໜ້າຜົວ

ໃນນະຄອນວິກົມບຸຣີ ມີພໍ່ຄ້າຊື່ ສມຸທອທັດ ມີພະຣິຍາ ຊື່ ນາງຣັຕນະປະພາ ນາງມັກຫລິ້ນຊູ້ກັບຄົນໃຊ້ສເມີ ມື້ນຶ່ງ ສມຸທອທັດ ເຫັນເມັຽກຳລັງກອດຊົມຊູ້ທີ່ເປັນຄົນໃຊ້ຢູ່ ແລະ ທັນທີນັ້ນ ນາງກໍຈາກຊູ້ ຟ້າວຍ່າງມາຫາຜົວ ແລ້ວເວົ້າວ່າ: "ນາຍ! ຄົນໃຊ້ຄົນນີ້ມັນພິຣຸດຫລາຍ ມັນກິນກາຣະບູນ ທີ່ເຂົາເອົາໃຫ້ເຈົ້າເສັຽໝົດ ຂ້ອຍດົມປາກມັນມີແຕ່ກິ່ນກາຣະບູນ"

ຝ່າຍຄົນໃຊ້ໄດ້ຍິນຈັ່ງຊັ້ນກໍພິຕຶຄຽດ ກ່າວວ່າ: "ຄົນໃຊ້ຈະຢູ່ເຮືອນນາຍຜູ່ມີເມັຽເປັນຈັ່ງຊີ້ໄດ້ຄື້! ເພາະເມັຽເພິ່ນຈອບດົມປາກຄົນໃຊ້ຢູ່ສເມີ ກິນອັນໃດກໍຮູ້" ເມື່ອເປັນດັ່ງນີ້ ຜົວເຊິ່ງເປັນສາທຸຊົນ ກໍຈຳເປັນ

ໄດ້ຂໍໂທດຄືນໃຊ້ ແລະອ້ອນວອນໃຫ້ມັນຢູ່ນຳຕໍ່ໄປ.

ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ(ປາປັດຈຸບັນນະມະຕິເວົ້າ)ະ"ຜູ້ໃດແກ້ໄຂຄວາມຫາຍະນະ ເຊິ່ງເກີດຂຶ້ນແລ້ວໄດ້ ຜູ້ນັ້ນເປັນຄົນສລາດ"

ປາຍະທັກຄະວິໄສ ຄັດຄ້ານວ່າ: "ສິ່ງທີ່ບໍ່ມີ ກໍບໍ່ມີຂຶ້ນໄດ້ ຖ້າມີ ກໍຕ້ອງມີຈີນໄດ້ ເມື່ອຄວາມຕາຍມາເຖິງແລ້ວ ແມ່ນໃຜຈະຫລີກໄດ້ ຂ້າພະເຈົ້າເຫັນດັ່ງນີ້ ຈຶ່ງບໍ່ມີຄວາມວິຕົກ" ເວົ້າກັນດັ່ງນີ້ແລ້ວ ຮຸ່ງເຊົ້າມາຊາວບ້ານກໍພາກັນມາລົງໜອງ ປາຕົວຊື່ອະນາຄະຕະວິທາຕາ ລັດລອຍໜີໄປໄດ້ແຕ່ໃນເວ-ລາກາງຄືນ ປາຕົວຊື່ປັດຈຸບັນນະມະຕິ ຖືກພານແຫຕຶກໄດ້ ມັນກໍພິດຕາຍນາຍພານແຫຈຶ່ງຈັບໂຍນໄປໄວ້ໃກ້ໆຝັ່ງໜອງໃຫຍ່ ພໍລັບຕານາຍພານແຫມັນຈຶ່ງດີ້ນ ແລະເຕັ້ນລົງໜອງໃຫຍ່ໄປເລີຍ ສ່ວນປາຕົວຊື່ວ່າ ຍະທັກຄະວິໄສ ບໍ່ຄິດຫາອຸບາຍເອົາຕົວລອດ ເລີຍຖືກພານແຫຈັບໄດ້ເອົາໄປຕົ້ມແກງກິນເສັຽ.

ເພາະສະນັ້ນ ຂ້າພະເຈົ້າ(ອະສຸພາຄຍະ)ຈຶ່ງວ່າ:ຜູ້ທີ່ນອນຖ້າຕາຍ, ໂດຍບໍ່ຄິດຫາອຸບາຍແກ້ ຜູ້ນັ້ນເປັນຄົນໂງ່.

ອະສຸພາຄຍະ ເວົ້າຕໍ່ໄປວ່າ: "ສິ່ງທີ່ໜ້າຢ້ານທີ່ສຸດ ມີ ໒ ປະການ, ຄື ສາຍຟ້າຟາດ ແລະ ອຳນາດຂອງພຣະຣາຊາ; ແຕ່ສາຍຟ້າຍ່ອມຟາດລົງ-ແຕ່ບ່ອນດຽວ ສ່ວນອຳນາດຂອງພຣະຣາຊາ ຍ່ອມຟາດໄປທົ່ວທຸກແຫ່ງ ເມື່ອເປັນດັ່ງນີ້ ຄວາມຕາຍໃນການຕໍ່ສູ້ນັ້ນແຫລະເປັນຂອງຄວນ ການຍອມຕາຍຕາມອາດຍາຂອງເຂົານັ້ນ ບໍ່ຄວນເລີຍ ເພາະວ່າ ໃນກາລະໃດເມື່ອບໍ່ສູ້ຕ້ອງຈິບຫາຍແນ່ ແຕ່ເມື່ອສູ້ຍັງມີທາງເອົາຕົວພົ້ນ ກາລະນັ້ນ ນັກປາດທັງຫລາຍລົງຄວາມເຫັນວ່າ ຕ້ອງສູ້ຢ່າງແນ່ນອນ.

ເມື່ອໃດນັກປາດບໍ່ເຫັນປໂຍດອັນຈະເກີດແກ່ຕົນຍ້ອນການຕໍ່ສູ້ ເມື່ອນັ້ນ

ເພິ່ນກໍຍອມຕາຍໃນເມື່ອຕໍ່ສູ້ກັບສັດຕູ;

ໃນການຕໍ່ສູ້ ຖ້າມີໄຊກໍໄດ້ລາບຜົນ ຖ້າຕາຍກໍໄດ້ໄປຊົມສາວສວັນ ເມື່ອເຫັນວ່າຮ່າງກາຍເປັນຂອງແຕກດັບໄດ້ໃນຍາມນຶ່ງຍາມດຽວແລ້ວ ຈະມານຶກຄຶດເຮັດພີສັງ ເຖິງຄວາມຕາຍໃນການຣົນນະຣົງ (ການສົງຄາມ)"

ວິອບັນທະກະ ໄດ້ຟັງດັ່ງນັ້ນ ຈຶ່ງຖາມອະນຸພາຄຍະວ່າ: "ຈະຮູ້ໄດ້ຢ່າງໃດວ່າ ຣາຊສີຕ້ອງການປະຫານຂ້າພະເຈົ້າແທ້"

ອະນຸພາຄຍະ ຕອບ: "ເມື່ອໃດເຫັນຣາຊສີກາງຫູອອກ ຍົກຫາງຂຶ້ນ ອ້າປາກກວ້າງ ຂຍາຍເລັບ ແລະຫລຽວເບິ່ງຢ່າງບໍ່ພັບຕາ ເມື່ອນັ້ນແຫລະທ່ານຈະຮູ້ໄດ້ ຢ່າງໃດກໍດີ ເຣື່ອງທັງໝົດນີ້ທ່ານຕ້ອງປິດບັງໃຫ້ດີ ຢ່າໃຫ້ຮື້ອໄດ້ ບໍ່ດັ່ງນັ້ນ ຂ້າພະເຈົ້າ ແລະ ທ່ານ ຈະພາກັນພິນາດໝົດ ເພາະສະນັ້ນ ເວລາທ່ານເຂົ້າໄປຫາຣາຊສີ ຕ້ອງລະວັງ ຕັ້ງທ່າຕໍ່ສູ້ໄວ້ດເນີ້."
ວ່າແລ້ວ ໝາຈອກອະນຸພາຄຍະ ກໍລາໄປ.

ວັນນຶ່ງອະນຸພາຄຍະເຂົ້າໄປຫາຣາຊສີ ແລ້ວກ່າວວ່າ: "ຂ້າແຕ່ຣາຊາ ຖ້ອຍຄຳອັນເປັນປໂຍດ ຜູ່ເວົ້າຈະເປັນຄົນຊັ້ນຕ່ຳສາມານ ກໍຕາມ ຜູ່ມີປຽາກໍຄວນຟັງ ແລະ ຂັບຕາມ ພຣະຍາເກໂກຣາດພົ້ນຈາກຄວາມຕາຍກໍຍ້ອນຟັງຄຳຂອງແພະໃດ໋!"

ຣາຊສີ ຖາມ: "ເຣື່ອງເປັນຢ່າງໃດ?"

ອະນຸພາຄຍະ ເລົ່ານິທານ:

ນິທານແອັນທີ ໒໔

ເຣື່ອງພຣະຍາເກໂກຣາດ

ປາງກ່ອນ ມີພຣະຣາຊາບານວ່າ ເກໂກຣາດ ສເວີຍຣາຊສົມບັດ

ຢູ່ໃນນະຄອນນາຕຸລະ ພຣະອົງທົງທິສຣາຊທັນຍັງນັກ ນັກປອມພຣະອົງໄປທ່ຽວ ເບິ່ງລີງ ເຂດບ້ານເມືອງຂອງຕົນຂເນີ ເພື່ອຈະໄດ້ຮູ້ຄວາມສຸກທຸກຂອງໄພ່ຟ້າ–ປະຊາກອນ.

ວັນນຶ່ງ ພຣະອົງປອມຕົວສະເດັດໄປລຽບເບິ່ງພຣະນະຄອນ ພໍເຖິງທີ່ນ້ອຍທີ່ນຶ່ງ ໄດ້ທອດພຣະເນດເຫັນລູກສາວພຣະຍານາກກັບເພດເປັນງູຂຶ້ນມາຫລິ້ນຊູ້ຢູ່ກັບງູດາງແຕຕົວນຶ່ງ ພຣະຣາຊາຈຶ່ງຮ່ຳເພິງວ່າ ນາງນາກເປັນຣາຊ–ບຸດຕີ ບັດນີ້ມາເສບສົນກັບງູດາງແຕ(໑) ອັນເປັນງູຊາດສະກຸນຕ່ຳ ບໍ່ເປັນການສົມຄວນເລີຍ ຮ່ຳເພິງແລ້ວ ກໍຖອດດາບອອກຟັນງູດາງແຕຕາຍ ສ່ວນນາງນາກ ພຣະອົງພຽງແຕ່ເອົາໄມ້ແສ້ຟາດບາດນຶ່ງແລ້ວກໍປ່ອຍໃຫ້ໜີໄປ ຝ່າຍນາງນາກມີຄວາມເຈັບປວດ ກໍຄຶດອາຄາດພຣະຍາ ຈຶ່ງໜີໄປສັບລໍ່ຕໍ່ບິດາວ່າ: "ຂ້າແຕ່ພຣະບິດາ ວັນນີ້ ຂ້ານ້ອຍຂຶ້ນໄປຫລິ້ນເມືອງນາຕຸລະ ພຣະຍາເກໄກ–ຣາດ ພຣະເຈົ້າແຜ່ນດິນເມືອງນັ້ນ ເປັນຄົນຂາຫັນ ມາເຫັນຂ້ານ້ອຍມັນກໍຢາກໄດ້ໄປເປັນເມັຽ ເມື່ອຂ້ານ້ອຍບໍ່ຍິນຍອມໄປຕາມຄວາມປະສົງຂອງມັນ ມັນຈຶ່ງຕີຂ້ານ້ອຍເສັຽເກືອບຕາຍ" ວ່າແລ້ວກໍຮ້ອງໄຫ້ສະແດງຄວາມເສັຽໃຈເປັນອັນມາກ. ສ່ວນພຣະຍານາກ ບໍ່ທັນໄດ້ພິຈາຣະນາ ກໍຄຶດຄຽດ ໃຫ້ພຣະຍາເກໄກຣາດ ພໍເຖິງກາງຄືນຈຶ່ງກັບເພດເປັນງູນ້ອຍຕົວນຶ່ງ ລອຍເຂົ້າໄປໃນປາ–ສາດ ນອນຂົດຢູ່ໃຕ້ຕຽງບັນທົມຂອງພຣະຣາຊາ ດ້ວຍເຈຕນາວ່າ ເມື່ອພຣະຣາຊານອນຫລັບແລ້ວຈຶ່ງຈະຕອດໃຫ້ຕາຍ ຂນະນັ້ນພຣະຣາຊາເກໄກຣາດ ກຳລັງສົນທະນາພຣະໄທຢູ່ກັບນາງຣາຊເທວີ ພຣະນາງເທວີຖາມພຣະຣາຊາວ່າ:

---

(໑) ສະບັບນຶ່ງວ່າ ງູໂອ່ງນ້ຳ

"ວັນນີ້ ພຣະອົງສະເດັດລຽບພຣະນະຄອນ ໄດ້ເຫັນເຫດການສິ່ງໃດເປັນ-
ອັນປລາດແດ່?" ພຣະຣາຊາຕັດຕອບວ່າ: "ພຣະອົງໄດ້ເຫັນງູດາງແຫນ້ອຍ
ຕົວນຶ່ງ ເຊິ່ງເປັນສັດຊາດຕ່ອຍຮ້າຍ ເສບສົມກັບລູກສາວພຣະຍານາກ ຜູ້ມີ
ສະກຸນສູງ ກູພຣະອົງຈຶ່ງພັນງູດາງແຫນັ້ນເສັຽ ເພາະມັນບໍ່ຈັກພາວະຂອງ-
ຕົນ ສ່ວນລູກສາວພຣະຍານາກ ກູພຣະອົງຕີເສັຽບາດນຶ່ງ ເພາະມັນປະ-
ພຶດບໍ່ສົມຄວນກັບຊາດສະກຸນຂອງຕົນ."

ພຣະຍານາກ ນອນຢູ່ໃຕ້ຕຽງບັນທົມ ໄດ້ຍິນພຣະຣາຊາຈາຣະຈາ
ກັບນາງເທວີດັ່ງນັ້ນ ກໍໄດ້ລະຕຶກຕຶກວ່າ ພຣະຣາຊາອົງນີ້ ທົງປະພຶດຢູ່ໃນ
ທົສຣາຊທັມຍິ່ງນັກ ກູຟັງແຕ່ຄວາມສັບສົນຂອງລູກຜູ້ອາທັມ ບໍ່ພິຈາຣະນາ ເກືອບ
ຈະທຳພຣະຣາຊາຜູ້ທຣົງຄຸນໃຫ້ພິນາດ ຄຶດດັ່ງນີ້ແລ້ວຈຶ່ງອອກຈາກພຣາສາດ
ກັບຄືນມາຍັງເມືອງນາກ ຮຽກລູກສາວຂອງຕົນມາຖາມ ເມື່ອນາງນາກ ຜູ້
ບຸດຕີຮັບເປັນສັດ ຈຶ່ງຕັດກຳຮານນາບດ່າລູກສາວຂອງຕົນເປັນອັນມາກແລ້ວ
ຂັບໜີຈາກພຣະນະຄອນນາກນາດານ ພຣະຍານາກຂັບລູກສາວໜີໄປແລ້ວ
ຈຶ່ງມາຄຶດວ່າ ພຣະຍາເກໄກຣາດອົງນີ້ຊົງປະພຶດຊອບຣາຊທັມຍິ່ງນັກ ຄວນ
ເຮົາຈະຕອບແທນບຸນຄຸນໃຫ້ສົມແກ່ເຫດ ຄຶດແລ້ວພຣະຍານາກຈຶ່ງແປງເພດ
ເປັນບຸຣຸດມານັ່ງຫລິ້ນຢູ່ທີ່ນິນດິບ ບ່ອນລູກສາວຂອງຕົນເຄີຍມາ ໃນວັນນັ້ນ
ພຣະຍາເກໄກຣາດ ປອມພຣະອົງສະເດັດໄປລຽບພຣະນະຄອນຕາມເຄີຍ,
ພໍມາເຖິງນິນດິບ ເຫັນຊາຍຄົນນຶ່ງມີອາການປລາດນັ່ງຢູ່ ຈຶ່ງຕັດຖາມວ່າ:
"ທ່ານມາແຕ່ໃສ ເຫດໃດຈຶ່ງມານັ່ງຢູ່ທີ່ນີ້?" ພຣະຍານາກຕອບວ່າ: "ຂ້າ-
ພະເຈົ້າເປັນນາຄຣາດ ບິດາຂອງນາງນາກມານະວິກາ ທີ່ມາທຳອະນາ-
ຈານຢູ່ໃນທີ່ນີ້ ພຣະອົງໄດ້ທົງພຳເພັງປໂຍດແກ່ກະກູນນາຄຣາດ.......

ເປັນອັນມາກ ຂ້າພະເຈົ້ານາບີ ກໍຫວັງຈະສນອງຄຸນຂອງພຣະອົງ ພຣະອົງມີພຣະປະສົງສິ່ງໃດຈຶ່ງບອກມາ"

ພຣະຣາຊາເກໂກຣາດຕັດຕອບວ່າ: "ອັນພຣະຣາຊາດັ່ງຕົວຂ້ານີ້ ທີ່ຈະທຸກໃຫ້ຊື່ນໃຈດ້ວຍຊັບສົມບັດນັ້ນ ບໍ່ມີເລີຍ ເມື່ອທ່ານປະສົງຢາກຈະໃຫ້ສິ່ງໃດສິ່ງນຶ່ງແກ່ຂ້າພະເຈົ້າ ກໍຂໍໃຫ້ທ່ານບອກມົນອັນຮູ້ຈັກອັທຍາໄສໃຈຄໍຂອງສັດທັງ-ຫລາຍທີ່ເວົ້າຈາກັນນັ້ນເຖີດ" ພຣະຍານາກຕອບວ່າ: "ໄດ້! ແຕ່ພຣະອົງຕ້ອງຮັກສາຄວາມສັດ ຢ່າບອກໃຫ້ຜູ້ໃດຜູ້ນຶ່ງຮູ້ນຳເປັນອັນຂາດ ຖ້າພຣະອົງບອກເວລາໃດ ເວລານັ້ນພຣະອົງຕ້ອງຕາຍ" ເມື່ອພຣະຍາເກໂກຣາດຮັບປະຕິຍານວ່າ ຈະຮັກສາຄວາມສັດໄວ້ໄດ້ແລ້ວ ພຣະຍານາກກໍສອນມົນສັຕອະ-ວາກຍະມະຕິ ໃຫ້.

ສໄມນຶ່ງ ພຣະຣາຊາເກໂກຣາດຕັດສັ່ງຂ້າໄຊ້ໃຫ້ແປງສະຖານທີ່ປະທັບສຳຣານໃນເດີ່ນພຣະຣາຊວັງ ກໍ່ດ້ວຍດິນຈີ່ ແລະ ໄລ້ທາດ້ວຍຂີ້ວົວ ທຳເປັນລານກ້ຽງດີ ແລ້ວໃຫ້ທານເອົາຕຽງໃຫຍ່ມາຕັ້ງໄວ້ທີ່ນັ້ນ ເທິງຕຽງປູລວາດດ້ວຍອາສນະອັນວິຈິດ ແລ້ວພຣະຣາຊາກັບພຣະມະເຫສີ ຈຶ່ງຂຶ້ນໄປສະຖິດບັນທົມຢູ່ເທິງຕຽງນັ້ນ ອັນພາຍໃຕ້ບ່ອນຕັ້ງຕຽງນັ້ນ ເປັນບ່ອນຢູ່ຂອງຝູງ-ມົດງ່າມ ບ່ອນປາກຮູມົດນັ້ນ ບ່າວພຣະຣາຊາເອົາດິນອັດເສັຽ ແລ້ວເອົາຂາຕຽງຕັ້ງເຕັງໄວ້ ມົດຈະເຂົ້າອອກບໍ່ໄດ້ ຄາວນັ້ນ ມົດພວກໄປຫາກິນ ກັບຄືນມາ ເຂົ້າຮູບໍ່ໄດ້ ຈຶ່ງຮ້ອງບອກພວກມົດທີ່ຢູ່ໃນຮູໃຫ້ເຈາະຮູໃຫ້ ສ່ວນພວກມົດທີ່ຢູ່ທາງໃນ ຈຶ່ງຮ້ອງບອກອອກມາວ່າ: "ພວກສູມີຫລວງຫລາຍພອຍມາກຈຶ່ງພ້ອມກັນຫາມຕຽງພຣະຍາອອກ ແລ້ວພາກັນເຂົ້າມາເຖີດ"

ພຣະຍາບັນທົມຢູ່ເທິງຕຽງ ໄດ້ຍິນສຽງມົດເວົ້າກັນດັ່ງນັ້ນ ກໍຍິ້ມ

ອັສຈັນໃຈວ່າ ນົກຕົວນ້ອຍໆເຫດສັນໃດຈຶ່ງມາສະຫາວຈາວ່າ ຈະຫາມຕຽງ ກູໄປຖິ້ມໄດ້ ເປັນໜ້າຢາກຫົວຫລາຍ ຄຶດແລ້ວພຣະຍາກໍເລີຍຫົວຂຶ້ນພົດແຮງ ນາງເທວີບັນທົມຢູ່ຂ້າງພຣະຣາຊາ ໄດ້ຍິນພຣະຣາຊາຫົວຂຶ້ນພົດແຮງດັ່ງນັ້ນ ກໍສົງໃສຈຶ່ງທູນຖາມວ່າ: "ເຫວະ ພຣະອົງຫົວຂວັນອີ່ສັງ?" ພຣະຣາຊາຕອບວ່າ: "ບໍ່ຫົວຂວັນສັງດອກ ຄຶດຢາກຫົວກໍຫົວຊື່ໆນີ້ແຫລະ" ນາງເທວີຍິ່ງສົງໃສ ທູນໄຫວ້ວອນວ່າ: "ບໍ່ມີເຫດອັນໃດອັນນຶ່ງພຣະອົງຄົງບໍ່ຫົວເປັນແນ່ ພຣະອົງຄົງໄດ້ເຫັນຄວາມບໍ່ດີບໍ່ງາມໃນຕົນຕົວຂອງຂ້າພຣະບາດ ຫລືຄຶດເຫັນຄວາມຜິດພາດອັນໃດອັນນຶ່ງຂອງຂ້ານ້ອຍເປັນແນ່ ຈຶ່ງຫົວຂວັນ" ພຣະຣາຊາ: "ບໍ່ມີສັງດອກ ເຮົາບໍ່ໄດ້ຫົວຂວັນນາງເລີຍ" ນາງເທວີ: "ສັ້ນ! ພຣະອົງຫົວຂວັນໃຜ ເພາະຢູ່ໃນທີ່ນີ້ ມີແຕ່ຂ້ານ້ອຍກັບພຣະອົງທີ່ນັ້ນ ຖ້າພຣະອົງບໍ່ບອກເຫດທີ່ພາໃຫ້ຫົວຂວັນໃນຄາວນີ້ ຂ້ານ້ອຍຈະຢູ່ຮ່ວມບາທາຂອງພຣະອົງບໍ່ໄດ້ ເພາະຄຶດອາຍໃຈ ເຫດສັນໃດເປັນຜົວເມັຽກັນ ຈະບອກເຫດພຽງທີ່ນີ້ບໍ່ໄດ້" ວ່າແລ້ວນາງເທວີກໍສະແດງອາການເສົ້າໂສກ - ແລະຮ້ອງໄຫ້ສະອຶກສະອື້ນ. ພຣະຣາຊາເຫັນນາງເທວີຮ້ອງໄຫ້ ຈຶ່ງເລົ່າໂລມວ່າ: "ດູລານາງ ເຫດທີ່ພາໃຫ້ເຮົາຫົວນັ້ນມີຢູ່ ແຕ່ເຮົາບອກບໍ່ໄດ້, ຖ້າບອກພີ່ຕ້ອງຕາຍ" ນາງເທວີໄດ້ຟັງດັ່ງນັ້ນແຮ່ງເຈັບແສບ ແລະ ຢາກຮູ້ຫລາຍກວ່າເກົ່າ ຈຶ່ງສະແດງຄວາມໂສກເສົ້າເສັຽໃຈໜັກຂຶ້ນ ພ້ອມກັບທູນວ່າ: "ຖ້າພຣະອົງບໍ່ບອກ ຂ້ານ້ອຍກໍຈະກັ້ນໃຈຕາຍເສັຽອັນນີ້"

ພຣະຣາຊາເລົ່າໂລມນາງເທວີຈົນສຸດກຳລັງ ກໍບໍ່ເຮັດໃຫ້ນາງຫາຍຄວາມໂສກເສົ້າເສັຽໃຈໄດ້ ຈຶ່ງຮຳເພິງໃນພຣະໄທວ່າ: "ອັນກິຣິຍາທີ່ທຳໃຫ້ຜູ້ອື່ນຕ້ອງໄດ້ຮັບຄວາມໂສກເສົ້າເຖິງຕາຍນັ້ນ ບໍ່ສົມຄວນແກ່ກູຜູ້ເປັນ

ພຣະຣາຊາທັນນິກະຣາດເລີຍ ແໜງກູຕາຍເສັຽດີກວ່າ" ຮ່ຳເພິງດັ່ງນີ້ແລ້ວ
ຈຶ່ງຕັດກັບນາງເທວີວ່າ: "ດູລານາງ ເຮົາພີ່ໄດ້ບອກແລ້ວວ່າ ໂທດທີ່ພາໃຫ້
ເຮົາຫົວນີ້ ຖ້າເຮົາບອກ ເຮົາພີ່ຕ້ອງຕາຍ ບັດນີ້ ຖ້າເຮົາບໍ່ບອກ ນາງກໍຈະ
ກັ້ນໃຈຕາຍ ສະນັ້ນ ກູພີ່ຈຶ່ງຕົກລົງໃຈວ່າ ແໜງຕົນຕາຍດີກວ່າ ຂໍໃຫ້ນາງຢູ່
ເຖີດ ແຕ່ພີ່ຂໍໄວ້ພໍໃຫ້ຮອດມື້ເຊົ້າກ່ອນ ເມື່ອພີ່ໄດ້ຈັດການໃຫ້ທານແກ່ສະມະ-
ນະພາມມະນາຈານ ແລະລ້ຳລາຍາດຕິພີ່ນ້ອງໝົດແລ້ວ ພີ່ຈະບອກໃຫ້ນາງຮູ້,
ແລ້ວພີ່ກໍຈະຕາຍຈາກນາງໄປ.

ຕື່ນເຊົ້າມາ ພຣະຍາເກໂກຣາດ ຕັດສັ່ງໃຫ້ອາມາດຣາຊເສນາຫ້າງຊ້າງໃຫ້
ແລ້ວສະເດັດຂຶ້ນຂີ່ຊ້າງລຽບພຣະນະຄອນນາຕຸລະເປັນຄາວສຸດທ້າຍ ພໍໄປ
ເຖິງຍ່ານບຶ່ງ ໄດ້ທອດພຣະເນດເຫັນແພະຕົວເມັຽກິນຫຍ້າ ຢູ່ແຄມປາກລ້າງ
ຮ້າງອັນເລີກ ແພະຕົວເມັຽເວົ້ານຳຕົວຜົວວ່າ: "ດູລາເຈົ້າ ຂ້ອຍຫິວຄັບ
ທ້ອງແກ່ແລ້ວ ບັດນີ້ຂ້ອຍຢາກກິນຫຍ້າອ່ອນທີ່ຢູ່ໃນໂກນລ້າງນັ້ນ ຂໍເຈົ້າຈົ່ງໄປ
ເອົາມາໃຫ້ຂ້ອຍກິນແດ່ ຖ້າຂ້ອຍບໍ່ໄດ້ກິນຫຍ້ານັ້ນຂ້ອຍກັບລູກໃນທ້ອງຄົງຕາຍ
ແນ່" ແພະຕົວຜູ້ຕອບວ່າ: "ອີ່ຊື່ວ! ກົງການອີສັງມຶງມາແອອ່ອນກູ ໃນທີ່ບໍ່
ຄວນ ສັນນີ້ ຖ້າກູໄປເອົາຫຍ້າໃນບ່ອນນັ້ນຕາມຄວາມມຶງ ບໍ່ຫລ້າງວ່າ ກູຈັກ
ຕົກລ້າງຄໍຫັກຕາຍ ສາບໍ້! ແລ້ວໂລກທັງຫລາຍກໍຈະໄດ້ຕິຕຽນທານຂວັນກູວ່າ
ຜູ້ຊາຍໃບ້ງ່າວ ຕາຍຍ້ອນເມັຽ ສະນັ້ນຫລື? ກູບໍ່ໄປດອກ ມຶງນີ້ກາລະຂີ້
ຫລາຍ ມຶງຢາກຕາຍຈົ່ງຕາຍເສັຽ ແນ່ແພະໜຸ່ມໆ ຈັບງາມດີກວ່າມຶງ ຍັງມີຢູ່
ມາກ ກູຈະເອົາສັກຮ້ອຍຕົວມາປິ່ນປົວກູກໍໄດ້ ກູບໍ່ແມ່ນຜູ້ໃບ້ງ່າວຄື ພຣະຍາ
ເກໂກຣາດ ທີ່ຕົກຢູ່ໃຕ້ອຳນາດຂອງຜູ້ຍິງ ແລະ ຈະຕາຍຍ້ອນຜູ້ຍິງນັ້ນດອກ,
ແລ້ວແພະ ຕົວຜູ້ຈຶ່ງກ່າວສໂລກອັນນີ້ວ່າ:

"ດູລາແມ່ແພະ ພຣະຍາເກໂກຣາດ ມີປະສົງຈະຂ້າຕົນຕາຍເສັຽ ດ້ວຍຄວາມໃບ້ໂງ່ຂອງຕົນເອງ ພຽງແຕ່ໄດ້ຍິນຄຳອ້ອນວອນຂອງເມັຽທີ່ນັ້ນ ສ່ວນກູນີ້ບໍ່ໃບ້ໂງ່ຫລົງໃຫລ ພໍຈະຂ້າຕົນຕາຍຍ້ອນຜູ້ຍິງ ເໝືອນດັ່ງ ພຣະຍາເກໂກຣາດນັ້ນເລີຍ." ວ່າແລ້ວແພະຕົວຜູ້ກໍຂັບໄລ່ແພະຕົວເມັຽນັ້ນໜີເສັຽ.

ຝ່າຍພຣະຍາເກໂກຣາດໄດ້ຍິນຄວາມແພະເວົ້າກັນດັ່ງນັ້ນ ຈຶ່ງໄດ້ສະຕິຮຳເພີງໃນພຣະໄທວ່າ "ແຕ່ສັດເດັຽຣະສານ ມັນຍັງມີປັນຍາ ຮູ້ຮັກສາຊີວິດຂອງຕົນ ບໍ່ຫລົງໃຫລໃນຄຳອ້ອຍອິ່ນຂອງເມັຽ ສ່ວນຕົວກູເປັນເຖິງ.. ພຣະມະຫາກະສັດຂັດຕິຍະຣາດ ແລະຈະມາຕາຍຍ້ອນຄຳຜູ້ຍິງພໍປານນີ້ ! ໂລກທັງຫລາຍກໍຈະຕິຕຽນກູເປັນອັນມາກ." ຮຳເພີງແລ້ວກໍສະເດັດກັບຄືນພຣະຣາຊວັງ ຈັບສັ່ງໃຫ້ເອົານາງເທວີນັ້ນໄປປ່ອຍເສັຽໃນປ່າ ທີ່ໄກຈາກເຂດແດນມະນຸດ ແຕ່ນັ້ນມາພຣະຍາເກໂກຣາດ ກໍຢູ່ສເວີຍຣາຊສົມບັດເປັນສຸກສືບມາ ເພາະສະນັ້ນ ຂ້າພະເຈົ້າ(ອະນຸພາຄຍະ)ຈຶ່ງວ່າ "ຖ້ອຍຄຳອັນເປັນປໂຍດ ແມ່ນຄົນຜູ້ເວົ້າຈະເປັນຄົນຊັ້ນຕ່ຳຊາມານກໍຕາມ ຜູ້ມີປັນຍາກໍຄວນເຊື່ອຟັງ ແລະ ປະຕິບັດຕາມ...."

ແລ້ວອະນຸພາຄຍະ ເວົ້າຕໍ່ໄປວ່າ: "ຂ້າແດ່ພຣະຍາເນື້ອ ທີ່ແທ້ຂ້າພະເຈົ້ານີ້ກໍເປັນຜູ້ນ້ອຍ ມີຊີວິດຕິດເນື່ອງຢູ່ນຳພຣະບາດເປັນເຈົ້າ ແລະຈົງຮັກພັກດີຕໍ່ພຣະບາດເປັນເຈົ້າສເມີ ດັ່ງນັ້ນ ເມື່ອໄດ້ຍິນໄດ້ເຫັນອາການອັນຄວນສົງກາ ຈຶ່ງໄດ້ນຳມາຖແລງໃຫ້ເຈົ້າກູຮູ້ໄວ້, ຄືບັດນີ້ອາຍງົວນັນທະ-ກະ ມັນກຳລັງຫ້າວຫານ ຄຶກຄະນອງຈອງຫອງ ຢາກເປັນຣາຊາໃນປ່ານີ້ ພຣະບາດເປັນເຈົ້າບໍ່ຄວນໄວ້ໃຈ ເພາະ ເພິ່ນວ່າ: "ບຸກຄົນບໍ່ຄວນໄວ້ວາງໃຈໃນແມ່ນ້ຳ, ໃນສັດຕົວມີເຂົາ, ໃນຄົນຜູ້ມີສາດຕາໃນມື, ໃນສັດຕີ ແລະໃນ

ພຣະຣາຊາພຣະມະຫາກະສັດ"

ຣາຊາປິງຄະລະ ກ່າວຕອບວ່າ: "ເອີ! ຈິງແລ! ເພາະວ່າອັດຊາໄສໃຈກໍຂອງສັດທັງຫລາຍນີ້ ຍາກທີ່ຈະຮູ້ໄດ້ແທ້ ສະນັ້ນ ເມື່ອທ່ານໄດ້ຮູ້ເຫັນ-ເຫດການອັນໃດ ທີ່ມັນຜິດສັງເກດ ຈົ່ງມາບອກເຖີດ"

ໝາຈອກ ວະສຸພາຄຍະ ຮັບຄຳແລ້ວກໍໜີໄປ.

ຢູ່ມາວັນນຶ່ງ ມະຫາເມກຕັ້ງເຄົ້າມືດ ບໍ່ນານພຣະພິຣຸນທີກໍຕົກລົງມາ ເປັນທ່າໃຫຍ່ ງົວບັນທະກະໄດ້ດື່ມນ້ຳອັນໃສສົດດີກໍມີໃຈຫ້າວຫານຄຶກຄະນອງ ຈຶ່ງເອົາເຂົາທັງສອງແທງຈອມປອກຊຶດຂາດໄປ ແລ້ວກໍຮ້ອງກ້ອງສນັ່ນ ໂດດເຕັ້ນໄປມາດ້ວຍຄວາມຫ້າວຫືນ.

ໝາຈອກ ວະສຸພາຄຍະ ເຫັນເປັນໂອກາດດີທີ່ຈະໄດ້ຍໍວະເຍົ້າໃຫ້-ຣາຊສີປະຫານງົວບັນທະກະຕາມປະສົງ ຈຶ່ງແລ່ນເຂົ້າໄປບອກຣາຊສີວ່າ:

"ຂ້າແຕ່ພຣະຣາຊາ ເຫດການທັງຫລາຍທີ່ຂ້າພະເຈົ້າໄດ້ເວົ້າມາແຕ່ກ່ອນນັ້ນ ບັດນີ້ໄດ້ເຫັນປະຈັກແລ້ວ ຄື ບັນທະກະ ມັນໂອຫັງຫວັງເປັນຣາຊາ-ແທນພຣະບາດເປັນເຈົ້າໃນປ່ານີ້ ດຽວນີ້ມັນກຳລັງຕັ້ງທ່າຈະເຂົ້າມາຊີງໄຊ ບໍ່ໄດ້ມີຄວາມຢຳແຢງຕໍ່ພຣະຣາຊາເຈົ້າ ສະນັ້ນ ບໍ່ຄວນລະມັນໄວ້ ຂ້າພະເຈົ້າພ້ອມດ້ວຍບໍຣິວານ ຂໍອາສາໄປສັງຫານມັນເສັຽ ເອົາເລືອດເນື້ອຂອງມັນ ມາຖວາຍພຣະບາດເປັນເຈົ້າໃນເວລານີ້"

ຣາຊາປິງຄະລະ ໄດ້ຟັງດັ່ງນັ້ນຈຶ່ງຕອບວ່າ: "ດູລາມູນຕິວະສຸພາຄ-ຍະ ການທີ່ສູເຈົ້າຂັນອາສາຕາງກູນີ້ດີແລ້ວ ແຕ່ເຫັນວ່າ ລຳພັງພວກສູເຈົ້າອາດຈະບໍ່ສູ້ກຳລັງບັນທະກະໄດ້ ມາ! ກູຈະໄປຈັດການກັບມັນເອງ."

ດັ່ງນັ້ນ ເທວະດາຕົນຮັກສາໂລກ ຈຶ່ງກ່າວສໂລກນີ້ວ່າ:-

"ໝາຈອກດີດຖ່ອຍຮ້າຍ　　ມຸນຕີ
ກ່າວອ່າງຈາລຽດສີ　　ໃສ່ຖ້ອຍ
ຖວາຍທອດເນື້ອຣາຊສີ　　ນອບນອບ
ນິຄຣາດຟັງຄວາມນ້ອຍ　　ເນ່ານ້ອມໂກທາ."

ຣາຊາປິງຄະລະ ອອກຈາກຖ້ຳໄປ ໄດ້ເຫັນງົວນັນທະກະ ກົ້ມຫົວຊົນໂພນປວກຢູ່ດັ່ງນັ້ນ ກໍຄຶດວ່າ ນັນທະກະເປັນສັດຕູຫວັງຈະຕໍ່ສູ້ທຳລາຍຕົນ ສົມດັ່ງຄວາມຍົວະເຍົ້າສັບສໍ່ຂອງໝາຈອກແທ້ ຈຶ່ງຕັ້ງທ່າຍໍຂາໜ້າຂຶ້ນ ກາງຫູ ອ້າປາກ ຂຍາຍເລັບ ຍົກຫາງຟາດກະໂພກ ແລ້ວບັນລືສີຫະນາດ ສຽງດັງກ້ອງກັງປນາດໄປທົ່ວປ່າ ຝ່າຍງົວນັນທະກະເຫັນດັ່ງນັ້ນ ກໍເຂົ້າໃຈວ່າຣາຊສີຈະມາທຳລາຍຕົນ ສົມດັ່ງຄຳໝາຈອກອະສຸພາຄຍະບອກໄວ້ທຸກປະ–ການ ຈຶ່ງກົ້ມຫົວລົງຫ່າງໆ ເຂົາໄວ້ຄອຍຊົນ ບໍ່ທັນດົນ ຣາຊສີກໍທະຍານເຂົ້າຄາບທົ້ນ ສົ່ນພຶກພົ້ນທັງສອງຕົວ ບັດນັ້ນງົວນັນທະກະຈຶ່ງຍໍຍົກເຂົາຂວິດເຂົ້າກ້ອງ ຖືກທ້ອງຣາຊສີ ທັງສອງສັດມີຣິດທິແຮງສເມີພາກ ເປັນແຕ່ກັມວິບາກສອງສະຫາຍ ຣາຊສີກັບງົວກໍເລີຍຕາຍໄປພ້ອມກັນ ໃນທີ່ນັ້ນແລ.

ເທວະດາຕົນຮັກສາໂລກ ຈຶ່ງກ່າວສໂລກນີ້ໄວ້ວ່າ:

"ນັນທະກະພົງເຜີດກ້າ　　ໄກວຕລຽງ
ກວັດແກ່ວງເຂົາດາຣຽງ　　ຫລິບໄວ້
ຣາຊສີຄະໂຍງພຽງ　　ຂົບຄາບ
ທອບທັກຄໍຂາດໄດ້　　ທ່າວລົ້ມທັງຢືນ ໆ
ຣາຊສີສິງເຕັ້ນ　　ໂດນໄປ
ຈັບຈ່ອງຄໍຄາງໄລ　　ເກື່ອຍູກວ້າງ

(ຕໍ່ໜ້າ ໙໘)

ບັນທະກະແກວ່ງເຂົາໄກວ   ກອຍໃສ່

ແສວຖືກທ້ອງແທບຂ້າງ   ຂາດລົ້ມເຊຊໍາ."

ນາງຕັນໄຕນະທາເທວີ ເລົ່ານິຍາຍທັງຫລາຍໃຫ້ນ້ອງສາວຂອງຕົນ ຜູ້ຊື່ວ່າ ນາງອິໄລວັນ ຟັງດັ່ງນີ້ແລ້ວ ຈຶ່ງກ່າວເປັນສໂລກອະນຸໂຍກຄໍາສອນ-ວ່າ:

"ເຈົ້າຂຸນມູນນາຍ ທ້າວພຣະຍາຕົນເປັນໃຫຍ່ເປັນປະທານແຫ່ງຄົນທັງຫລາຍ ເພິ່ງພິຈາຣະນາຕາຕອງຕາມຮີດຄອງບູຮານະທັມຄໍາສອນແຫ່ງນັກ-ປາດເຈົ້າທັງຫລາຍ ດ້ວຍອຸບາຍອັນຊອບ ຢ່າປະກອບດ້ວຍໂມຫາ ຟັງຄໍາຜູ້ນີ້ ແຮງລັບລີ້ຜິດຜອນ ຄວນໃຕ່ຕອງດູດ້ວຍປັນຍາໃຫ້ແຈ້ງ ເຫັນແນ່ນແນ້ງແທ້ຈຶ່ງທໍາຕາມ ແລະ ຢ່າຝືປອງກະທໍາໂທດ ນັກກົ້ວໂກດໂກທາ ມີເຕືງສາປນາດ ຈັກເປັນດັ່ງງົວອຸສຸພະຣາດ ແລະ ຣາຊສີ ລະຄອງດີອັນຊອບມາປະກອບດ້ວຍໂມໂຫ ເລີຍເສັງໂຕຕາຍເປົ່າ ເຫດຟັງແຕ່ຄວາມຍົວະເຍົ້າຂອງຄົນພານ" ດັ່ງນີ້ແລ.

ຍາມນັ້ນ ພຣະຍາວິມະລະຈັກກະພັດຕິຣາດ ໄດ້ຍິນຕໍານານບູຮານະ-ທັມຄໍາສອນອັນຂນາດ ແຫ່ງນັກປາດເຈົ້າແຕ່ພາຍຫລັງ ອັນນາງຕັນໄຕເລົ່າມາດັ່ງນີ້ ພຣະຍາກໍໃສ່ໃຈໄວ້ດີນັກ ເພື່ອຈັກຫວັງປະຕິບັດໃຫ້ຊອບແທ້ດີຫລີ, ແລ້ວພຣະຍາຈຶ່ງຕັ້ງນາງຕັນໄຕ ໄວ້ເປັນນາງເທວີຜູ້ເຖົ້າ ນັ່ງໜຸ່ມເໜົ້າທຽມຕົນ ຕັ້ງແຕ່ນັ້ນມາແລ./.

--ສ+++ສຸດບໍຣະບວນ+++--

---+++++++++---

Program Material
given to
The Laos Ministry of Education
by
The Asia Foundation

Printed & Published by Kramol Tiranasar at Tiranasar Press
62 Pun Road, Bangkok, Thailand.
1960